# ບົດລາຍງານ

# ປະຈຳປີ 2022





- ປະຫວັດຄວາມເປັນມາໂດຍຫຍໍ້
- ໂຄງຮ່າງການຈັດຕັ້ງ
- ລາຍງານທາງການເງິນ
- ບັນດາເຄືອຂ່າຍ ແລະ ສາຂາ
- ກິດຈະກຳ ແລະ ງານຕ່າງໆ

+856 21 455 000

www.indochinabank.com

## ສາລະບານ


**ພາກທີ 1. ປະຫວັດຄວາມເປັນມາໂດຍຫຍໍ້** 1

1.1. ຂໍ້ມູນພື້ນຖານຂອງທະນາຄານ 1

1.2. ປະຫວັດຄວາມເປັນມາຂອງທະນາຄານ 1

1.3. ວິໄສທັດຂອງທະນາຄານ 2

ຄຳເຫັນຂອງທ່ານປະທານສະພາບໍລິຫານ 2

ຄຳເຫັນຂອງທ່ານຜູ້ອຳນວຍການໃຫຍ່ 3

1.4. ການອະທິບາຍ ແລະ ການວິເຄາະຂອງຜູ້ບໍລິຫານ 4

ສະພາບລວມຂອງປະເທດ ແລະ ເສດຖະກິດມະຫາພາກ 4

1.5. ສະພາບລວມຂອງການດຳເນີນທຸລະກິດໃນປີ 2022 5

ແຜນການ ແລະ ເປົ້າໝາຍໃນການດຳເນີນທຸລະກິດຂອງ ທະນາຄານອິນໂດຈີນ ໃນປີ 2023 7

ແຜນຍຸດທະສາດ 7

**ພາກທີ 2. ໂຄງຮ່າງການຈັດຕັ້ງ** 7

2.1. ບັນດາຜູ້ຖືຮຸ້ນ 7

2.2. ສະພາບໍລິຫານ 8

2.3. ຄະນະອຳນວຍການ 9

2.4. ຄະນະກຳມະການອື່ນໆ 9

**ພາກທີ3. ບົດລາຍງານທາງການເງິນ** 10

3.1 ປະຫວັດຜູ້ກວດສອບພາຍນອກ 10

3.2. ບົດລາຍງານຖານະການເງິນ 10

**ພາກທີ 4. ບັນດາເຄືອຂ່າຍສາຂາຂອງທະນາຄານ** 35

4.1. ແຜນທີ່ຈຸດທີ່ຕັ້ງຂອງບັນດາເຄືອຂ່າຍສາຂາໃນປະເທດ 35

4.2. ສະຖານທີ່ຕັ້ງຂອງບັນດາເຄືອຂ່າຍສາຂາ 35

**ພາກທີ 5. ກິດຈະກຳ ແລະ ງານຕ່າງໆ** 37

# ພາກທີ 1 ປະຫວັດຄວາມເປັນມາໂດຍຫຍໍ້

## 1.1. ຂໍ້ມູນພື້ນຖານຂອງທະນາຄານ

**ຊື່ທະນາຄານ** : ທະນາຄານ ອິນໂດຈີນ ຈໍາກັດ
**ໃບອະນຸຍາດເລກທີ** : 53/ທຫລ, ລົງວັນທີ 28 ພະຈິກ 2008
**ປະທານສະພາບໍລິຫານ** : ທ່ານ ໂອ ເຊ ຢັງ
**ຜູ້ອໍານວຍການໃຫຍ່** : ທ່ານ ນາງ ຈັນເພັງ ວົງສົມບັດ
**ທີ່ຕັ້ງສໍານັກງານໃຫຍ່** : ຊັ້ນ 1-3 , ອາຄານໂຄລາວ 1, ຖະໜົນ 23 ສິງຫາ, ນະຄອນຫຼວງວຽງຈັນ, ສປປ ລາວ.
**ໂທລະສັບ** : (+856-21) 455 000, ໂທລະສານ: (+856-21) 455 111
**ເວັບໄຊທ໌** : www.indochinabank.com




## 1.2. ປະຫວັດຄວາມເປັນມາຂອງທະນາຄານ

ທະນາຄານອິນໂດຈີນ ແມ່ນທະນາຄານທຸລະກິດພາຍໃນທີ່ລົງທຶນຈາກຕ່າງປະເທດ. ທະນາຄານແມ່ນໄດ້ຮັບອະນຸຍາດຈົດທະບຽນ ເປັນ ທະນາຄານທຸລະກິດນິຕິບຸກຄົນໃນ ສປປ ລາວ ໃນວັນທີ 26 ພຶດສະພາ 2008 ພາຍໃຕ້ໃບອະນຸຍາດລົງທຶນຕ່າງປະເທດ ເລກທີ: 070-08/ຜທ ທີ່ໄດ້ຮັບອະນຸຍາດໂດຍກະຊວງແຜນການ ແລະ ການລົງທຶນ, ພາຍໃຕ້ໃບອະນຸຍາດສ້າງຕັ້ງທະນາຄານເລກທີ: 53/ທຫລ ທີ່ໄດ້ຮັບອະນຸຍາດຈາກ ທະນາຄານແຫ່ງ ສປປ ລາວ ໃນວັນທີ 28 ພະຈິກ 2008.

ທະນາຄານອິນໂດຈີນ ໄດ້ເລີ່ມເປີດບໍລິການຢ່າງເປັນທາງການໃນວັນທີ 6 ກຸມພາ 2009 ທີ່ນະຄອນຫຼວງວຽງຈັນ. ຜູ້ຖືຮຸ້ນຂອງທະນາຄານປະກອບດ້ວຍສະຖາບັນການເງິນ ແລະ ບຸກຄົນທີ່ມີຊື່ສຽງ, ມີພື້ນຖານຖານະການເງິນທີ່ແຂງແກ່ນ ແລະ ໝັ້ນຄົງ.

ທະນາຄານອິນໂດຈີນ ເປັນທະນາຄານທີ່ໃຫ້ບໍລິການທາງດ້ານສິນເຊື່ອລົດແຫ່ງທໍາອິດໃນ ສປປ ລາວ ແລະ ດ້ວຍເຫດນີ້ຈຶ່ງມີຄວາມໄດ້ປຽບໃນການເປັນຜູ້ສະເໜີລາຍທໍາອິດ, ເຊິ່ງສະທ້ອນເຖິງຄວາມສໍາເລັດຈົນມາເຖິງທຸກມື້ນີ້. ດ້ວຍການຂະຫຍາຍຕົວຢ່າງຕໍ່ເນື່ອງຂອງທຸລະກິດ ແລະ ຖານລູກຄ້າ, ທະນາຄານໄດ້ຫັນປ່ຽນຕົນເອງໄປສູ່ທະນາຄານດິຈິຕອນຫຼາຍກວ່າເກົ່າ, ພ້ອມເປີດໂຕຜະລິດຕະພັນທີ່ກ້າວໜ້າຫຼາຍຂຶ້ນ. ມັນໄດ້ສະແດງເຖິງຄວາມມຸ່ງໝັ້ນສໍາລັບການສະເໜີຜະລິດຕະພັນທີ່ມີນະວັດຕະກໍາໃໝ່. ແອັບພລິເຄຊັ່ນ IB Cool ໄດ້ຖືກນໍາສະເໜີອອກສູ່ຕະຫຼາດໃນເດືອນພະຈິກ ປີ 2020. ໃນໄລຍະ 14 ປີຜ່ານມາ, ເພື່ອຄວາມສໍາເລັດທີ່ຍືນຍົງ ແລະ ຄວາມພໍໃຈຂອງລູກຄ້າ, ທະນາຄານອິນໂດຈີນໄດ້ສ້າງຕັ້ງເຄືອຂ່າຍການບໍລິການທີ່ກວ້າງຂວາງຢູ່ບັນດາແຂວງທີ່ສໍາຄັນຈາກພາກເໜືອຫາພາກໃຕ້ຂອງລາວ ຄື: ນະຄອນຫຼວງວຽງຈັນ, ຫຼວງນໍ້າທາ, ອຸດົມໄຊ, ຊຽງຂວາງ, ຫຼວງພະບາງ, ຄໍາມ່ວນ, ບໍລິຄໍາໄຊ, ສະຫວັນນະເຂດ ແລະ ຈໍາປາສັກ.

ຍຸດທະສາດຂອງທະນາຄານຍັງຄົງສຸມໃສ່ການຂະຫຍາຍຕົວແບບຍືນຍົງ, ໂດຍເນັ້ນໜັກໃສ່ການປະສົມປະສານທີ່ເໝາະສົມລະຫວ່າງ ການທະນາຄານເພື່ອທຸລະກິດລາຍຍ່ອຍ ແລະ ການທະນາຄານເພື່ອທຸລະກິດລາຍໃຫຍ່. ທະນາຄານມີຄວາມມຸ່ງໝັ້ນທີ່ຈະຮັກສາການດໍາເນີນທຸລະກິດທີ່ເຂັ້ມແຂງ ແລະ ມີສ່ວນແບ່ງຕະຫຼາດທະນາຄານເອກະຊົນເປັນອັນດັບໜຶ່ງ ເພື່ອຮັກສາຖານະອັນດັບໜຶ່ງໃນອຸດສາຫະກໍາການທະນາຄານຂອງລາວ.

ໃນຖານະເປັນວິສາຫະກິດທີ່ມີຄວາມຮັບຜິດຊອບ, ທະນາຄານອິນໂດຈີນໄດ້ຍຶດໝັ້ນໃນບັນດາຂໍ້ລິເລີ່ມຮັບຜິດຊອບຕໍ່ສັງຄົມທີ່ສຸມໃສ່ການສ້າງປະເທດຊາດທີ່ຈະເລີນຮຸ່ງເຮືອງ, ເສີມຂະຫຍາຍຕະຫຼາດ, ສົ່ງເສີມບ່ອນເຮັດວຽກ, ການອະນຸລັກສິ່ງແວດລ້ອມ. ທະນາຄານສະໜັບສະໜູນຊຸມຊົນໂດຍການເຂົ້າຮ່ວມໂຄງການທີ່ກ່ຽວຂ້ອງກັບການສຶກສາ ແລະ ການດູແລສຸຂະພາບ, ເຊັ່ນດຽວກັນກັບການສະໜັບສະໜູນຜູ້ດ້ອຍໂອກາດ. ທະນາຄານຈະສືບຕໍ່ຊອກຫາວິທີເສີມສ້າງຊີວິດຂອງຄົນອ້ອມຂ້າງໂດຍການເປັນສ່ວນໜຶ່ງຂອງຊຸມຊົນ.

## *1.3. ວິໄສທັດຂອງທະນາຄານ*

ທະນາຄານອິນໂດຈີນ ພ້ອມກ້າວໄປຂ້າງໜ້າເພື່ອສ້າງຮາກຖານທີ່ແຂງແກ່ນໃນປະເທດ ດ້ວຍການໃຊ້ປະໂຫຍດຈາກການຂະຫຍາຍຕົວຂອງເສດຖະກິດທີ່ໝັ້ນຄົງ ຂອງ ສປປ ລາວ. ວິໄສທັດຂອງທະນາຄານຄື:
"ຈະກາຍເປັນທະນາຄານເອກະຊົນອັນດັບໜຶ່ງໃນ ສປປ ລາວ, ທາງດ້ານການຂະຫຍາຍຕົວຂອງທຸລະກິດ, ການບໍລິການລູກຄ້າ, ຜະລິດຕະພັນ, ຜົນກຳໄລ ແລະ ເຄື່ອງໝາຍການຄ້າ ແລະ ສືບຕໍ່ເສີມສ້າງການບໍລິການເພື່ອຕອບສະໜອງລູກຄ້າໃຫ້ມີຄວາມເພິ່ງພໍໃຈສູງສຸດ"

# ຄຳເຫັນຂອງທ່ານປະທານສະພາບໍລິຫານ

ຂ້າພະເຈົ້າມີຄວາມຍິນດີເປັນຢ່າງຍິ່ງທີ່ຈະນຳສະເໜີບົດລາຍງານຖານະການເງິນປະຈຳປີຂອງທະນາຄານ ສຳລັບປີ 2022. ເຖິງແມ່ນວ່າຈະປະສົບກັບສະພາບແວດລ້ອມທາງທຸລະກິດທີ່ທ້າທາຍ, ປີນີ້ໄດ້ກາຍເປັນອີກໜຶ່ງປີທີ່ໄດ້ຮັບຄວາມປະສົບຜົນສຳເລັດແກ່ທະນາຄານ ແລະ ຂ້າພະເຈົ້າມີຄວາມພາກພູມໃຈ ແລະ ສາມາດກ່າວໄດ້ວ່າພວກເຮົາສາມາດສືບຕໍ່ສ້າງຜົນໄດ້ຮັບທີ່ເຂັ້ມແຂງ ແລະ ສ້າງມູນຄ່າໃຫ້ແກ່ຜູ້ມີສ່ວນຮ່ວມທຸກພາກສ່ວນ.

ເມື່ອພິຈາລະນາເຖິງປີທີ່ຜ່ານມາ, ມັນເປັນທີ່ຊັດເຈນວ່າໂລກໄດ້ປະເຊີນກັບສິ່ງທ້າທາຍທີ່ບໍ່ເຄີຍມີມາກ່ອນ. ການລະບາດຂອງພະຍາດໂຄວິດ-19 ໄດ້ສ້າງສະພາບແວດລ້ອມທີ່ຫຍຸ້ງຍາກໃຫ້ແກ່ບຸກຄົນ ແລະ ທຸລະກິດ, ສົ່ງຜົນກະທົບຕໍ່ຕະຫຼາດ ແລະ ເສດຖະກິດທົ່ວໂລກ. ວິກິດການເງິນເຟີ້ ແລະ ຕ່ອງໂສ້ການສະໜອງເປັນສິ່ງທ້າທາຍທີ່ສຳຄັນ ທີ່ສົ່ງຜົນກະທົບຕໍ່ການຟື້ນຟູເສດຖະກິດຂອງໂລກ.

ເຖິງແມ່ນວ່າຈະປະສົບກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ ລວມທັງອັດຕາເງິນເຟີ້ທີ່ເພີ່ມຂຶ້ນ ແລະ ການຜັນຜວນຢ່າງຮຸນແຮງຂອງອັດຕາແລກປ່ຽນໃນປີ 2022, ຈາກການຜັນປ່ຽນທີ່ກ້າວເຂົ້າສູ່ໄລຍະສຸດທ້າຍຂອງໂລກລະບາດ ແລະ ການເປີດໃຊ້ການບໍລິການທາງລົດໄຟລາວ-ຈີນ ອາດຈະເປັນປະໂຫຍດຕໍ່ການທ່ອງທ່ຽວ ແລະ ຂະແໜງການບໍລິການ. ຍ້ອນການນຳພາຂອງພັກ ແລະ ຄວາມເຂັ້ມແຂງຂອງລັດຖະບານ ຕະຫຼອດເຖິງຄວາມສາມັກຄີຂອງປວງຊົນລາວທັງຊາດ ຈຶ່ງສາມາດຜ່ານຜ່າອຸປະສັກໄດ້ຈົນສຳເລັດ.

ທຸລະກິດສາມາດຈະເລີນເຕີບໂຕໃນສະພາບແວດລ້ອມໃນປະຈຸບັນໂດຍປະເມີນຄວາມຮຽກຮ້ອງຕ້ອງການໃໝ່ໆ, ປັບປ່ຽນຍຸດທະສາດທາງດ້ານທຸລະກິດ, ການຫັນເປັນດິຈິຕອນ, ສຸມໃສ່ການປະດິດສ້າງນະວັດຕະກຳໃໝ່ ແລະ ການຮ່ວມມືກັບຄູ່ຮ່ວມທຸລະກິດອື່ນ. ໃນປີ 2022, ພວກເຮົາໄດ້ສ້າງແຜນຍຸດທະສາດໃໝ່ເພື່ອແນໃສ່ການພັດທະນາ ແລະ ຂະຫຍາຍຕົວຂອງທຸລະກິດແບບຍືນຍົງ. ພວກເຮົາເຊື່ອວ່າໃນການສ້າງອັດຕາການເຕີບໂຕໃຫ້ໄດ້ໃນລະດັບນີ້ແມ່ນສາມາດບັນລຸໄດ້ ໂດຍການສຸມໃສ່ລູກຄ້າເປັນໃຈກາງ, ການຂະຫຍາຍດິຈິຕອນ, ການຂະຫຍາຍຖານລູກຄ້າ ແລະ ເສີມສ້າງຄວາມສຳພັນທີ່ດີກັບລູກຄ້າ.

ທະນາຄານອິນໂດຈີນ ຍັງຄົງສຸມໃສ່ການສະໜອງການບໍລິການທີ່ດີທີ່ສຸດໃຫ້ແກ່ລູກຄ້າ. ສືບຕໍ່ລົງທຶນໃນພະນັກງານ, ໂຄງສ້າງພື້ນຖານ ແລະ ເຕັກໂນໂລຊີຢ່າງຕໍ່ເນື່ອງ, ເຊິ່ງສາມາດມອບການບໍລິການທີ່ດີຂຶ້ນໃຫ້ແກ່ລູກຄ້າ. ຄວາມມຸ່ງໝັ້ນໃນການສ້າງສັນນະວັດຕະກຳ, ຄຽງຄູ່ກັບຄວາມເຂົ້າໃຈຢ່າງເລິກເຊິ່ງ ກ່ຽວກັບຄວາມຕ້ອງການຂອງລູກຄ້າ, ໄດ້ຊ່ວຍໃຫ້ພວກເຮົາຮັກສາຕຳແໜ່ງໃນການເປັນທະນາຄານທີ່ຢູ່ອັນດັບຕົ້ນໆໃນຂະແໜງອຸດສາຫະກຳທະນາຄານ.

ທະນາຄານອິນໂດຈີນ ຍັງຄົງມຸ່ງໝັ້ນຕໍ່ຄວາມຮັບຜິດຊອບທາງສັງຄົມ, ຊ່ວຍເຫຼືອສະໜັບສະໜູນຊຸມຊົນໂດຍຜ່ານການຮ່ວມມື ແລະ ໂຄງການຕ່າງໆ. ພະນັກງານກໍ່ໄດ້ສະແດງໃຫ້ເຫັນເຖິງການອຸທິດຕົນ ແລະ ຄວາມເປັນມືອາຊີບ ໂດຍການປັບຕົວເຂົ້າກັບການປ່ຽນແປງໃນສະພາບແວດລ້ອມການເຮັດວຽກ ແລະ ຮັບປະກັນສືບຕໍ່ການບໍລິການທີ່ດີໃຫ້ແກ່ລູກຄ້າ. ຂ້າພະເຈົ້າ ຕ້ອງຂໍຂອບໃຈລູກຄ້າ, ຄອບຄົວທະນາຄານອິນໂດຈີນ, ຜູ້ຖືຮຸ້ນ ແລະ ພາກສ່ວນກ່ຽວຂ້ອງອື່ນໆສຳລັບການສະໜັບສະໜູນຢ່າງຕໍ່ເນື່ອງ ແລະ ອຸທິດຕົນຕໍ່ທະນາຄານຂອງພວກເຮົາ. ຫວັງວ່າພວກເຮົາທຸກຄົນຈະສືບຕໍ່ຮ່ວມມືກັນເພື່ອບັນລຸເປົ້າໝາຍ ແລະ ສ້າງຜົນສຳເລັດອັນຍິ່ງໃຫຍ່ໄປພ້ອມໆກັນ.

ສຸດທ້າຍນີ້, ຂ້າພະເຈົ້າຂໍສະແດງຄວາມຮູ້ບຸນຄຸນຢ່າງສູງມາຍັງລູກຄ້າທີ່ຮັກແພງ, ພະນັກງານທະນາຄານອິນໂດຈີນ, ການນຳທຸກຂັ້ນ ແລະ ປະຊາຊົນລາວບັນດາເຜົ່າ ຈົ່ງມີສຸຂະພາບເຂັ້ມແຂງ ແລະ ມີຄວາມຜາສຸກໃນຂຸມປີຕໍ່ໜ້າ. ທະນາຄານອິນໂດຈີນຈະສືບຕໍ່ອຸທິດຕົນໃນພາລະກິດ ການສະໜອງຄວາມເປັນເລີດດ້ານການບໍລິການທີ່ທັນສະໄໝ, ມອບຄຸນຄ່າທີ່ດີທີ່ສຸດໃຫ້ແກ່ລູກຄ້າ ແລະ ຮັກສາຜົນປະໂຫຍດຂອງບັນດາຜູ້ຖືຮຸ້ນໃຫ້ຮັບຜົນດີທີ່ສຸດ.

ໂອ ເຊ ຍັງ
ປະທານສະພາບໍລິຫານ



# ຄຳເຫັນຂອງທ່ານຜູ້ອຳນວຍການໃຫຍ່

ເຖິງບັນດາຄູ່ຮ່ວມທຸລະກິດທີ່ຮັກແພງ ແລະ ລູກຄ້າທີ່ເຄົາລົບ, ຂ້າພະເຈົ້າຮູ້ສຶກເປັນກຽດຢ່າງຍິ່ງໃນຖານະຜູ້ອຳນວຍການທະນາຄານອິນໂດຈີນ ທີ່ໄດ້ສະແດງຄວາມຮູ້ບຸນຄຸນ ແລະ ມີຄຳເຫັນຢູ່ໃນບົດລາຍງານປະຈຳປີ 2022 ສະບັບນີ້.

ຕະຫຼອດໄລຍະເວລາ 14 ປີຂອງການເດີນທາງຂອງທະນາຄານອິນໂດຈີນ, ພວກເຮົາມີຄວາມມຸ່ງໝັ້ນຕັ້ງໃຈ ແລະ ຍຶດໝັ້ນເອົາລູກຄ້າເປັນຫົວໃຈຫຼັກໃນການດຳເນີນທຸລະກິດ. ພວກເຮົາປະຕິບັດຢ່າງເຂັ້ມງວດເພື່ອຮັບປະກັນວ່າຜະລິດຕະພັນຂອງທະນາຄານຕອບສະໜອງຕາມຄວາມຕ້ອງການຂອງລູກຄ້າ. ພວກເຮົາບໍ່ເຄີຍລັງເລທີ່ຈະພັດທະນາ ແລະ ກ້າວໄປຂ້າງໜ້າເພື່ອສະໜອງການບໍລິການໃຫ້ລູກຄ້າປັດຈຸບັນ ແລະ ກຸ່ມລູກຄ້າເປົ້າໝາຍ. ເຊັ່ນດຽວກັນ, ພວກເຮົາຍັງເຊື່ອໝັ້ນຢ່າງຍິ່ງໃນການສ້າງຄວາມສຳພັນໃນໄລຍະຍາວກັບລູກຄ້າຂອງພວກເຮົາສະເໝີ.

ໃນປີ 2022, ເປັນປີທີ່ເຕັມໄປດ້ວຍຊ່ວງເວລາທີ່ຄວນຈົດຈຳ, ຄວາມອົດທົນ ແລະ ການເຮັດວຽກໜັກ ເຮັດໃຫ້ມີໂຊສະເໝີເໜືອສິ່ງທ້າທາຍຫຼາຍຢ່າງທີ່ໄດ້ປະເຊີນມາ, ເຖິງວ່າຈະມີການປ່ຽນແປງ, ຄວາມບໍ່ແນ່ນອນທາງເສດຖະກິດໃນທົ່ວພູມີພາກທັງພາຍໃນ ແລະ ຕ່າງປະເທດ, ການລະບາດພະຍາດໂຄວິດ-19 ທີ່ເກີດຂຶ້ນຊ້ຳແລ້ວຊ້ຳອີກ ແລະ ຄວາມຜັນຜວນທີ່ຍືດເຍື້ອຢູ່ໃນຕະຫຼາດການເງິນໂລກ. ນອກຈາກນີ້, ອັດຕາເງິນເຟີ້ທີ່ສູງຂຶ້ນໄດ້ເພີ່ມຂຶ້ນໃນຫຼາຍປະເທດໃນໂລກຍ້ອນຫຼາຍປັດໄຈເຮັດໃຫ້ສະບຽງອາຫານ, ພະລັງງານ ແລະ ສິ່ງຈຳເປັນອື່ນໆມີລາຄາແພງຂຶ້ນ. ດັ່ງນັ້ນ, ທະນາຄານອິນໂດຈີນ ກໍ່ໄດ້ຕິດຕາມສະຖານະການຢ່າງໃກ້ຊິດ ແລະ ດຳເນີນການຕ່າງໆເພື່ອ ຕອບສະໜອງຕໍ່ວິກິດການເຫຼົ່ານີ້, ໂດຍຜ່ານແຜນຍຸດທະສາດທີ່ມີຄວາມຍືດຢຸ່ນ, ດຳເນີນການຈັດແຄມເປນ ແລະ ການສົ່ງເສີມການຂາຍຢ່າງມີປະສິດທິພາບ. ນອກຈາກນັ້ນ, ອີງຕາມຜົນປະກອບການຂອງປີ 2022, ໄດ້ສະແດງໃຫ້ເຫັນວ່າທະນາຄານ ມີການບັນລຸເງິນຝາກເພີ່ມຂຶ້ນກວ່າ 63% ແລະ ສິນເຊື່ອເພີ່ມຂຶ້ນກວ່າ 62% ທຽບກັບປີທີ່ຜ່ານມາ.

ໃນປີ 2023, ໃນຂະນະທີ່ພວກເຮົາກຳລັງປະເຊີນກັບສະພາບທີ່ບໍ່ແນ່ນອນທາງດ້ານເສດຖະກິດໃນເວລານີ້, ພວກເຮົາຍັງຄົງເບິ່ງເຫັນຄວາມເປັນໄປໄດ້ ພ້ອມກັບໂອກາດ ທີ່ລໍຖ້າຢູ່ຂ້າງໜ້າ ແລະ ມຸ່ງໝັ້ນທີ່ຈະສືບຕໍ່ມອບການບໍລິການທີ່ດີໃຫ້ແກ່ລູກຄ້າສະເໝີ. ອີງຕາມການອອກນະໂຍບາຍ ແລະ ຄວາມພະຍາຍາມໃນການແກ້ໄຂວິກິດເສດຖະກິດຂອງລັດຖະບານ, ຄາດຄະເນວ່າເສດຖະກິດຈະມີແນວໂນ້ມທີ່ດີຂຶ້ນ ແລະ ເປັນສ່ວນສຳຄັນທີ່ຈະເຮັດໃຫ້ພວກເຮົາສາມາດຜ່ານຜ່າວິກິດຫຍຸ້ງຍາກຄັ້ງນີ້ໄປໄດ້. ດັ່ງນັ້ນ, ພວກເຮົາໄດ້ຕັ້ງໃຈສືບຕໍ່ປັບປຸງ ແລະ ວາງແຜນການຢ່າງຮັດກຸມເພື່ອໃຫ້ຍາດມາໄດ້ ໃນດ້ານສ່ວນແບ່ງຕະຫຼາດທີ່ເພີ່ມຂຶ້ນ, ປະດິດສ້າງຜະລິດຕະພັນໃໝ່ ແລະ ຍົກລະດັບການເຄື່ອນໄຫວວຽກງານທາງການຕະຫຼາດເພື່ອຊຸກຍູ້ການເຕີບໂຕໃຫ້ມີຄວາມຍືນຍົງ ແລະ ບັນລຸຜົນປະກອບການທີ່ດີເລີດ.

ໃນເວລານີ້, ທະນາຄານອິນໂດຈີນ ໄດ້ເນັ້ນໜັກເຖິງຄວາມສຳຄັນຂອງເຕັກໂນໂລຊີເພື່ອການນຳໃຊ້ໃນຊີວິດປະຈຳວັນຂອງລູກຄ້າ ແລະ ໄດ້ລົງທຶນຢ່າງຫຼວງຫຼາຍໃນດ້ານນີ້. ເຖິງແມ່ນວ່າເຕັກໂນໂລຊີຈະເປັນສິ່ງອຳນວຍຄວາມສະດວກຫຼັກໆໃຫ້ແກ່ພວກເຮົາກໍ່ຕາມ, ມັນຕ້ອງມາພ້ອມກັບຄວາມປອດໄພທີ່ສູງເຊັ່ນດຽວກັນ. ດັ່ງນັ້ນ, ພວກເຮົາຈຶ່ງໄດ້ເນັ້ນໜັກເປັນຢ່າງຍິ່ງເພື່ອຮັບປະກັນວ່າ ຄວາມສ່ຽງຂອງລູກຄ້າຈະມີໜ້ອຍທີ່ສຸດໃນເວລາທີ່ນຳໃຊ້ການບໍລິການຂອງພວກເຮົາ. ໃນຍຸກສະໄໝໃໝ່ຂອງທະນາຄານ, ການດຳເນີນງານແມ່ນຈຳເປັນຕ້ອງໄດ້ນຳໃຊ້ເຕັກໂນໂລຊີຢ່າງຫຼີກລ້ຽງບໍ່ໄດ້. ນອກຈາກນັ້ນ ພວກເຮົາຍັງເຮັດວຽກຢ່າງບໍ່ອິດເມື່ອຍເພື່ອຮັບປະກັນວ່າຄວາມຕ້ອງການດ້ານການເງິນຂອງລູກຄ້າໄດ້ຮັບການເບິ່ງແຍງຢ່າງເປັນມືອາຊີບ ແລະ ມີປະສິດທິພາບ. ບຸກຄະລາກອນທີ່ໄດ້ຮັບການຝຶກອົບຮົມພິເສດຈະບໍລິການລູກຄ້າດ້ວຍຄວາມສຸພາບ ແລະ ເປັນມືອາຊີບເຊັ່ນກັນ.

ຕາງໜ້າ ທະນາຄານອິນໂດຈີນ ແລະ ສະມາຊິກຄອບຄົວ ທະນາຄານອິນໂດຈີນ ທັງໝົດ, ຂ້າພະເຈົ້າ ຂໍສະແດງຄວາມຂອບໃຈຢ່າງສຸດຊຶ້ງມາຍັງລູກຄ້າ, ຜູ້ຖືຫຸ້ນ ແລະ ທຸກໆພາກສ່ວນທີ່ໃຫ້ຄວາມໄວ້ວາງໃຈ ແລະ ການສະໜັບສະໜູນອັນໃຫຍ່ຫຼວງ. ນອກຈາກນັ້ນ, ໃນຫຼັກຈັນຍາບັນຂອງທະນາຄານ, ພວກເຮົາຈະຍຶດໝັ້ນປະຕິບັດຕາມມາດຕະຖານສູງສຸດໃນການດຳເນີນທຸລະກິດ. ພວກເຮົາເຊື່ອໝັ້ນຢ່າງຍິ່ງວ່າເມື່ອສືບຕໍ່ເຮັດສິ່ງທີ່ຖືກຕ້ອງສຳລັບລູກຄ້າແລ້ວ, ບໍ່ມີສິ່ງໃດທີ່ຈະມາກຳນົດຄວາມສຳເລັດຂອງພວກເຮົາໄດ້.



ຈັນເພັງ ວົງສົມບັດ
ຜູ້ອຳນວຍການໃຫຍ່



## 1.4. ການອະທິບາຍ ແລະ ການວິເຄາະຂອງຜູ້ບໍລິຫານ

### ສະພາບລວມຂອງປະເທດ ແລະ ເສດຖະກິດມະຫາພາກ

### ສະພາບລວມເສດຖະກິດໂລກ

ການເຄື່ອນໄຫວທາງດ້ານເສດຖະກິດໂລກກຳລັງປະເຊີນກັບການຊະລໍຕົວລົງຢ່າງກວ້າງຂວາງ ແລະ ຮຸນແຮງກວ່າທີ່ຄາດຄະເນໄວ້, ອັດຕາເງິນເຟີ້ເພີ່ມຂຶ້ນສູງກວ່າທີ່ເຄີຍມີມາໃນຫຼາຍທົດສະວັດ. ວິກິດການຄ່າຄອງຊີບ, ສະພາບການເງິນທີ່ເຄັ່ງຕຶງຢູ່ໃນພາກພື້ນ ແລະ ການແຜ່ລະບາດຂອງພະຍາດໂຄວິດ-19 ທີ່ຍັງຄົງຄ້າງ ລ້ວນແຕ່ມີຄວາມໜັກໜ່ວງຕໍ່ການຄາດຄະເນ. ການເຕີບໂຕຂອງເສດຖະກິດໂລກຫຼຸດລົງຈາກ 6% ໃນປີ 2021 ມາເປັນ 3.2% ໃນປີ 2022 ແລະ ຄາດວ່າຈະຢູ່ໃນລະດັບ 2.7% ໃນປີ 2023. ນີ້ແມ່ນສະຖິຕິການເຕີບໂຕທີ່ອ່ອນແອທີ່ສຸດນັບຕັ້ງແຕ່ປີ 2001 ຍົກເວັ້ນວິກິດການທາງດ້ານການເງິນຂອງໂລກ ແລະ ໄລຍະທີ່ຮຸນແຮງຂອງການລະບາດຂອງພະຍາດໂຄວິດ-19. ອັດຕາເງິນເຟີ້ໂລກເພີ່ມຂຶ້ນຈາກ 4.7% ໃນປີ 2021 ມາເປັນ 8.8% ໃນປີ 2022 ແຕ່ຫຼັງຈາກນັ້ນຄາດວ່າຈະຫຼຸດລົງເປັນ 6.5% ໃນປີ 2023 ແລະ 4.1% ໃນປີ 2024. ນະໂຍບາຍການເງິນຄວນສືບຕໍ່ຮັກສາສະຖຽນລະພາບຂອງລາຄາ ແລະ ນະໂຍບາຍງົບປະມານຄວນແນໃສ່ການຫຼຸດຜ່ອນຄ່າຄອງຊີບ ໃນຂະນະທີ່ຕ້ອງຄວບຄຸມສະຖານະການຢ່າງເຂັ້ມງວດເພື່ອໃຫ້ສອດຄ່ອງກັບນະໂຍບາຍການເງິນ. ການປະຕິຮູບໂຄງສ້າງສາມາດສະໜັບສະໜູນການຕໍ່ສູ້ຕ້ານໄພເງິນເຟີ້ ດ້ວຍການປັບປຸງຄຸນະພາບຜົນຜະລິດ ແລະ ຫລຸດຜ່ອນຂໍ້ຈຳກັດດ້ານການສະໜອງ, ໃນຂະນະທີ່ການຮ່ວມມືຫຼາຍຝ່າຍແມ່ນມີຄວາມຈຳເປັນເພື່ອເລັ່ງລັດການຫັນປ່ຽນໄປສູ່ການນຳໃຊ້ພະລັງງານສີຂຽວ ແລະ ປ້ອງກັນບໍ່ໃຫ້ມີການແບ່ງແຍກ.

### ສະພາບລວມເສດຖະກິດ ສປປ ລາວ

ເສດຖະກິດຂອງ ສປປ ລາວ ປະເຊີນກັບສິ່ງທ້າທາຍທີ່ເພີ່ມຂຶ້ນຈາກການເສື່ອມຄ່າຂອງສະກຸນເງິນກີບ ແລະ ອັດຕາເງິນເຟີ້ສູງ, ທ່າມກາງສະພາບເສດຖະກິດໂລກທີ່ຊຸດໂຊມລົງ. ພາຍຫຼັງມີສັນຍານຟື້ນຟູເສດຖະກິດໃນຕົ້ນປີ 2022, ສະພາບແວດລ້ອມພາຍໃນ ແລະ ຕ່າງປະເທດຊຸດໂຊມລົງຢ່າງຫຼວງຫຼາຍ. ເງິນກີບໄດ້ອ່ອນຄ່າ 68% ຂອງມູນຄ່າທຽບກັບເງິນໂດລາສະຫະລັດໃນລະຫວ່າງປີຈົນເຖິງເດືອນທັນວາ, ເຊິ່ງເຮັດໃຫ້ການຟື້ນຕົວຂອງອັດຕາເງິນເຟີ້, ການບໍລິໂພກ ແລະ ການລົງທຶນຂອງເອກະຊົນຫຼຸດລົງ. ທະນາຄານໂລກໄດ້ຫຼຸດການຄາດຄະເນການເຕີບໂຕຂອງເສດຖະກິດໃນປີ 2022 ລົງເປັນ 2,5% ເຊິ່ງຫຼຸດລົງຈາກການຄາດຄະເນກ່ອນໜ້ານີ້ 3,8%.

ທາງເລືອກດ້ານງົບປະມານເພື່ອໜູນຊ່ວຍເສດຖະກິດ ແລະ ຊ່ວຍເຫຼືອຜູ້ມີລາຍຮັບຕໍ່າ, ຜູ້ສູງອາຍຸ ຫຼື ເດັກນ້ອຍຍັງຈຳກັດ. ເຖິງແມ່ນວ່າລາຍຮັບພາຍໃນປະເທດໄດ້ຟື້ນຕົວເທື່ອລະກ້າວແຕ່ຍັງຕໍ່າກວ່າລະດັບກ່ອນການແຜ່ລະບາດ. ພັນທະດ້ານການຊຳລະໜີ້ສິນສູງ, ໄດ້ສົ່ງຜົນເຮັດໃຫ້ມີການຈຳກັດການໃຊ້ຈ່າຍໃນດ້ານສາທາລະນະສຸກ, ການສຶກສາ ແລະ ການຊ່ວຍເຫຼືອສັງຄົມ. ໃນກໍລະນີທີ່ບໍ່ມີການເລື່ອນເວລາຊຳລະໜີ້, ລາຍຈ່າຍທັງໝົດ ແລະ ການຂາດດຸນງົບປະມານຈະສູງຂຶ້ນປະມານ 1% ຂອງ GDP.

ໂດຍລວມແລ້ວ, ເສດຖະກິດມີແນວໂນ້ມອ່ອນແອໃນປີ 2022 ເນື່ອງຈາກມີຫຼາຍປັດໄຈໄດ້ສ້າງຄວາມກົດດັນຕໍ່ການດຳເນີນກິດຈະກຳທາງເສດຖະກິດ. ການປະສົບບັນຫາໄພນ້ຳຖ້ວມ ແລະ ການເຕີບໂຕຂອງການສົ່ງອອກປະຈຳປີທີ່ຫຼຸດລົງຢ່າງຫຼວງຫຼາຍໃນ ໄຕມາດ1-ໄຕມາດ3 ເປັນປັດໄຈຫຼັກໃນການຫຼຸດການຜະລິດ. ຍິ່ງໄປກວ່ານັ້ນ, ການເພີ່ມຂຶ້ນຂອງລາຄາສິນຄ້າ ແລະ ການອ່ອນຄ່າຂອງອັດຕາແລກປ່ຽນຢ່າງໄວວາ ເຮັດໃຫ້ເກີດວິກິດການຄ່າຄອງຊີບທີ່ສູງຂຶ້ນ, ອັດຕາເງິນເຟີ້ໃນປີທີ່ຜ່ານມາຢູ່ທີ່ 39.3%. ນອກຈາກນັ້ນ, ການອອກນະໂຍບາຍຢ່າງຮັດກຸມຂອງທະນາຄານກາງໃນໄຕມາດທີ 4 ໄດ້ສ້າງຄວາມກົດດັນຕໍ່ການຂະຫຍາຍຕົວຂອງເສດຖະກິດຕື່ມອີກ. ເຖິງຢ່າງໃດກໍ່ຕາມ, ເສດຖະກິດຈະໄດ້ຮັບການສະໜັບສະໜູນຈາກການຜ່ອນຜັນດ້ານຂໍ້ຈຳກັດຂອງພະຍາດໂຄວິດ-19, ການສົ່ງອອກໄຟຟ້າເພີ່ມຂຶ້ນ, ການທ່ອງທ່ຽວໄດ້ຮັບການຟື້ນຟູ ແລະ ການເພີ່ມຂຶ້ນຂອງການຂົນສົ່ງສິນຄ້າ ແລະ ຜູ້ໂດຍສານຜ່ານທາງລົດໄຟລາວ-ຈີນ.

### ຂະແໜງທະນາຄານ

ຂະແໜງການທະນາຄານຈະສະເໜີພາບລວມ, ສະພາບປະຈຸບັນຂອງອຸດສາຫະກຳການທະນາຄານ ແລະ ສະຖານະຂອງພວກເຮົາ. ການປຶກສາຫາລືກ່ຽວກັບສິ່ງທ້າທາຍ ແລະ ໂອກາດທີ່ໄດ້ປະເຊີນໃນຊ່ວງປີນີ້, ລວມທັງການປ່ຽນແປງລະບຽບການ, ການປ່ຽນແປງທາງເສດຖະກິດ ແລະ ຄວາມກ້າວໜ້າດ້ານເຕັກໂນໂລຊີ. ພວກເຮົາໄດ້ປັບປຸງຂີດຄວາມສາມາດໃນການດຳເນີນງານເພື່ອແຂ່ງຂັນໃນຕະຫຼາດເຊັ່ນ: ການຂະຫຍາຍຄວາມສາມາດທາງດ້ານດິຈິຕອນ, ການປັບປຸງການບໍລິການລູກຄ້າ, ການພັດທະນາຜະລິດຕະພັນ ແລະ ການບໍລິການໃໝ່ໆ. ໂດຍການຕິດຕາມແນວໂນ້ມອຸດສາຫະກຳຢ່າງໃກ້ຊິດ ແລະ ການປັບຕົວເຂົ້າກັບການປ່ຽນແປງຂອງສະພາບຕະຫຼາດ, ພວກເຮົາຍັງຄົງມຸ່ງໝັ້ນທີ່ຈະບໍລິການລູກຄ້າດ້ວຍນະວັດຕະກຳ ແລະ ນຳສະເໜີການແກ້ໄຂບັນຫາທາງການເງິນທີ່ເຊື່ອຖືໄດ້.

ໃນໄລຍະຊ່ວງປີຜ່ານມາ, ພວກເຮົາໄດ້ປະຕິບັດການໂຄສະນາດ້ານການຕະຫຼາດຕ່າງໆ, ລວມມີການໂຄສະນາທາງດ້ານດິຈິຕອນ ແລະ ກິດຈະກຳສົ່ງເສີມການຂາຍ ເພື່ອເຂົ້າເຖິງລູກຄ້າເປົ້າໝາຍ. ພວກເຮົາຍັງໄດ້ປັບປ່ຽນການຄຸ້ມຄອງໃໝ່ເພື່ອຮັກສາຄວາມສຳພັນກັບລູກຄ້າ ແລະ ສ້າງຄວາມເຂົ້າໃຈຕໍ່ຄວາມຕ້ອງການຂອງລູກຄ້າໃຫ້ດີຂຶ້ນ ເຮັດໃຫ້ສາມາດຈັດການແກ້ໄຂບັນຫາສ່ວນບຸກຄົນ ແລະ ກົງປະເດັນໄດ້. ຄວາມພະຍາຍາມໃນການຕະຫຼາດຂອງພວກເຮົາໄດ້ເຮັດໃຫ້ຊື່ສຽງຂອງທະນາຄານເປັນທີ່ຮູ້ຈັກຫຼາຍຂຶ້ນ, ເພີ່ມການມີສ່ວນຮ່ວມກັບລູກຄ້າ ແລະ ທ້າຍທີ່ສຸດຄືໄດ້ສ້າງການຂະຫຍາຍຕົວທີ່ສຳຄັນໃຫ້ແກ່ທຸລະກິດ.

## 1.5. ສະພາບລວມຂອງການດຳເນີນທຸລະກິດໃນປີ 2022

ໃນປີນີ້, ທະນາຄານ ອິນໂດຈີນ ໄດ້ບັນລຸຜົນໄດ້ຮັບທາງດ້ານການເງິນທີ່ເຂັ້ມແຂງ. ຊັບສິນ ແລະ ເງິນຝາກມີການເພີ່ມຂຶ້ນຢ່າງຕໍ່ເນື່ອງ, ໃນຂະນະດຽວກັນ, ສິນເຊື່ອກໍ່ໄດ້ຮັບການເຕີບໂຕ ແລະ ຍັງໄດ້ຮັກສາລະດັບຄັງສຳຮອງໄດ້ດີ. ພວກເຮົາພູມໃຈທີ່ໄດ້ສົ່ງຜົນຕອບແທນແບບຕໍ່ເນື່ອງໃຫ້ແກ່ຜູ້ຖືຮຸ້ນ, ໃນຂະນະດຽວກັນກໍ່ຍັງໃຫ້ບໍລິການພິເສດໃຫ້ກັບລູກຄ້າອີກດ້ວຍ.

ທະນາຄານ ອິນໂດຈີນ ໄດ້ສືບຕໍ່ສະແດງໃຫ້ເຫັນເຖິງຄວາມເຂັ້ມແຂງ ແລະ ຄວາມຢືດຢຸ່ນໃນສະພາບແວດລ້ອມເສດຖະກິດທີ່ທ້າທາຍ. ພວກເຮົາໄດ້ຮັກສາຕຳແໜ່ງທຶນທີ່ເຂັ້ມແຂງ ແລະ ຊັບສິນຍັງຄົງຢູ່ໃນລະດັບສູງ. ສືບຕໍ່ລົງທຶນໃນເຕັກໂນໂລຊີ ແລະ ຄວາມສາມາດດ້ານດິຈິຕອນ ເຊິ່ງສາມາດນຳສະເໜີນະວັດຕະກຳ ແລະ ປະສົບການຂອງລູກຄ້າໄດ້ດີ.

ທະນາຄານ ໄດ້ສຸມໃສ່ການສ້າງຄວາມສຳພັນໃນໄລຍະຍາວກັບລູກຄ້າ. ຂະຫຍາຍການສະເໜີຜະລິດຕະພັນ ເພື່ອຕອບສະໜອງຄວາມຕ້ອງການຂອງລູກຄ້າ, ລົງທຶນໃນເຄືອຂ່າຍສາຂາ ແລະ ຊ່ອງທາງດິຈິຕອນ ເພື່ອມອບປະສົບການທະນາຄານທີ່ສະດວກສະບາຍ ແລະ ເປັນສ່ວນຕົວ. ພວກເຮົາພູມໃຈທີ່ໄດ້ບັນລຸຄະແນນການປະເມີນຄວາມເພິ່ງພໍໃຈ, ໄດ້ຮັບຄວາມໄວ້ວາງໃຈ ແລະ ຄວາມສັດຊື່ຈາກລູກຄ້າສະເໝີມາ.

### ເງິນຝາກ







ໃນປີທີ່ຜ່ານມາ, ທະນາຄານ ອິນໂດຈີນ ສືບຕໍ່ປະຕິບັດໄດ້ດີເປັນພິເສດກ່ຽວກັບເງິນຝາກ, ໂດຍໄດ້ຮັບແຮງສະໜັບສະໜູນຈາກການເອົາໃຈໃສ່ໃນການຕອບສະໜອງຄວາມຕ້ອງການ ແລະ ຄວາມເພິ່ງພໍໃຈຂອງລູກຄ້າ. ດ້ານເງິນຝາກເພີ່ມຂຶ້ນ 63%, ບັນລຸ 11,775 ຕື້ກີບ ໃນທ້າຍປີ, ໃນຂະນະທີ່ຄ່າໃຊ້ຈ່າຍຂອງເງິນຝາກຫຼຸດລົງ 1,5%. ໃນນັ້ນປະກອບມີຫຼາຍປັດໄຈທີ່ສົ່ງຜົນເຮັດໃຫ້ພວກເຮົາສາມາດບັນລຸເປົ້າໝາຍຄັ້ງນີ້ໄດ້, ເຊັ່ນວ່າຄວາມຫລາກຫລາຍຂອງຜະລິດຕະພັນ ແລະ ການບໍລິການທີ່ເໝາະສົມ ທີ່ສາມາດຕອບສະໜອງຄວາມຕ້ອງການທີ່ແຕກຕ່າງກັນຂອງລູກຄ້າໄດ້. ຜະລິດຕະພັນເງິນຝາກ ປະກອບມີບັນຊີເງິນຝາກປະຢັດ, ເງິນຝາກປະຈຳ ແລະ ບັນຊີຕະຫຼາດເງິນ, ເຊິ່ງທັງໝົດນີ້ພວກເຮົາໄດ້ມອບອັດຕາດອກເບ້ຍທີ່ສູງ ແລະ ມີເງື່ອນໄຂທີ່ຢືດຢຸ່ນ.

ນອກຈາກການສຸມໃສ່ການບໍລິການລູກຄ້າແລ້ວ ຍັງໄດ້ຮັກສາຂອບເຂດການບໍລິຫານຄວາມສ່ຽງທີ່ເຂັ້ມແຂງເພື່ອຮັບປະກັນຄວາມປອດໄພຂອງເງິນຝາກ. ຍຶດໝັ້ນໃນການຮັກສາສະພາບຄ່ອງ ແລະ ຄວາມພຽງພໍຂອງທຶນໃຫ້ຢູ່ໃນລະດັບສູງ, ພ້ອມທັງຍຶດໝັ້ນບັນດາມາດຕະການ ແລະ ລະບຽບການ.

### ສິນເຊື່ອ









ເຖິງວ່າສະພາບແວດລ້ອມທາງດ້ານເສດຖະກິດຈະມີຄວາມຫຍຸ້ງຍາກ, ແຕ່ເນື່ອງຈາກມີຄວາມຕ້ອງການເງິນທຶນຈຳນວນຫຼາຍຈາກລູກຄ້າລາຍຍ່ອຍ ແລະ ລູກຄ້າລາຍໃຫຍ່ ດ້ວຍເຫດນີ້ຈຶ່ງເຮັດໃຫ້ສິນເຊື່ອຂອງທະນາຄານເຕີບໂຕ 62%, ຜົນຕອບແທນຈາກສິນເຊື່ອເພີ່ມຂຶ້ນ 0.6% ໃນຂະນະທີ່ອັດຕາສ່ວນໜີ້ຕ້ອງຮັບທວງຍາກ NPL ຫຼຸດລົງຕ່ຳກວ່າ 1% ຂອງສິນເຊື່ອທັງໝົດ. ພວກເຮົາຍັງຄົງຮັກສາຈຸດສຸມການປ່ອຍສິນເຊື່ອຢ່າງລະມັດລະວັງ, ດ້ວຍວິທີການທີ່ມີລະບຽບວິໄນໃນການຄຸ້ມຄອງຄວາມສ່ຽງ ແລະ ການພິຈາລະນາສິນເຊື່ອ. ສືບຕໍ່ນຳໃຊ້ຄວາມຊຳນານຢ່າງເລິກເຊິ່ງໃນຂະແໜງການຕ່າງໆ ເພື່ອສະໜອງການກູ້ຢືມເງິນທີ່ເໝາະສົມໃຫ້ກັບລູກຄ້າ.

## ການປັບປຸງຖານະການເງິນປີ 2021

ໃນປີ 2021, ການລົງທຶນໃນພັນທະບັດໄດ້ຖືກປ່ຽນເປັນຕາສານທຶນທີ່ກຳນົດໂດຍຜົນກຳໄລ ແລະ ຂາດທຶນ, ເຊິ່ງສົ່ງຜົນກະທົບຕໍ່ຫຼັກການປະຕິບັດທາງບັນຊີ. ເພື່ອສະທ້ອນເຖິງການປ່ຽນແປງນີ້ ພວກເຮົາໄດ້ທົບທວນຖານະການເງິນຂອງເຮົາໃນປີ 2021 ຄືນໃໝ່, ເຊິ່ງສະແດງໃຫ້ເຫັນເຖິງແນວທາງການປະຕິບັດທາງບັນຊີຂອງການລົງທຶນດັ່ງກ່າວ. ສົ່ງຜົນໃຫ້ການລາຍງານຜົນກຳໄລເບື້ອງຕົ້ນໃນປີ 2021 ແມ່ນເພີ່ມຂຶ້ນ 178.347 ຕື້ກີບ. ການປັບປຸງນີ້ບໍ່ໄດ້ສົ່ງຜົນກະທົບຕໍ່ຄວາມຄິດເຫັນຂອງການກວດສອບທີ່ໂປ່ງໃສໂດຍຜູ້ກວດສອບຂອງພວກເຮົາ.

## ຜົນກຳໄລ




ການອ່ອນຄ່າຂອງສະກຸນເງິນກີບໄດ້ມີການຫຼຸດລົງຢ່າງຮຸນແຮງ, ສົ່ງຜົນເຮັດໃຫ້ຖານະການເງິນຂອງທະນາຄານ ໃນປີ 2022 ໄດ້ຮັບຜົນກະທົບຢ່າງຫຼີກລ່ຽງບໍ່ໄດ້ຈາກການປະເມີນມູນຄ່າຊັບສິນ ແລະ ໜີ້ສິນ ທີ່ເປັນເງິນຕາຕ່າງປະເທດ ຕາມການລາຍງານທຽບເທົ່າເປັນສະກຸນເງິນກີບ. ເຖິງຢ່າງໃດກໍຕາມ, ຜົນກຳໄລ ແລະ ຂາດທຶນສະສົມຂອງປີ 2021 ທີ່ໄດ້ປັບປຸງຄືນໃໝ່ ເຮັດໃຫ້ປີ 2022 ແມ່ນມີກຳໄລສະສົມກວມ 115,5 ຕື້ກີບ. ດ້ວຍແຜນຍຸດທະສາດການຄຸ້ມຄອງຄວາມສ່ຽງທາງດ້ານເງິນຕາຕ່າງປະເທດທີ່ເຂັ້ມງວດ ພວກເຮົາຄາດຄະເນວ່າຈະໄດ້ຮັບການຟື້ນຟູໃນອະນາຄົດ ເພື່ອຫຼຸດຜ່ອນການເໜັງຕີງຂອງອັດຕາແລກປ່ຽນໃຫ້ກັບຄືນມາສູ່ພາວະປົກກະຕິໄດ້.




ຄຽງຄູ່ກັນນັ້ນ, ທະນາຄານອິນໂດຈີນ ຍັງຄົງມີລາຍຮັບຈາກການດຳເນີນງານ (ຍົກເວັ້ນຜົນກະທົບຈາກການຕີມູນຄ່າເງິນຕາຕ່າງປະເທດ) ເນື່ອງມາຈາກການເຕີບໂຕທີ່ເພີ່ມຂຶ້ນຂອງລາຍຮັບດອກເບ້ຍ ແລະ ຄ່າທຳນຽມການບໍລິການ. ລາຍຮັບດອກເບ້ຍສຸດທິແມ່ນຍັງສືບຕໍ່ເພີ່ມຂຶ້ນ (1.35%) ແລະ ດີຂຶ້ນເລັກນ້ອຍເມື່ອທຽບກັບປີກ່ອນ (1.25%), ເຊິ່ງຊີ້ໃຫ້ເຫັນເຖິງຄວາມຍືນຍົງຂອງຜົນກຳໄລຈາກລາຍຮັບດອກເບ້ຍ. ພວກເຮົາຍັງສືບຕໍ່ລາຍງານຜົນກຳໄລຈາກການລົງທຶນໃນຕາສານທຶນທີ່ກຳນົດໄວ້ຜ່ານຜົນກຳໄລ ແລະ ຂາດທຶນ, ເຖິງວ່າຈະມີການປະເມີນມູນຄ່າເປັນເງິນຕາຕ່າງປະເທດ. ດ້ວຍການຄາດຄະເນວ່າເສດຖະກິດຈະໄດ້ຮັບການຟື້ນຟູໃນໄວໆນີ້, ພວກເຮົາຄາດວ່າຈະໄດ້ຮັບຜົນກຳໄລເພີ່ມຂຶ້ນຕື່ມຈາກການການຂາຍຕາສານທຶນ.

### ແຜນການ ແລະ ເປົ້າໝາຍໃນການດຳເນີນທຸລະກິດຂອງທະນາຄານອິນໂດຈີນ ໃນປີ 2023

ແຜນການຂອງທະນາຄານສຳລັບປີໜ້າ ແມ່ນສຸມໃສ່ການປັບປຸງ ແລະ ມອບຜະລິດຕະພັນບໍລິການໃໝ່ໃຫ້ແກ່ລູກຄ້າ ໂດຍການລົງທຶນໃນເຕັກໂນໂລຊີ ແລະ ຊ່ອງທາງດິຈິຕອນ ເຊັ່ນ: ການເພີ່ມປະສິດທິພາບຂອງແອັບມືຖື. ທະນາຄານ ອິນໂດຈີນ ມີເປົ້າໝາຍໃນການຂະຫຍາຍຍອດເງິນຝາກ ແລະ ຍອດສິນເຊື່ອໂດຍແນໃສ່ຂະແໜງການໃຫມ່, ໂດຍສະເພາະແມ່ນວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (SMEs) ແລະ ຂະຫຍາຍຜະລິດຕະພັນຕ່າງໆ. ທະນາຄານ ອິນໂດຈີນ ຈະສືບຕໍ່ສ້າງຄວາມເຂັ້ມແຂງໃນຂອບເຂດການຄຸ້ມຄອງຄວາມສ່ຽງຂອງຕົນໂດຍການປະຕິບັດແນວທາງທີ່ດີທີ່ສຸດ, ການປັບປຸງຄວາມສາມາດໃນການຕິດຕາມ ແລະ ຮັບປະກັນການປະຕິບັດໃຫ້ສອດຄ່ອງຕາມຂໍ້ກຳນົດ ຫຼື ລະບຽບການ. ນອກຈາກນັ້ນ, ພວກເຮົາຈະຂະຫຍາຍການບໍລິການທະນາຄານດິຈິຕອນ, ຊອກຫາຄູ່ຮ່ວມທຸລະກິດໃໝ່ກັບບໍລິສັດອື່ນໆ, ປັບປຸງໂຄງສ້າງພະນັກງານ ແລະ ຄ່າໃຊ້ຈ່າຍໃຫ້ເໝາະສົມ ເພື່ອປັບປຸງປະສິດທິພາບໃຫ້ດີຂຶ້ນ. ສຸດທ້າຍນີ້, ທະນາຄານ ອິນໂດຈີນ ຈະຈັດລຳດັບຄວາມສຳຄັນຂອງການມີສ່ວນຮ່ວມຂອງພະນັກງານໂດຍການສົ່ງເສີມຄວາມຫຼາກຫຼາຍດ້ານວັດທະນະທຳ, ການລວມກັນເປັນໜຶ່ງດຽວ ແລະ ການສ້າງນະວັດຕະກຳ, ລວມທັງໂຄງການການຝຶກອົບຮົມ ແລະ ການພັດທະນາ, ການໃຫ້ຄ່າຕອບແທນອີງຕາມຜົນງານການເຮັດວຽກ ແລະ ສຸມໃສ່ການປັບຄວາມສົມດຸນລະຫວ່າງການເຮັດວຽກ ແລະ ຊີວິດສ່ວນຕົວ.

ເພື່ອໃຫ້ບັນລຸຕາມຈຸດປະສົງ, ພວກເຮົາຈະປະຍຸກໃຊ້ແຜນຍຸດທະສາດທີ່ຈຳເປັນໃນການປະຕິບັດ. ກ່ອນອື່ນໝົດ, ຈະສ້າງຄວາມເຂັ້ມແຂງດ້ານການໂຄສະນາປະຊາສຳພັນທາງການຕະຫຼາດ ເພື່ອໃຫ້ສາມາດເຂົ້າເຖິງລູກຄ້າທີ່ມີທ່າແຮງ ແລະ ເພີ່ມການຮັບຮູ້ດ້ານຊື່ສຽງຂອງທະນາຄານໃຫ້ເປັນທີ່ຮູ້ຈັກຂຶ້ນອີກ. ພວກເຮົາຍັງຈະໄດ້ມີການປະເມີນກົນລະຍຸດ ເພື່ອຮັບປະກັນວ່າຍັງສາມາດແຂ່ງຂັນໃນຕະຫຼາດໄດ້. ນອກຈາກນັ້ນ, ຍັງຈະທົບທວນຄືນຂະບວນການປະຕິບັດງານ ເພື່ອລະບຸຈຸດທີ່ຕ້ອງການປັບປຸງ ແລະ ເພີ່ມຄວາມຄ່ອງຕົວໃນການດຳເນີນງານ. ສຸດທ້າຍນີ້, ພວກເຮົາຈະສ້າງຄວາມເຂັ້ມແຂງໃນຂອບເຂດການຄຸ້ມຄອງຄວາມສ່ຽງ ເພື່ອຮັບປະກັນວ່າພວກເຮົາຈະຍັງຮັກສາສະຖານະທາງດ້ານການເງິນທີ່ເຂັ້ມແຂງໄວ້ ແລະ ຫຼຸດຜ່ອນຄວາມສ່ຽງທີ່ອາດຈະເກີດຂຶ້ນ. ໂດຍລວມແລ້ວ, ພວກເຮົາໝັ້ນໃຈວ່າແຜນຍຸດທະສາດເຫຼົ່ານີ້ຈະຊ່ວຍໃຫ້ບັນລຸເປົ້າໝາຍ ແລະ ຊຸກຍູ້ການເຕີບໂຕແບບຍືນຍົງໃນໄລຍະຍາວ.

### ແຜນຍຸດທະສາດ

ໃນປີທີ່ກຳລັງຈະມາເຖິງ, ຍຸດທະສາດຂອງທະນາຄານ ແມ່ນຍັງຄົງສຸມໃສ່ການບັນລຸການເຕີບໂຕຢ່າງຕໍ່ເນື່ອງ. ພວກເຮົາເຊື່ອວ່າອັດຕາການເຕີບໂຕນີ້ແມ່ນສາມາດບັນລຸໄດ້ໂດຍສຸມໃສ່ຍຶດໝັ້ນການເອົາລູກຄ້າເປັນຫົວໃຈຫຼັກໃນການດຳເນີນທຸລະກິດ, ຂະຫຍາຍດ້ານດິຈິຕອນ, ຜະລິດຕະພັນຕ່າງໆ ແລະ ປັບປຸງຄວາມສຳພັນທີ່ດີກັບລູກຄ້າໃຫ້ດີຍິ່ງຂຶ້ນ.

# ພາກທີ 2 ໂຄງຮ່າງການຈັດຕັ້ງ

## *2.1. ບັນດາຜູ້ຖືຮຸ້ນ*

| ລ/ດ | ລາຍຊື່ຜູ້ຖືຮຸ້ນ | ອັດຕາສ່ວນການຖືຮຸ້ນ |
|---|---|---|
| 1 | ທ່ານ ໂອ ເຊ ຍັງ (ເກົາຫຼີ) | 78.57% |
| 2 | ບໍລິສັດ ແອວວີເອັມຊີ ອິນເວດສເມັນ ຈຳກັດ | 11.43% |
| 3 | ທ່ານ ນາງ ຖາວອນ ວົງສົມບັດ | 10.00% |
| | ລວມ: | 100.00% |

## 2.2. ສະພາບໍລິຫານ



**ທ່ານ ໂອ ເຊ ຢັງ**
**ປະທານສະພາບໍລິຫານ**

ແມ່ນນັກທຸລະກິດທີ່ມີຊື່ສຽງ ແລະ ປະສົບຜົນສຳເລັດທາງດ້ານທຸລະກິດໃນ ສປປ ລາວ. ທ່ານ ແມ່ນຜູ້ກໍ່ຕັ້ງ ແລະ ເປັນປະທານໃຫຍ່ ກຸ່ມບໍລິສັດໂຄລາວ ໃນຖານະນິຕິບຸກຄົນ ໃນປີ 1997.



**ທ່ານ ເຕ ຮົງ ເຮັງ**
**ຮອງປະທານ**

ທ່ານ ເຕ ຮົງ ເຮັງ ໄດ້ເລີ່ມອາຊີບໃນສາຍທະນາຄານໃນປີ 1976 ກັບທະນາຄານທີ່ມີຊື່ສຽງໃນປະເທດມາເລເຊຍ. ເປັນເວລາ 20 ປີທີ່ລາວໄດ້ຮັບໃຊ້ຢູ່ສາຂາໃນແຂວງຕ່າງໆທີ່ປະເທດມາເລເຊຍໃນຕຳແໜ່ງຜູ້ຈັດການສາຂາ. ແຕ່ປີ 1996 ຫາ 2003 (7 ປີ) ກໍ່ໄດ້ຮັບການແຕ່ງຕັ້ງເປັນຜູ້ຈັດການທົ່ວໄປຂອງທະນາຄານດັ່ງກ່າວປະຈຳສາຂາ ໃນ ສປປ ລາວ ແລະ ຫລັງຈາກນັ້ນກໍໄດ້ຮັບການແຕ່ງຕັ້ງເປັນຜູ້ອຳນວຍການທົ່ວໄປຂອງທະນາຄານຮ່ວມທຸລະກິດຢູ່ທີ່ປະເທດຫວຽດນາມ ແຕ່ປີ 2003 ຫາ 2008 (5 ປີ). ຕໍ່ມາລາວໄດ້ດຳລົງຕຳແໜ່ງຜູ້ອຳນວຍການໃຫຍ່ຂອງທະນາຄານອິນໂດຈີນ ໃນປີ 2008 ຈົນເຖິງປີ 2021. ປະຈຸບັນລາວຍັງດຳລົງຕຳແໜ່ງເປັນຮອງປະທານສະພາບໍລິຫານຂອງທະນາຄານອິນໂດຈີນ.



**ທ່ານ ນາງ ຖາວອນ ວົງສົມບັດ**
**ສະມາຊິກ**

ທ່ານ ນາງ ຖາວອນ ວົງສົມບັດ ແມ່ນໜຶ່ງໃນບັນດານັກທຸລະກິດຍິງທີ່ໂດດເດັ່ນໃນປະເທດ. ທ່ານໄດ້ເລີ່ມຕົ້ນການເຮັດວຽກຫຼັງຈາກສຳເລັດການສຶກສາໃນປີ 1999 ແລະ ໄດ້ເຂົ້າເປັນຜູ້ຊ່ວຍຜູ້ບໍລິຫານທຸລະກິດ ບໍລິສັດໂຄລາວ ແລະ ເປັນຜູ້ຂັບເຄື່ອນຫຼັກທີ່ສຳຄັນຕໍ່ຄວາມສຳເລັດຂອງທຸລະກິດຫຼາຍໆຂະແໜງລວມທັງ ກຸ່ມບໍລິສັດ ໂຄລາວ. ດ້ວຍຄວາມເປັນນັກປະກອບການ ແລະ ພາວະຄວາມເປັນຜູ້ນຳທີ່ເຂັ້ມແຂງ ປັດຈຸບັນທ່ານໄດ້ດຳລົງຕຳແໜ່ງປະທານ ກຸ່ມບໍລິສັດ ໂຄລາວ.



**ທ່ານ ນາງ ຈັນເພັງ ວົງສົມບັດ**
**ສະມາຊິກ**

ໄດ້ຮຽນມາຈາກສະຫະພາບໂຊວຽດ ທີ່ສະຖາບັນວິສະວະກຳສາດ ເລຍໂວບສະກາຍຢາ ແຕ່ປີ 1989. ຈາກປີ 1995 ຫາປີ 2002 (7 ປີ) ທ່ານໄດ້ເຮັດວຽກຢູ່ ທະນາຄານ ພາບລິກ ສາຂາວຽງຈັນ. ຫຼັງຈາກນັ້ນໄດ້ເຮັດວຽກຢູ່ ບໍລິສັດໂຄລາວໃນຕຳແໜ່ງຫົວໜ້າພະແນກການເງິນ, ກ່ອນຈະເລີ່ມເຂົ້າເຮັດວຽກຢູ່ ທະນາຄານອິນໂດຈີນ ແຕ່ປີ 2008 ແລະ ຕຳແໜ່ງປັດຈຸບັນດຳລົງຕຳແໜ່ງຜູ້ອຳນວຍການໃຫຍ່ຂອງທະນາຄານອິນໂດຈີນ.



**ທ່ານ ຈາງ ວູ ຈິນ**
**ສະມາຊິກ**

ຈົບຈາກມະຫາວິທະຍາໄລ Shandong, ປະເທດຈີນ. ດ້ວຍປະລິນຍາຕີ ສາຂາເສດຖະສາດ, ໄດ້ເຮັດວຽກໃນຂະແໜງການເງິນຕັ້ງແຕ່ປີ 2013. ເປັນຫົວໜ້າຝ່າຍການເງິນຂອງບໍລິສັດເອກະຊົນໃນປະເທດມຽນມາເປັນເວລາ 4 ປີກ່ອນທີ່ຈະຍ້າຍມາຢູ່ປະເທດລາວ ແລະ ໄດ້ສືບຕໍ່ບໍລິຫານທຸລະກິດຂອງບໍລິສັດ ໂອໂຕເວີນດ (ໂຄລາວດີວີລົບພົງ) ຈຳກັດໃນຕຳແໜ່ງ CFO. ທ່ານໄດ້ເຂົ້າຮ່ວມທະນາຄານອິນໂດຈີນໃນວັນທີ 1 ຕຸລາ 2020 ແລະ ປະຈຸບັນດຳລົງຕຳແໜ່ງຫົວໜ້າພາກສ່ວນສິນເຊື່ອຂອງທະນາຄານອິນໂດຈີນ.



**ທ່ານ ບຸນເຮັ່ງ ສຸພິດາ**
**ສະມາຊິກ**

ຈົບປະລິນຍາໂທ ສາຂາບໍລິຫານທຸລະກິດ ທີ່ມະຫາວິທະຍາໄລ Flinders ທີ່ປະເທດ Australia. ໄດ້ເລີ່ມເຮັດວຽກຢູ່ທະນາຄານ ພາບລິກ ສາຂາວຽງຈັນ ແຕ່ປີ 1998-2004 (6 ປີ) ແລະ ເຮັດວຽກຢູ່ທະນາຄານ ANZ ໃນປີ 2007-2013 (7 ປີ ) ແລະ ໄດ້ເລີ່ມເຮັດວຽກກັບ ທະນາຄານ ອິນໂດຈີນ ປີ 2014 ແລະ ຕຳແໜ່ງປັດຈຸບັນເປັນຮອງຜູ້ອຳນວຍການ.



**ທ່ານ ນາງ ພູວັນ ຜຸດຜ່ອງ**
**ສະມາຊິກ**

ໄດ້ສຶກສາການບໍລິຫານທຸລະກິດທີ່ ວິທະຍາໄລ ການຊ່າງປາກປ່າສັກ ແຕ່ປີ 1998, ພ້ອມທັງສຳເລັດຫຼັກສູດ CPA ຈາກກະຊວງການເງິນໃນປີ 2002. ປະຈຸບັນນີ້ແມ່ນດຳລົງຕຳແໜ່ງ ຜູ້ອຳນວຍການ ບໍລິສັດ ວຽງຈັນ ອິນເຕີເນເຊີແນວຈຳກັດ.

## 2.3. ຄະນະອຳນວຍການ

ສະມາຊິກຂອງຄະນະອຳນວຍການພາຍໃນປີ ແລະ ຈົນເຖິງມື້ອອກເອກະສານສະບັບນີ້ ມີດັ່ງນີ້:

| ຊື່ ແລະ ນາມສະກຸນ | ຕຳແໜ່ງ | ວັນທີແຕ່ງຕັ້ງ |
|---|---|---|
| ທ່ານ ນາງ ຈັນເພັງ ວົງສົມບັດ | ຜູ້ອຳນວຍການໃຫຍ່ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |
| ທ່ານ ບຸນເຮັ່ງ ສຸພິດາ | ຮອງຜູ້ອຳນວຍການ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |
| ທ່ານ ວໍລະເດດ ພັນແພງດີ | ຮອງຜູ້ອຳນວຍການ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |
| ທ່ານ ຈອງ ກວາງ ຊອກ | ຮອງຜູ້ອຳນວຍການ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |
| ທ່ານ ຈາງ ວູ ຈິນ | ຫົວໜ້າພາກສ່ວນສິນເຊື່ອ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |
| ທ່ານ ນາງ ຄອນມາລາ ສິດທິລາດ | ຫົວໜ້າພາກສ່ວນບໍລິຫານຄວາມສ່ຽງ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |

## 2.4. ຄະນະກຳມະການອື່ນໆ

### 1. ຄະນະກຳມະການກຳກັບດູແລກິດຈະການ

| ຊື່ ແລະ ນາມສະກຸນ | ຕຳແໜ່ງ | ວັນທີແຕ່ງຕັ້ງ |
|---|---|---|
| ທ່ານ ນາງ ຖາວອນ ວົງສົມບັດ | ປະທານ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |
| ທ່ານ ໂອ ເຊ ຍັງ | ສະມາຊິກ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |
| ທ່ານ ນາງ ຈັນເພັງ ວົງສົມບັດ | ສະມາຊິກ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |

### 2. ຄະນະກຳມະການກວດກາ

| ຊື່ ແລະ ນາມສະກຸນ | ຕຳແໜ່ງ | ວັນທີແຕ່ງຕັ້ງ |
|---|---|---|
| ທ່ານ ນາງ ພູວັນ ຜຸດຜ່ອງ | ປະທານ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |
| ທ່ານ ນາງ ຈັນເພັງ ວົງສົມບັດ | ສະມາຊິກ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |
| ທ່ານ ບຸນເຮັ່ງ ສຸພິດາ | ສະມາຊິກ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |
| ທ່ານ ວໍລະເດດ ພັນແພງດີ | ສະມາຊິກ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |
| ທ່ານ ນາງ ຄອນມາລາ ສິດທິລາດ | ສະມາຊິກ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |

### 3. ຄະນະກຳມະການບໍລິຫານຄວາມສ່ຽງ

| ຊື່ ແລະ ນາມສະກຸນ | ຕຳແໜ່ງ | ວັນທີແຕ່ງຕັ້ງ |
|---|---|---|
| ທ່ານ ບຸນເຮັ່ງ ສຸພິດາ | ປະທານ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |
| ທ່ານ ນາງ ຈັນເພັງ ວົງສົມບັດ | ສະມາຊິກ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |
| ທ່ານ ວໍລະເດດ ພັນແພງດີ | ສະມາຊິກ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |
| ທ່ານ ນາງ ຄອນມາລາ ສິດທິລາດ | ສະມາຊິກ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |
| ທ່ານ ນາງ ມະໄລພອນ ສັກສະຖິດ | ສະມາຊິກ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |
| ທ່ານ ອິນປອນ ບຸນຄ້ຳປະສິງ | ສະມາຊິກ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |
| ທ່ານ ນາງ ພັນດານີ ໂພທິສານ | ສະມາຊິກ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |

### 4. ຄະນະກຳມະການສິນເຊື່ອ

| ຊື່ ແລະ ນາມສະກຸນ | ຕຳແໜ່ງ | ວັນທີແຕ່ງຕັ້ງ |
|---|---|---|
| ທ່ານ ຈາງ ວູ ຈິນ | ປະທານ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |
| ທ່ານ ນາງ ຈັນເພັງ ວົງສົມບັດ | ສະມາຊິກ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |
| ທ່ານ ບຸນເຮັ່ງ ສຸພິດາ | ສະມາຊິກ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |

### 5. ຄະນະກຳມະການບຸກຄະລາກອນ

| ຊື່ ແລະ ນາມສະກຸນ | ຕຳແໜ່ງ | ວັນທີແຕ່ງຕັ້ງ |
|---|---|---|
| ທ່ານ ນາງ ທົງ ພານິດ | ປະທານ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |
| ທ່ານ ນາງ ຈັນເພັງ ວົງສົມບັດ | ສະມາຊິກ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |
| ທ່ານ ບຸນເຮັ່ງ ສຸພິດາ | ສະມາຊິກ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |
| ທ່ານ ຈາງ ວູ ຈິນ | ສະມາຊິກ | ວັນທີແຕ່ງຕັ້ງ 01 ມັງກອນ 2022 |

# ພາກທີ 3 ບົດລາຍງານທາງການເງິນ

## *3.1 ປະຫວັດຜູ້ກວດສອບພາຍນອກ*

- ປີ 2009-2010 ທະນາຄານໄດ້ຮັບການກວດສອບໂດຍ ບໍລິສັດ ເຄພີເອັມຈີລາວຈຳກັດ
- ປີ 2011-2017 ທະນາຄານໄດ້ຮັບການກວດສອບໂດຍ ບໍລິສັດ ເອີນແອນຢັງລາວຈຳກັດ
- ປີ 2018-2022 ທະນາຄານໄດ້ຮັບການກວດສອບໂດຍ ບໍລິສັດ ເຄພີເອັມຈີລາວຈຳກັດ

## *3.2. ບົດລາຍງານຖານະການເງິນ*

**ບົດລາຍງານຂອງຜູ້ກວດສອບບັນຊີອິດສະລະ**
**ເຖິງ: ຜູ້ຖືຮຸ້ນຂອງທະນາຄານ ອິນໂດຈີນ ຈຳກັດ**

**ຄຳເຫັນ**

ພວກຂ້າພະເຈົ້າ ໄດ້ດຳເນີນການກວດສອບເອກະສານລາຍງານການເງິນຂອງ ທະນາຄານ ອິນໂດຈີນ ຈຳກັດ, ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນ ໃນວັນທີ 31 ທັນວາ 2022, ໃບລາຍງານຜົນການດຳເນີນງານ, ໃບລາຍງານສ່ວນປ່ຽນແປງທຶນ ແລະ ຄັງສຳຮອງອື່ນໆ ແລະ ໃບລາຍງານກະແສເງິນສົດ ສຳລັບປີການບັນຊີສິ້ນສຸດໃນມື້ດຽວກັນ ແລະ ບົດອະທິບາຍ, ຊຶ່ງປະກອບດ້ວຍສັງລວມນະໂຍບາຍການບັນຊີທີ່ສຳຄັນ ແລະ ບົດອະທິບາຍແບບເພີ່ມເຕີມອື່ນໆ.

ໃນຄວາມຄິດເຫັນຂອງພວກຂ້າພະເຈົ້າ, ເອກະສານລາຍງານການເງິນແມ່ນໄດ້ນຳສະເໜີຖານະການເງິນຂອງທະນາຄານໃນວັນທີ 31 ທັນວາ 2022 ແລະ ຜົນການດຳເນີນງານ ແລະ ກະແສເງິນສົດ ສຳລັບປີການບັນຊີສິ້ນສຸດມື້ດຽວກັນ ແມ່ນສອດຄ່ອງຢ່າງສົມເຫດສົມຜົນໃນທຸກສາລະສຳຄັນກັບຫຼັກການບັນຊີຂອງ ທະນາຄານແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ ໄດ້ວາງອອກ.

**ພື້ນຖານການສະແດງຄຳເຫັນ**

ພວກຂ້າພະເຈົ້າໄດ້ດຳເນີນການກວດສອບບັນຊີ ຕາມມາດຕະຖານການກວດສອບບັນຊີສາກົນ ("ISAs"). ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າ ໄດ້ກ່າວໄວ້ໃນສ່ວນຂອງຄວາມຮັບຜິດຊອບຂອງຜູ້ກວດສອບບັນຊີ ຕໍ່ເອກະສານລາຍງານການເງິນໃນບົດລາຍງານຂອງພວກຂ້າພະເຈົ້າ. ພວກຂ້າພະເຈົ້າມີຄວາມເປັນອິດສະລະ ຈາກທະນາຄານຕາມຂໍ້ກຳນົດກົດຈັນຍາບັນສາກົນຂອງຜູ້ປະກອບການວິຊາຊີບບັນຊີ ທີ່ກຳນົດໂດຍຄະນະກຳມະການຈັນຍາບັນສາກົນສຳລັບນັກບັນຊີ (ລວມທັງມາດຕະຖານອິດສະລະສາກົນ) (IESBA Code) ພ້ອມກັບກົດຈັນຍາບັນອື່ນທີ່ກ່ຽວຂ້ອງກັບການກວດສອບເອກະສານລາຍງານການເງິນ, ແລະ ພວກຂ້າພະເຈົ້າໄດ້ປະຕິບັດຕາມຄວາມຮັບຜິດຊອບດ້ານຈັນຍາບັນອື່ນໆ ເຊິ່ງເປັນໄປຕາມຂໍ້ກຳນົດເຫຼົ່ານັ້ນ. ພວກຂ້າພະເຈົ້າເຊື່ອວ່າຫຼັກຖານການກວດສອບທີ່ພວກຂ້າພະເຈົ້າໄດ້ຮັບພຽງພໍ ແລະ ເໝາະສົມເພື່ອໃຊ້ເປັນເກນໃນການສະແດງຄຳເຫັນຂອງພວກຂ້າພະເຈົ້າ.

**ເລື່ອງສາລະສຳຄັນ**

ພວກຂ້າພະເຈົ້າໄດ້ໃຫ້ຄວາມສຳຄັນກັບບົດອະທິບາຍທີ 3 ທີ່ອະທິບາຍເຖິງຜົນກະທົບຂອງການປັບປຸງບັນຊີຂອງປີກ່ອນທີ່ກ່ຽວຂ້ອງກັບການລົງທຶນໃນຕາສານທຶນທີ່ກຳນົດຢູ່ໃນ FVTPL. ຕົວເລກທີ່ກ່ຽວຂ້ອງທີ່ນຳສະເໜີໃນນີ້ ເພື່ອຈຸດປະສົງໃນການປຽບທຽບແມ່ນອີງໃສ່ເອກະສານລາຍງານການເງິນທີ່ຖືກກວດສອບໃນວັນທີ 31 ທັນວາ 2021 ແລະ ສຳລັບປີສິ້ນສຸດມື້ດຽວກັນ ແລະ ຫຼັງຈາກການປັບປຸງທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍທີ 3. ຄວາມຄິດເຫັນຂອງພວກຂ້າພະເຈົ້າບໍ່ໄດ້ຖືກດັດແກ້ກ່ຽວກັບເລື່ອງນີ້.

**ຄວາມຮັບຜິດຊອບຂອງຜູ້ບໍລິຫານຕໍ່ເອກະສານລາຍງານການເງິນ**

ຜູ້ບໍລິຫານມີໜ້າທີ່ຮັບຜິດຊອບໃນການກະກຽມ ແລະ ນຳສະເໜີເອກະສານລາຍງານການເງິນ ທີ່ຖືກຕ້ອງຕາມລະບຽບຫຼັກການບັນຊີຂອງທະນາຄານແຫ່ງ ສປປ ລາວ ແລະ ຫຼັກການບັນຊີໃນ ສປປ ລາວ ໄດ້ວາງອອກ ແລະ ຮັບຜິດຊອບກ່ຽວກັບການຄວບຄຸມພາຍໃນ ທີ່ຜູ້ບໍລິຫານພິຈາລະນາວ່າຈຳເປັນ ໃນການກະກຽມເອກະສານລາຍງານການເງິນທີ່ປາດສະຈາກການສະແດງຂໍ້ມູນທີ່ບິດເບືອນຈາກຄວາມເປັນຈິງອັນເປັນສາລະສຳຄັນ ບໍ່ວ່າຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດອື່ນໆ.

ໃນການກະກຽມເອກະສານລາຍງານການເງິນຜູ້ບໍລິຫານມີຄວາມຮັບຜິດຊອບໃນການປະເມີນຄວາມສາມາດຂອງທະນາຄານໃນການດຳເນີນງານຕໍ່ເນື່ອງ, ການເປີດເຜີຍ, ຕາມຄວາມເໝາະສົມ, ເລື່ອງທີ່ກ່ຽວກັບການດຳເນີນງານຕໍ່ເນື່ອງ ແລະ ການນຳໃຊ້ພື້ນຖານການບັນຊີແບບຕໍ່ເນື່ອງ ເວັ້ນເສຍແຕ່ຜູ້ບໍລິຫານມີຄວາມຕັ້ງໃຈທີ່ຈະເລີກ ຫຼື ຢຸດດຳເນີນງານ ຫຼື ບໍ່ສາມາດດຳເນີນງານຕໍ່ເນື່ອງໄປໄດ້.

**ຄວາມຮັບຜິດຊອບຂອງຜູ້ກວດສອບບັນຊີ ຕໍ່ການກວດສອບເອກະສານລາຍງານການເງິນ**

ການກວດສອບຂອງພວກຂ້າພະເຈົ້າ ມີວັດຖຸປະສົງເພື່ອໃຫ້ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນວ່າເອກະສານລາຍງານການເງິນ ໂດຍລວມແມ່ນປາດສະຈາກການສະແດງຂໍ້ມູນບິດເບືອນຈາກຄວາມເປັນຈິງ ອັນເປັນສາລະສຳຄັນ, ບໍ່ວ່າຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ອອກລາຍງານຂອງຜູ້ກວດສອບບັນຊີ ເຊິ່ງລວມຄວາມເຫັນຂອງພວກຂ້າພະເຈົ້າຢູ່ນຳ. ຄວາມເຊື່ອໝັ້ນຢ່າງສົມເຫດສົມຜົນຄືຄວາມເຊື່ອໝັ້ນໃນລະດັບສູງ ແຕ່ບໍ່ໄດ້ເປັນການຮັບປະກັນວ່າ ການປະຕິບັດການກວດສອບຕາມມາດຕະຖານການກວດສອບສາກົນ ("ISAs") ຈະສາມາດກວດພົບຂໍ້ມູນທີ່ບິດເບືອນຈາກຄວາມເປັນຈິງອັນເປັນສາລະສຳຄັນ ທີ່ມີຢູ່ໄດ້ສະເໝີໄປ. ຂໍ້ມູນທີ່ບິດເບືອນຈາກຄວາມເປັນຈິງອາດເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ ແລະ ຖືວ່າມີສາລະສຳຄັນ, ຖ້າຫາກວ່າແຕ່ລະລາຍການ ຫຼື ທຸກລາຍການລວມກັນ ຈະມີຜົນຕໍ່ການຕັດສິນໃຈ ທາງເສດຖະກິດຂອງຜູ້ໃຊ້ເອກະສານລາຍງານການເງິນເຫຼົ່ານີ້ເປັນພື້ນຖານ.

ອີງຕາມມາດຕະຖານການກວດສອບ, ພວກຂ້າພະເຈົ້າໄດ້ໃຊ້ດຸນພິນິດ ແລະ ວິຈາລະນະຍານທາງວິຊາການຢ່າງເປັນມືອາຊີບຕະຫຼອດໄລຍະການກວດສອບ, ພ້ອມນີ້ພວກຂ້າພະເຈົ້າຍັງໄດ້:

- ກຳນົດ ແລະ ປະເມີນຄວາມສ່ຽງຈາກການສະແດງຂໍ້ມູນທີ່ຂັດຕໍ່ຂໍ້ເທັດຈິງ ອັນເປັນສາລະສຳຄັນໃນເອກະສານລາຍງານການເງິນ, ບໍ່ວ່າຈະເກີດຈາກການສໍ້ໂກງ ຫຼື ຂໍ້ຜິດພາດ, ການອອກແບບ ແລະ ປະຕິບັດຕາມຂັ້ນຕອນຂອງການກວດສອບ ເພື່ອຮັບມືກັບຄວາມສ່ຽງເຫຼົ່ານັ້ນ ແລະ ໄດ້ຮັບຫຼັກຖານໃນການກວດສອບບັນຊີທີ່ພຽງພໍ ແລະ ເໝາະສົມເພື່ອເປັນເກນ ໃນການສະແດງຄວາມເຫັນຂອງພວກຂ້າພະເຈົ້າ. ຄວາມສ່ຽງຂອງການກວດສອບບໍ່ພົບຂໍ້ຜິດພາດທີ່ມີສາລະສຳຄັນ ທີ່ເກີດຈາກການສໍ້ໂກງສູງກວ່າຂໍ້ຜິດພາດອັນເນື່ອງມາຈາກການສໍ້ໂກງທີ່ອາດຈະກ່ຽວກັບການສົມຮູ້ຮ່ວມຄິດ, ການປອມແປງເອກະສານຫຼັກຖານ, ລະເລີຍໂດຍເຈດຕະນາ, ບິດເບືອນຈາກຄວາມຈິງ ຫຼື ການແຊກແຊງການຄວບຄຸມພາຍໃນ.
- ທຳຄວາມເຂົ້າໃຈຕໍ່ການຄວບຄຸມພາຍໃນ ທີ່ກ່ຽວຂ້ອງກັບການກວດສອບ ໃນການອອກແບບຂັ້ນຕອນການກວດສອບທີ່ມີຄວາມເໝາະສົມຕາມສະຖານະການ, ແຕ່ບໍ່ແມ່ນສຳລັບຈຸດປະສົງຂອງການສະແດງຄວາມເຫັນກ່ຽວກັບປະສິດທິຜົນຂອງການຄວບຄຸມພາຍໃນຂອງທະນາຄານໄດ້.
- ປະເມີນຄວາມເໝາະສົມຂອງນະໂຍບາຍການບັນຊີທີ່ຖືກນຳໃຊ້ ແລະ ຄວາມສົມເຫດສົມຜົນຂອງການປະເມີນການບັນຊີ ແລະ ເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງທີ່ເຮັດໂດຍຜູ້ບໍລິຫານ.
- ສະຫຼຸບກ່ຽວກັບຄວາມເໝາະສົມຂອງຫຼັກການບັນຊີທີ່ນຳໃຊ້ ສຳລັບການດຳເນີນງານຕໍ່ເນື່ອງຂອງຜູ້ບໍລິຫານ ແລະ ຈາກຫຼັກຖານການກວດສອບທີ່ໄດ້ຮັບ, ສະຫຼຸບວ່າມີຄວາມບໍ່ແນ່ນອນທີ່ມີສາລະສຳຄັນກ່ຽວກັບເຫດການ ຫຼື ສະຖານະການທີ່ອາດເປັນເຫດໃຫ້ເກີດຂໍ້ສົງໄສຢ່າງມີສາລະສຳຄັນຕໍ່ຄວາມສາມາດຂອງທະນາຄານໃນການດຳເນີນງານຕໍ່ເນື່ອງ. ຖ້າຫາກວ່າພວກຂ້າພະເຈົ້າໄດ້ຂໍ້ສະຫຼຸບວ່າມີຄວາມບໍ່ແນ່ນອນທີ່ມີສາລະສຳຄັນ, ພວກຂ້າພະເຈົ້າຕ້ອງໄດ້ກ່າວໄວ້ໃນບົດລາຍງານຂອງຜູ້ກວດສອບບັນຊີອິດສະລະເຖິງການ ເປີດເຜີຍຂໍ້ມູນທີ່ກ່ຽວຂ້ອງໃນບົດລາຍງານຖານະການເງິນ ຫຼື ຖ້າການເປີດເຜີຍດັ່ງກ່າວບໍ່ພຽງພໍຄວາມເຫັນຂອງພວກຂ້າພະເຈົ້າຈະປ່ຽນໄປ, ບົດສະຫຼຸບຂອງພວກຂ້າພະເຈົ້າແມ່ນອີງໃສ່ຫຼັກຖານການກວດສອບທີ່ໄດ້ຮັບເຖິງວັນທີຂອງບົດລາຍງານ. ຢ່າງໃດກໍຕາມ, ເຫດການ ຫຼື ເງື່ອນໄຂໃນອະນາຄົດອາດຈະເຮັດໃຫ້ທະນາຄານຢຸດການດຳເນີນງານຕໍ່ເນື່ອງ.
- ການປະເມີນຜົນການນຳສະເໜີໂດຍລວມ, ໂຄງປະກອບ ແລະ ເນື້ອໃນຂອງເອກະສານລາຍງານການເງິນ ລວມທັງການເປີດເຜີຍຂໍ້ມູນ ແລະ ການນຳສະເໜີເອກະສານລາຍງານການເງິນ, ການສະແດງລາຍການ ແລະ ເຫດການໃນຮູບແບບທີ່ເຮັດໃຫ້ມີການນຳສະເໜີຂໍ້ມູນໂດຍຖືກຕ້ອງຕາມທີ່ຄວນ.

ພວກຂ້າພະເຈົ້າຕິດຕໍ່ກັບຜູ້ບໍລິຫານກ່ຽວກັບໃນເລື່ອງອື່ນໆ, ຂອບເຂດການວາງແຜນ ແລະ ກຳນົດເວລາໃນການກວດສອບຕາມທີ່ໄດ້ວາງແຜນໄວ້ ປະເດັນທີ່ມີສາລະສຳຄັນ, ລວມເຖິງຂໍ້ບົກຜ່ອງທີ່ມີສາລະສຳຄັນໃນລະບົບການຄວບຄຸມພາຍໃນທີ່ພວກຂ້າພະເຈົ້າອາດກວດພົບໃນລະຫວ່າງການກວດສອບຂອງພວກຂ້າພະເຈົ້າ.

KPMG Lao

ບໍລິສັດ ເຄພີເອັມຈີ ລາວ ຈຳກັດ
ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 23 ມິຖຸນາ 2023

**ທະນາຄານ ອິນໂດຈີນ ຈຳກັດ**
ໃບລາຍງານຖານະການເງິນ
ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2022

31 ທັນວາ (ລ້ານກີບ)

| | ບົດ ອະທິບາຍ | 2022 | 2021 (ປັບປຸງໃໝ່) |
|---|---|---|---|
| **ເງິນສົດ ແລະ ເງິນຝາກກັບ ທຫລ** | | **2.074.758** | **1.525.887** |
| ເງິນສົດໃນຄັງ | 11 | 205.154 | 98.110 |
| ເງິນຝາກຢູ່ກັບ ທຫລ | 12 | 1.869.604 | 1.427.777 |
| **ເງິນຝາກຢູ່ກັບທະນາຄານອື່ນ** | 13 | **268.641** | **290.206** |
| ເງິນຝາກກະແສລາຍວັນ | | 268.641 | 215.206 |
| ເງິນຝາກມີກຳນົດ | | - | 75.000 |
| **ການລົງທຶນ** | | **1.104.520** | **524.981** |
| ການລົງທຶນໃນພັນທະບັດ | 14(ກ) | 515.400 | - |
| ການລົງທຶນໃນບໍລິສັດຮ່ວມທຶນ | 14(ຂ) | 50.516 | 25.717 |
| ການລົງທຶນໃນຕາສານທຶນທີ່ກຳນົດໂດຍ FVTPL | 14(ຄ) | 538.604 | 499.264 |
| **ເງິນກູ້ ແລະ ເງິນລ່ວງໜ້າ, ສຸດທິເງິນສະເພາະ** | 15 | **9.100.736** | **5.580.181** |
| **ຊັບສົມບັດຄົງທີ່ ແລະ ຊັບສົມບັດທີ່ບໍ່ມີຕົວຕົນ** | | **18.932** | **15.820** |
| ຊັບສົມບັດຄົງທີ່ທີ່ບໍ່ມີຕົວຕົນ | 16.1 | 2.170 | 584 |
| ວຽກລະຫວ່າງການກໍ່ສ້າງ | 16.2 | 845 | 3.491 |
| ຊັບສົມບັດຄົງທີ່ ທີ່ມີຕົວຕົນ | 16.3 | 15.917 | 11.745 |
| **ສິດນຳໃຊ້ຊັບສິນຕາມສັນຍາ** | 17 | **124.228** | **121.838** |
| **ຊັບສິນອື່ນໆ** | | **763.058** | **543.431** |
| ດອກເບ້ຍຄ້າງຮັບ | | 167.070 | 114.185 |
| ຊັບສິນອື່ນໆ | 18 | 595.988 | 429.246 |
| **ລວມຍອດຊັບສິນ** | | **13.454.873** | **8.602.344** |
| | | | |
| **ໜີ້ສິນ, ທຶນ ແລະ ຄັງສຳຮອງອື່ນໆ** | | | |
| **ເງິນຝາກຈາກທະນາຄານ ແລະ ສະຖາບັນການເງິນ** | 19 | **177.703** | 52.492 |
| ເງິນຝາກກະແສລາຍວັນ | | 10.326 | 25.842 |
| ເງິນຝາກມີກຳນົດ | | 167.377 | 26.650 |
| **ເງິນຝາກຈາກລູກຄ້າ** | 20 | **12.065.599** | **7.422.177** |
| ເງິນຝາກກະແສລາຍວັນ ແລະ ເງິນຝາກປະຢັດ | | 814.460 | 603.187 |
| ເງິນຝາກມີກຳນົດ | | 10.782.220 | 6.586.457 |
| ໜີ້ຕ້ອງສົ່ງອື່ນໆໃຫ້ລູກຄ້າ | | 468.919 | 232.533 |
| **ໜີ້ສິນອື່ນໆ** | | **548.090** | **423.324** |
| ໜີ້ສິນຄ່າເຊົ່າ | | 30.516 | 73.646 |
| ດອກເບ້ຍຄ້າງຈ່າຍ | | 415.764 | 284.404 |
| ອາກອນຄ້າງຈ່າຍ | 21.1 | 25 | 1.254 |
| ໜີ້ສິນອື່ນໆ | 22 | 101.785 | 64.020 |
| **ລວມຍອດໜີ້ສິນ** | | **12.791.392** | **7.897.993** |
| | | | |
| ທຶນ ແລະ ຄັງສຳຮອງອື່ນໆ | | | |
| ທຶນຈົດທະບຽນຖອກແລ້ວ | 23 | 477.000 | 453.000 |
| ຄັງສະສົມຕາມລະບຽບການ | | 52.679 | 52.679 |
| ເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອ | 15.2 | 45.060 | 26.758 |
| ກຳໄລສະສົມ | | 86.005 | 171.608 |
| ຄັງສຳຮອງເພື່ອຂະຫຍາຍທຸລະກິດ | | 332 | 306 |
| ຄັງສຳຮອງອື່ນໆ | 24 | 2.405 | - |
| **ລວມຍອດທຶນ ແລະ ຄັງສຳຮອງອື່ນໆ** | | **663.481** | **704.351** |
| **ລວມຍອດໜີ້ສິນ, ທຶນ ແລະ ຄັງສຳຮອງອື່ນໆ** | | **13.454.873** | **8.602.344** |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້.

**ທະນາຄານ ອິນໂດຈີນ ຈຳກັດ**
ໃບລາຍງານຜົນການດຳເນີນງານ
ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2022

31 ທັນວາ (ລ້ານກີບ)

| | ບົດ ອະທິບາຍ | 2022 | 2021 (ປັບປຸງໃໝ່) |
|---|---|---|---|
| ລາຍຮັບດອກເບ້ຍ ແລະ ທີ່ຄ້າຍຄືດອກເບ້ຍ | 5 | 776.331 | 638.304 |
| ລາຍຈ່າຍດອກເບ້ຍ ແລະ ທີ່ຄ້າຍຄືດອກເບ້ຍ | 5 | (672.848) | (567.911) |
| **ລາຍຮັບສຸດທິຈາກດອກເບ້ຍ ແລະ ທີ່ຄ້າຍຄືດອກເບ້ຍ** | | **103.483** | **70.393** |
| | | | |
| ລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການ | 6 | 85.895 | 45.553 |
| ລາຍຈ່າຍຈາກຄ່າທຳນຽມ ແລະ ຄ່າບໍລິການ | 6 | (1.208) | (796) |
| **ລາຍຮັບສຸດທິຈາກຄ່າທຳນຽມ ແລະ ຄ່າບໍລິການ** | | **84.687** | **44.757** |
| | | | |
| **ລາຍຮັບສຸດທິຈາກການດຳເນີນງານ** | | **188.170** | **115.150** |
| | | | |
| ຂາດທຶນຈາກອັດຕາແລກປ່ຽນ | | (179.709) | (35.996) |
| ລາຍໄດ້ຈາການດຳເນີນງານອື່ນໆ | 7 | 135.901 | 130.339 |
| **ລາຍຮັບອື່ນໆຈາກການດຳເນີນງານ** | | **(43.808)** | **94.343** |
| | | | |
| ລາຍຈ່າຍເງິນເດືອນ ແລະ ອື່ນໆທີ່ກ່ຽວຂ້ອງກັບພະນັກງານ | 8 | (80.226) | (49.528) |
| ລາຍຈ່າຍຄ່າບໍລິຫານອື່ນໆ | 9 | (42.672) | (35.921) |
| **ລາຍຈ່າຍຄ່າບໍລິຫານ** | | **(122.898)** | **(85.449)** |
| **ລາຍຈ່າຍຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ** | | **(9.512)** | **(11.068)** |
| **ລາຍຈ່າຍອື່ນໆຈາກການດຳເນີນງານ** | 10 | **(106.237)** | **(141.030)** |
| | | | |
| **ລວມຍອດລາຍຈ່າຍ** | | **(238.647)** | **(237.547)** |
| | | | |
| **ຂາດທຶນສຸດທິຈາກການດຳເນີນງານ** | | **(94.285)** | **(28.054)** |
| | | | |
| ເງິນແຮໜີ້ຕ້ອງຮັບທວງຍາກ | 15.2 | (103.915) | (148.736) |
| ເກັບຄືນເງິນແຮໜີ້ຕ້ອງຮັບທວງຍາກ | 15.2 | 78.311 | 148.028 |
| **ເງິນແຮສຸດທິ ໜີ້ຕ້ອງຮັບທວງຍາກ** | | **(25.604)** | **(708)** |
| | | | |
| **ສ່ວນແບ່ງກຳໄລຈາກບໍລິສັດຮ່ວມທຶນ** | 14(ຂ) | **5.428** | **1.815** |
| | | | |
| ກຳໄລຈາກການແປງສະພາບຈາກພັນທະບັດແປງສະພາບເປັນຕາສານທຶນທີ່ກຳນົດໂດຍ FVTPL | 14(ຄ) | - | 187.526 |
| ກຳໄລຈາກການປະເມີນມູນຄ່າຄືນຂອງຕາສານທຶນທີ່ກຳນົດໂດຍ FVTPL | 14(ຄ) | 39.339 | 30.098 |
| **ລວມກຳໄລຈາກການລົງທຶນໃນຕາສານທຶນທີ່ກຳນົດໂດຍ FVTPL** | | **39.339** | **217.624** |
| | | | |
| **ລວມ(ຂາດທຶນ)/ກຳໄລກ່ອນອາກອນ** | | **(75.122)** | **190.677** |
| **ອາກອນກຳໄລພາຍໃນປີ** | 21.2 | **-** | **-** |
| **(ຂາດທຶນ)/ກຳໄລຫຼັງຫັກອາກອນ** | | **(75.122)** | **190.677** |
| | | | |
| **ລາຍຮັບລວມອື່ນໆ** | | **-** | **-** |
| | | | |
| **ລາຍຮັບລວມທັງໝົດພາຍໃນປີ** | | **(75.122)** | **190.677** |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້.

**ທະນາຄານ ອິນໂດຈີນ ຈຳກັດ**
ໃບລາຍງານສ່ວນປ່ຽນຂອງທຶນ ແລະ ຄັງສຳຮອງອື່ນໆ
ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2022

(ລ້ານກີບ)

| | ບົດອະທິບາຍ | ທຶນຈົດທະບຽນຖອກແລ້ວ | ຄັງສະສົມຕາມລະບຽບການ | ເງິນແຮທົ່ວໄປ ສຳລັບກິດຈະກຳສິນເຊື່ອ | ກຳໄລສະສົມ | ຄັງຂະຫຍາຍທຸລະກິດ | ຄັງສຳຮອງອື່ນໆ | ລວມ |
|---|---|---|---|---|---|---|---|---|
| ຍອດເຫຼືອບັນຊີໃນວັນທີ1ມັງກອນ 2021 | | 381.251 | 33.612 | 24.009 | 45.217 | - | - | 484.089 |
| ເພີ່ມທຶນຈົດທະບຽນພາຍໃນປີ ໂອນຈາກກຳໄລສະສົມ | 23 | 44.035 | - | - | (44.035) | - | - | - |
| ເພີ່ມທຶນຈົດທະບຽນພາຍໃນປີ ຈາກຜູ້ຖືຮຸ້ນ | 23 | 27.714 | - | - | - | - | - | 27.714 |
| ກຳໄລສຸດທິພາຍໃນປີ (ປັບປຸງໃໝ່) | 3 | - | - | - | 190.676 | | - | 190.676 |
| ໂອນເຂົ້າຄັງສຳຮອງຕາມລະບຽບການ (ປັບປຸງໃໝ່) | 3 | - | 19.067 | - | (19.067) | - | - | - |
| ໂອນເຂົ້າຄັງຂະຫຍາຍທຸລະກິດ | | - | - | - | (306) | 306 | - | - |
| ເງິນແຮທົ່ວໄປທີ່ຫັກເປັນລາຍຈ່າຍພາຍໃນປີ | 15.2 | - | - | 114.140 | - | - | - | 114.140 |
| ເກັບຄືນເງິນແຮທົ່ວໄປພາຍໃນປີ | 15.2 | - | - | (114.376) | - | - | - | (114.376) |
| ສ່ວນຕ່າງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ | | - | - | 2.985 | - | | - | 2.985 |
| ອາກອນຈາກການເພີ່ມທຶນຈົດທະບຽນ | | - | - | - | (877) | - | - | (877) |
| **ຍອດເຫຼືອບັນຊີໃນວັນທີ 31 ທັນວາ 2021 ແລະ** | | | | | | | | |
| **ວັນທີ 1 ມັງກອນ 2022 (ປັບປຸງໃໝ່)** | | **453.000** | **52.679** | **26.758** | **171.608** | **306** | - | **704.351** |
| ເພີ່ມທຶນຈົດທະບຽນພາຍໃນປີ ຈາກຜູ້ຖືຮຸ້ນ | 23 | 24.000 | - | - | - | - | - | 24.000 |
| ຂາດທຶນສຸດທິພາຍໃນປີ | | - | - | - | (75.122) | - | - | (75.122) |
| ໂອນເຂົ້າຄັງສຳຮອງຕາມລະບຽບການ | | - | - | - | - | - | - | - |
| ໂອນເຂົ້າຄັງຂະຫຍາຍທຸລະກິດ | | - | - | - | (26) | 26 | - | - |
| ໂອນເຂົ້າຄັງສຳຮອງອື່ນໆ | 24 | - | - | - | (2.405) | - | 2.405 | - |
| ເງິນແຮທົ່ວໄປທີ່ຫັກເປັນລາຍຈ່າຍພາຍໃນປີ | 15.2 | - | - | 78.823 | - | - | - | 78.823 |
| ເກັບຄືນເງິນແຮທົ່ວໄປພາຍໃນປີ | 15.2 | - | - | (97.143) | - | - | - | (97.143) |
| ເງິນປັນຜົນທີ່ຈ່າຍໃຫ້ຜູ້ຖືຮຸ້ນ | 24 | - | - | - | (8.050) | - | - | (8.050) |
| ສ່ວນຕ່າງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ | | - | - | 36.622 | - | - | - | 36.622 |
| **ຍອດເຫຼືອບັນຊີໃນວັນທີ 31 ທັນວາ 2022** | | **477.000** | **52.679** | **45.060** | **86.005** | **332** | **2.405** | **663.481** |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້

**ທະນາຄານ ອິນໂດຈີນ ຈຳກັດ**
ໃບລາຍງານກະແສເງິນສົດ
ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2022

31 ທັນວາ (ລ້ານກີບ)

| | ບົດອະທິບາຍ | 2022 | 2021 (ປັບປຸງໃໝ່) |
|---|---|---|---|
| **ກະແສເງິນສົດຈາກກິດຈະກຳການດຳເນີນງານ** | | | |
| **(ຂາດທຶນ) / ກຳໄລສຸດທິກ່ອນອາກອນ** | | **(75.122)** | **190.677** |
| **ລາຍການປັບປຸງສຳລັບລາຍການທີ່ບໍ່ແມ່ນເງິນ:** | | | |
| ຫັກຄ່າເສື່ອມມູນຄ່າສິນເຊື່ອ | | 7.284 | 473 |
| ລາຍຮັບດອກເບ້ຍ ແລະ ທີ່ຄ້າຍຄືກັນ | 5 | (776.331) | (638.304) |
| ລາຍຈ່າຍດອກເບ້ຍ ແລະ ທີ່ຄ້າຍຄືກັນ | 5 | 672.848 | 567.911 |
| ຂາດທຶນສຸດທິຈາກການຊື້ຂາຍເປັນເງິນຕາຕ່າງປະເທດ | | 179.709 | 35.996 |
| ຫັກຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມ | | 9.512 | 11.068 |
| ສ່ວນແບ່ງ ກຳໄລ ຈາກບໍລິສັດຮ່ວມທຶນ | 14(ຂ) | (5.428) | (1.815) |
| ກຳໄລຈາກການແປງສະພາບຈາກພັນທະບັດແປງສະພາບເປັນຕາສານທຶນທີ່ກຳນົດໂດຍ FVTPL | 14(ຄ) | - | (187.526) |
| ກຳໄລຈາກການປະເມີນມູນຄ່າຄືນຂອງຕາສານທຶນທີ່ກຳນົດໂດຍ FVTPL | 14(ຄ) | (39.339) | (30.098) |
| ລາຍຮັບດອກເບ້ຍ | | 723.445 | 592.881 |
| ລາຍຈ່າຍດອກເບ້ຍ | | (541.487) | (516.984) |
| ລາຍຈ່າຍອາກອນລາຍໄດ້ | | (3.000) | (3.762) |
| **ລາຍໄດ້ຈາກການດຳເນີນງານກ່ອນການປ່ຽນແປງຊັບສິນ ແລະ ໜີ້ສິນການດຳເນີນງານ** | | **152.091** | **20.517** |
| | | | |
| ເງິນຝາກຕາມລະບຽບການກັບ ທຫລ | | (42.334) | (31.672) |
| ເງິນຝາກຢູ່ກັບທະນາຄານອື່ນໆ | | 75.000 | 24.500 |
| ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ | | (3.520.556) | (487.813) |
| ຊັບສິນອື່ນໆ | | (156.787) | (128.641) |
| ປ່ຽນແປງໃນເງິນຝາກຈາກທະນາຄານ ແລະ ສະຖາບັນການເງິນຕ່າງໆ | | (53.435) | (230.530) |
| ເງິນຝາກຈາກລູກຄ້າ | | 4.643.423 | 1.248.423 |
| ໜີ້ສິນອື່ນໆ | | (5.366) | 64.827 |
| **ເງິນສົດສຸດທິຈາກກິດຈະກຳການດຳເນີນງານ** | | **939.945** | **459.094** |
| | | | |
| **ກະແສເງິນສົດຈາກກິດຈະກຳການລົງທຶນ** | | | |
| ລາຍຈ່າຍໃນການຊື້ຊັບສິນບັດຄົງທີ່ທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ | | (5.919) | (7.162) |
| ລາຍຈ່າຍໃນສິດນຳໃຊ້ຊັບສິນຕາມສັນຍາ | 17 | (340) | (19.592) |
| ລາຍຮັບຈາກການຈຳໜ່າຍຊັບສິນທີ່ມີຕົວຕົນ | | - | 7 |
| ເງິນລົງທຶນໃນລະຫວ່າງປີ | | (519.400) | - |
| **ເງິນສົດສຸດທິທີ່ໃຊ້ເຂົ້າໃນກິດຈະກຳການລົງທຶນ** | | **(525.659)** | **(26.747)** |
| | | | |
| **ກະແສເງິນສົດຈາກກິດຈະກຳທາງການເງິນ** | | | |
| ລາຍຮັບຈາກການເພີ່ມຂຶ້ນຂອງທຶນ | 23 | 24.000 | 27.714 |
| **ເງິນສົດສຸດທິທີ່ນຳໃຊ້ໃນການດຳເນີນກິດຈະກຳທາງການເງິນ** | | **24.000** | **27.714** |
| | | | |
| **ປ່ຽນແປງສຸດທິໃນເງິນສົດ ແລະ ທຽບເທົ່າເງິນສົດ** | | **590.377** | **480.578** |
| ເງິນສົດແລະ ເງິນຝາກຢູ່ກັບທະນາຄານອື່ນ, ວັນທີ 1 ມັງກອນ | | 1.495.251 | 1.065.742 |
| ຜົນກະທົບຈາກສ່ວນຕ່າງຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ | | (30.405) | (51.069) |
| **ເງິນສົດ ແລະ ເງິນຝາກຢູ່ກັບທະນາຄານອື່ນ,ວັນທີ 31 ທັນວາ** | 25 | **2.055.223** | **1.495.251** |

ບົດອະທິບາຍປະກອບເອກະສານລາຍງານການເງິນ ເປັນສ່ວນໜຶ່ງຂອງເອກະສານລາຍງານສະບັບນີ້.

| ບົດອະທິບາຍ | ເນື້ອໃນ | ບົດອະທິບາຍ | ເນື້ອໃນ |
|---|---|---|---|
| 1 | ອົງກອນ ແລະ ກິດຈະກຳຫຼັກ | 15 | ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ, ເງິນແຮສະເພາະ ສຸດທິ |
| 2 | ພື້ນຖານການກະກຽມເອກະສານລາຍງານການເງິນ | 16 | ຊັບສົມບັດຄົງທີ່ທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ |
| 3 | ຜົນກະທົບຈາກການປັບປຸງບັນຊີ | 17 | ສັນຍາເຊົ່າ |
| 4 | ນະໂຍບາຍການບັນຊີທີ່ສຳຄັນ | 18 | ຊັບສິນອື່ນໆ |
| 5 | ລາຍຮັບດອກເບ້ຍ ແລະ ທີ່ຄ້າຍຄືກັນ ສຸດທິ | 19 | ເງິນຝາກຈາກທະນາຄານ ແລະ ສະຖາບັນການເງິນ |
| 6 | ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ ສຸດທິ | 20 | ເງິນຝາກຈາກລູກຄ້າ |
| 7 | ລາຍຮັບອື່ນໆຈາກການດຳເນີນງານ | 21 | ອາກອນ |
| 8 | ເງິນເດືອນ ແລະ ລາຍຈ່າຍອື່ນໆກ່ຽວກັບພະນັກງານ | 22 | ໜີ້ສິນອື່ນໆ |
| 9 | ລາຍຈ່າຍບໍລິຫານອື່ນໆ | 23 | ທຶນຈົດທະບຽນຖອກແລ້ວ |
| 10 | ລາຍຈ່າຍໃນການດຳເນີນງານອື່ນໆ | 24 | ການຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນ |
| 11 | ເງິນສົດໃນຄັງ | 25 | ເງິນສົດ ແລະ ທຽບເທົ່າເງິນສົດ |
| 12 | ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ (“ທຫລ”) | 26 | ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ |
| 13 | ເງິນຝາກຢູ່ກັບທະນາຄານອື່ນ | 27 | ພັນທະຕໍ່ກັບຄ່າເຊົ່າໃນການດຳເນີນງານ |
| 14 | ເງິນລົງທຶນ | 28 | ເຫດການທີ່ເກີດຂຶ້ນພາຍຫຼັງວັນທີໃນໃບສະຫຼຸບຊັບສົມບັດ |


## 1. ອົງກອນ ແລະ ກິດຈະກຳຫຼັກ

ທະນາຄານ ອິນໂດຈີນ ຈຳກັດ (“ທະນາຄານ”) ແມ່ນທະນາຄານທຸລະກິດທີ່ລົງທຶນຈາກຕ່າງປະເທດ. ທະນາຄານ ແມ່ນໄດ້ຮັບອະນຸຍາດຈົດທະບຽນ ເປັນທະນາຄານທຸລະກິດນິຕິບຸກຄົນໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (“ສປປ ລາວ”) ໃນວັນທີ 26 ພຶດສະພາ 2008 ພາຍໃຕ້ ໃບອະນຸຍາດລົງທຶນຕ່າງປະເທດ ເລກທີ 217-11/ຜທ ທີ່ໄດ້ຮັບອະນຸຍາດໂດຍ ກະຊວງແຜນການ ແລະ ການລົງທຶນ, ພາຍໃຕ້ໃບອະນຸຍາດສ້າງ ຕັ້ງທະນາຄານ ເລກທີ53/ທຫລ ທີ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໃນວັນທີ 28 ພະຈິກ 2008.

ຜູ້ຖືຮຸ້ນຂອງທະນາຄານ ປະກອບມີ ທ່ານ ໂອ ເຊ ຍັງ (ເກົາຫຼີ) 78,57%, ທ່ານ ນາງ ຖາວອນ ວົງສົມບັດ 10%ແລະ 11,43% ຖືຮຸ້ນໂດຍບໍລິສັດ ແອວວີເອັມຊີ ການລົງທຶນ ຈຳກັດ ເປັນບໍລິສັດເອກະຊົນທີ່ໄດ້ຈົດທະບຽນໃນ ຮົງກົງ.

ວຽກງານຕົ້ນຕໍຂອງທະນາຄານແມ່ນ ໃຫ້ບໍລິການທາງດ້ານການທະນາຄານ ແລະ ການບໍລິການການເງິນທີ່ກ່ຽວຂ້ອງໃນ ສປປ ລາວ.
ໃນວັນທີ 31 ທັນວາ 2022, ທະນາຄານມີທຶນຈົດທະບຽນທີ່ຖອກແລ້ວ ຈຳນວນ 477.000 ລ້ານກີບ (2021: 453.000 ລ້ານກີບ)
ໃນວັນທີ 31 ທັນວາ 2022, ທະນາຄານໄດ້ມີພະນັກງານ 244 ຄົນ (2021: 217 ຄົນ)

## 2. ພື້ນຖານການກະກຽມເອກະສານລາຍງານການເງິນ

### (ກ) ຫຼັກການບັນຊີພື້ນຖານທົ່ວໄປ

#### (i) ຄຳຖະແຫຼງການປະຕິບັດ

ຜູ້ບໍລິຫານຂອງທະນາຄານ ໄດ້ຮັບຮອງວ່າເອກະສານລາຍງານການເງິນ ໄດ້ຖືກກະກຽມໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີຂອງ ສປປ ລາວ ແລະ ລະບຽບການທີ່ອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານຖານະ ການເງິນ.

#### (ii) ພື້ນຖານການກະກຽມ

ທະນາຄານ ບັນທຶກບັນຊີເປັນສະກຸນເງິນກີບ (“ກີບ”) ແລະ ໄດ້ສ້າງເອກະສານລາຍງານການເງິນເປັນຫົວໜ່ວຍລ້ານກີບ (“ລ້ານກີບ”) ໂດຍສອດ ຄ່ອງກັບດຳລັດເລກທີ 02/ນຍ ຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ລົງວັນທີ 22 ມີນາ 2000, ກົດໝາຍການບັນຊີຂອງ ສປປ ລາວ ແລະ ກົດ ລະບຽບວາງອອກໂດຍ ທະນາຄານແຫ່ງ ສປປ ລາວ ທີ່ກ່ຽວຂ້ອງກັບການກະກຽມ ແລະ ການນຳສະເໜີເອກະສານລາຍງານການເງິນ.

ເອກະສານລາຍງານການເງິນສະບັບນີ້ ໄດ້ຖືກສ້າງຂຶ້ນໃຫ້ສອດຄ່ອງກັບນະໂຍບາຍການບັນຊີ, ຂັ້ນຕອນ ແລະ ການລາຍງານທາງການບັນຊີທີ່ຖືກຍອມຮັບທົ່ວໄປໃນ ສປປ ລາວ, ດັ່ງນັ້ນ ໃບລາຍງານຜົນການດຳເນີນງານ, ໃບລາຍງານຖານະການເງິນ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ, ໃບລາຍງານກະແສເງິນສົດ ແລະ ບົດອະທິບາຍຊ້ອນທ້າຍ ເອກະສານລາຍງານການເງິນ ແມ່ນບໍ່ໄດ້ສ້າງຂຶ້ນໃຫ້ຜູ້ທີ່ບໍ່ຮູ້ກ່ຽວກັບຫຼັກການບັນຊີ, ຂັ້ນຕອນ ແລະ ການປະຕິບັດຂອງ ສປປ ລາວ, ສະນັ້ນ, ເອກະສານລາຍງານສະບັບນີ້ບໍ່ມີຈຸດປະສົງເພື່ອນຳສະເໜີຖານະການເງິນ, ຜົນຂອງການດຳເນີນງານ ແລະ ກະແສເງິນສົດອີງຕາມຫຼັກການບັນຊີ ແລະ ການປະຕິບັດການບັນຊີທີ່ຍອມຮັບໂດຍທົ່ວໄປໃນບັນດາປະເທດທີ່ນອກເໜືອຈາກ ສປປ ລາວ.

**(iii) ພື້ນຖານການປະເມີນ**

ເອກະສານລາຍງານການເງິນ ແມ່ນຖືກກະກຽມຂຶ້ນຕາມຫຼັກການຕົ້ນທຶນເດີມດັ່ງທີ່ໄດ້ກ່າວໄວ້ໃນນະໂຍບາຍການບັນຊີ, ນະໂຍບາຍການບັນຊີດັ່ງກ່າວແມ່ນໄດ້ຖືກນຳໃຊ້ຢ່າງຕໍ່ເນື່ອງໂດຍທະນາຄານ ແລະ ສອດຄ່ອງກັບຫຼັກການທີ່ເຄີຍໄດ້ນຳໃຊ້ໃນປີຜ່ານມາ, ຍົກເວັ້ນແຕ່ບາງກໍລະນີທີ່ໄດ້ລະບຸໄວ້.

**(iv) ການໃຊ້ດຸນພິນິດ ແລະ ການຄາດຄະເນທາງບັນຊີ**

ໃນການກະກຽມເອກະສານລາຍງານການເງິນຂອງທະນາຄານ, ຜູ້ບໍລິຫານຕ້ອງໄດ້ໃຊ້ດຸນພິນິດ, ການຄາດຄະເນ ແລະ ຂໍ້ສົມມຸດຕິຖານຫຼາຍປະການຕາມຄວາມຮູ້ເຂົ້າໃຈຂອງຄະນະຜູ້ບໍລິຫານຕໍ່ສະພາບປະຈຸບັນ ແລະ ການປະຕິບັດທີ່ມີຜົນກະທົບຕໍ່ການກຳນົດນະໂຍບາຍການບັນຊີ ແລະ ການລາຍງານຈຳນວນເງິນທີ່ກ່ຽວກັບ ຊັບສິນ, ໜີ້ສິນ, ລາຍຮັບ, ລາຍຈ່າຍ ແລະ ການເປີດເຜີຍໜີ້ສິນທີ່ອາດເກີດຂຶ້ນໃນວັນທີລາຍງານ.

ການຄາດຄະເນ ແລະ ການສົມມຸດຖານແມ່ນໄດ້ຖືກທົບທວນຄືນຢ່າງຕໍ່ເນື່ອງ. ຜົນໄດ້ຮັບທີ່ແທ້ຈິງອາດຈະແຕກຕ່າງຈາກການປະເມີນຂອງການບໍລິຫານ ແລະ ສ່ວນແຕກຕ່າງເຫຼົ່ານັ້ນ ອາດຈະມີຄວາມຈຳເປັນ ທີ່ຈະຕ້ອງມີການແກ້ໄຂໃຫ້ເປັນທີ່ຍອມຮັບໄລຍະທີ່ການປະເມີນຖືກມີການແກ້ໄຂ ແລະ ໃນໄລຍະທີ່ຈະໄດ້ຮັບຜົນກະທົບໃນອະນາ ຄົດ.

**(ຂ) ປີການບັນຊີ**

ປີການບັນຊີຂອງທະນາຄານ ແມ່ນເລີ່ມຈາກ ວັນທີ 1 ມັງກອນ ແລະ ສິ້ນສຸດໃນ ວັນທີ 31 ທັນວາ.

**(ຄ) ລາຍການເຄື່ອນໄຫວຂອງສະກຸນເງິນຕາຕ່າງປະເທດ**

ທະນາຄານໄດ້ປະຕິບັດລະບົບການບັນຊີ ແລະ ບັນທຶກທຸກລາຍການເຄື່ອນໄຫວຕາມສະກຸນເງິນເດີມ, ຊັບສິນ ແລະ ໜີ້ສິນທາງການເງິນ ທີ່ເປັນສະກຸນເງິນຕາຕ່າງປະເທດໃນມື້ລາຍງານ ແມ່ນໄດ້ແປງຄ່າເປັນສະກຸນເງິນກີບ ຕາມອັດຕາແລກປ່ຽນໃນມື້ສ້າງໃບລາຍງານຖານະການເງິນ ສ່ວນຜິດດ່ຽງເງິນຕາຕ່າງປະເທດທີ່ເກີດຂຶ້ນຈາກການຕີມູນຄ່າຊັບສິນ ແລະ ໜີ້ສິນ ໃນມື້ສ້າງໃບລາຍງານຖານະການເງິນ ແມ່ນຖືກບັນທຶກເຂົ້າໃນໃບລາຍງານຜົນການດຳເນີນງານ.

ອັດຕາແລກປ່ຽນເງິນກີບທີ່ນຳໃຊ້ປຽບທຽບກັບເງິນຕາຕ່າງປະເທດ ມີດັ່ງນີ້:

| | | 31 ທັນວາ 2022 | 31 ທັນວາ 2021 |
|---|---|---|---|
|  | ໂດລາສະຫາລັດ (“ໂດລາ”) | **17.180,00** | **10.800,00** |
|  | ບາດໄທ (“ບາດ”) | **498,00** | **326,20** |
|  | ຢູໂຣ (“ຢູໂຣ”) | **18.194,00** | **12.503,00** |

## 3. ຜົນກະທົບຈາກການປັບປຸງບັນຊີ

ໃນລະຫວ່າງປີ 2022, ທະນາຄານໄດ້ຄົ້ນພົບວ່າການລົງທຶນໃນຫຼັກຊັບໃນ LVMC Holdings ບໍ່ເໝາະສົມທີ່ຈະຖືກຈັດປະເພດ ແລະ ນຳສະເໜີພາຍໃຕ້ “ການລົງທຶນໃນພັນທະບັດ” ໃນວັນທີ 31 ທັນວາ 2021 ເຊິ່ງເປັນຜົນມາຈາກຜູ້ບໍລິຫານໄດ້ເລືອກໃຊ້ສິດປ່ຽນແປງສະພາບໃນ ເດືອນ ເມສາ 2021 ແລະ ຄວນຈະຖືກຈັດປະເພດເປັນ ການລົງທຶນໃນຕາສານທຶນ ທີ່ກຳນົດໂດຍມູນຄ່າຍຸດຕິທຳຕໍ່ກຳໄລ ຫຼື ຂາດທຶນ (“FVTPL”). ດັ່ງນັ້ນ, ໃນວັນທີ 31 ທັນວາ 2021, ກຳໄລຈາກການແປງສະພາບຈາກພັນທະບັດແປງສະພາບເປັນຕາສານທຶນທີ່ກຳນົດໂດຍ FVTPL ແມ່ນຕໍ່າກວ່າຄວາມເປັນຈິງ 187.526 ລ້ານກີບ, ກຳໄລຈາກການປະເມີນມູນຄ່າຄືນຂອງຕາສານທຶນທີ່ກຳນົດໂດຍ FVTPL ແມ່ນຕໍ່າກວ່າຄວາມເປັນຈິງ 30.098 ລ້ານກີບ, ກຳໄລສຸດທິຈາກເງິນຕາຕ່າງປະເທດແມ່ນສູງກວ່າຄວາມເປັນຈິງ 42.360 ລ້ານກີບ ແລະ ລາຍຈ່າຍອາກອນກຳໄລແມ່ນສູງກວ່າຄວາມເປັນຈິງ 3.082 ລ້ານກີບ. ກຳໄລສະສົມ ແມ່ນຍັງຕໍ່າກວ່າຄວາມເປັນຈິງ 160.512 ລ້ານກີບ ແລະ ຄັງສຳຮອງຕາມກົດໝາຍ ແມ່ນຍັງຕໍ່າກວ່າຄວາມເປັນຈິງ 17.834 ລ້ານກີບ. ທະນາຄານໄດ້ແກ້ໄຂຜົນກະທົບດັ່ງກ່າວ ໂດຍການປັບຄືນບັນດາເອກະສານລາຍງານການເງິນທີ່ໄດ້ຮັບຜົນກະທົບ ສຳລັບ ປີສິ້ນສຸດ ວັນທີ 31 ທັນວາ 2021 ເຊິ່ງຖືກນຳສະ ເໜີເປັນຕົວເລກທີ່ສອດຄ່ອງກັນ ໃນບົດລາຍງານການເງິນ ສຳລັບ ປີສິ້ນສຸດ ວັນທີ 31 ທັນວາ 2022.

31 ທັນວາ (ລ້ານກີບ)

| | ຕາມທີ່ໄດ້ລາຍງານກ່ອນໜ້ານີ້ | ຜົນກະທົບຂອງການປັບປຸງບັນຊີ | ຫຼັງຈາກການປັບປຸງໃໝ່ |
|---|---|---|---|
| **ໃບລາຍງານຖານະການເງິນ ວັນທີ 31 ທັນວາ 2021** | | | |
| **ຊັບສິນ** | | | |
| ການລົງທຶນໃນພັນທະບັດ | 324.000 | (324.000) | - |
| ການລົງທຶນໃນຕາສານທຶນທີ່ກຳນົດໂດຍ FVTPL | - | 499.264 | 499.264 |
| ຊັບສິນອື່ນໆ | 428.246 | 1.000 | 429.246 |
| **ໜີ້ສິນ** | | | |
| ອາກອນຄ້າງຈ່າຍ | (3.336) | 2.082 | (1.254) |
| **ທຶນ ແລະ ຄັງສຳຮອງອື່ນໆ** | | | |
| ກຳໄລສະສົມ | (11.096) | (160.512) | (171.608) |
| ຄັງສະສົມຕາມລະບຽບການ | (34.845) | (17.834) | (52.679) |
| | | | |
| **ໃບລາຍງານຜົນການດຳເນີນງານ ສຳລັບປີການບັນຊີສິ້ນສຸດ ວັນທີ 31 ທັນວາ 2021** | | | |
| (ກຳໄລ) / ຂາດທຶນສຸດທິຈາກອັດຕາແລກປ່ຽນ | (6.364) | 42.360 | 35.996 |
| ກຳໄລຈາກການແປງສະພາບຈາກພັນທະບັດແປງສະພາບເປັນຕາສານທຶນທີ່ກຳນົດໂດຍ FVTPL | - | (187.526) | (187.526) |
| ກຳໄລຈາກການປະເມີນມູນຄ່າຄືນຂອງຕາສານທຶນທີ່ກຳນົດໂດຍ FVTPL | - | (30.098) | (30.098) |
| ລາຍຈ່າຍອາກອນກຳໄລ | (3.082) | 3.082 | - |
| | | | |
| **ໃບລາຍງານກະແສເງິນສົດ** | | | |
| **ກະແສເງິນສົດຈາກກິດຈະກຳການດຳເນີນງານ** | | | |
| ກຳໄລກ່ອນອາກອນ | (15.412) | (175.265) | (190.677) |
| **ລາຍການປັບປຸງສຳລັບລາຍການທີ່ບໍ່ແມ່ນເງິນ** | | | |
| (ກຳໄລ) / ຂາດທຶນສຸດທິຈາກການຊື້ຂາຍເປັນເງິນຕາຕ່າງປະເທດ | (6.364) | 42.360 | 35.996 |
| ກຳໄລຈາກການແປງສະພາບຈາກພັນທະບັດແປງສະພາບເປັນຕາສານທຶນທີ່ກຳນົດໂດຍ FVTPL | - | (187.526) | (187.526) |
| ກຳໄລຈາກການປະເມີນມູນຄ່າຄືນຂອງຕາສານທຶນທີ່ກຳນົດໂດຍ FVTPL | - | (30.098) | (30.098) |

## 4. ນະໂຍບາຍການບັນຊີທີ່ສຳຄັນ

ນະໂຍບາຍການບັນຊີທີ່ສຳຄັນ ແມ່ນລະບຸໄວ້ດັ່ງລຸ່ມນີ້ ໄດ້ຖືກນຳໃຊ້ຢ່າງຕໍ່ເນື່ອງເພື່ອໃຫ້ສອດຄ່ອງຕະຫຼອດທັງໄລຍະເວລາໃນການກະກຽມເອກະສານລາຍງານການເງິນ.

### (ກ) ການຮັບຮູ້ລາຍຮັບ ແລະ ລາຍຈ່າຍດອກເບ້ຍ

ລາຍຮັບ ແລະ ລາຍຈ່າຍດອກເບ້ຍ ແມ່ນໄດ້ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ ໂດຍອີງຕາມຫຼັກການບັນຊີ ແບບຄ້າງຮັບຄ້າງຈ່າຍ ທີ່ນຳໃຊ້ວິທີຄິດໄລ່ແບບສະເໝີຕົວ ແລະ ອັດຕາດອກເບ້ຍຕາມທີ່ໄດ້ກຳນົດຢູ່ໃນສັນຍາເງິນກູ້/ເງິນຝາກກັບລູກຄ້າ.

ການຮັບຮູ້ລາຍຮັບດອກເບ້ຍຄ້າງຮັບ ຈະຖືກລະງັບກໍ່ຕໍ່ເມື່ອເງິນກູ້ໄດ້ກາຍເປັນເງິນກູ້ທີ່ບໍ່ເກີດດອກອອກຜົນ ຫຼື ເມື່ອຜູ້ບໍລິຫານ ເຊື່ອວ່າຜູ້ກູ້ຢືມບໍ່ມີຄວາມສາມາດຊຳລະດອກເບ້ຍ ແລະ ຕົ້ນທຶນໄດ້. ລາຍຮັບດອກເບ້ຍຂອງເງິນກູ້ດັ່ງກ່າວຈະຖືກບັນທຶກໃນໃບລາຍງານຜົນການດຳເນີນງານກໍ່ຕໍ່ເມື່ອໄດ້ຮັບດອກເບ້ຍຕົວຈິງເທົ່ານັ້ນ.

### (ຂ) ການຮັບຮູ້ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ

ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການທາງການເງິນ ແມ່ນລວມມີຄ່າທຳນຽມທີ່ໄດ້ຮັບຈາກການເຄື່ອນໄຫວໂອນເງິນຕ່າງໆ, ການຊຳລະການຊື້ຂາຍ, ການແລກປ່ຽນເງິນຕາຕ່າງປະເທດ, ລາຍການເຄື່ອນໄຫວຕູ້ກົດເງິນສົດ ແລະ ໜັງສືຮັບຮອງທາງການເງິນ.

ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການທາງການເງິນ ແມ່ນໄດ້ຮັບຮູ້ໃນໃບລາຍງານຜົນໄດ້ຮັບຕາມຫຼັກເງິນສົດ.

ລາຍຮັບຈາກການໃຫ້ບໍລິການຕ່າງໆຂອງສາຂາ ແມ່ນໄດ້ຕັ້ງຄ້າງຮັບຕາມມາດຕະຖານດັ່ງລຸ່ມນີ້:

(i) ຄ່າທຳນຽມແລະຄ່າບໍລິການໃນການຈັດສິນເຊື່ອພ້ອມທັງສິ່ງອຳນວຍຄວາມສະດວກອື່ນໆ ທີ່ໃຫ້ບໍລິການແກ່ລູກຄ້າແມ່ນຮັບຮູ້ເມື່ອມີການເຄື່ອນໄຫວດັ່ງກ່າວ;

(ii) ຄ່າທຳນຽມຂໍ້ຜູກມັດ ແລະ ຄ່າຮັບປະກັນພ້ອມກັບສິ່ງອຳນວຍຄວາມສະດວກອື່ນໆ ທີ່ໃຫ້ບໍລິການແກ່ລູກຄ້າແມ່ນຮັບຮູ້ເມື່ອມີການເຄື່ອນໄຫວດັ່ງກ່າວ; ແລະ

(iii) ຄ່າບໍລິການ ແລະ ຄ່າຈັດການ ແມ່ນໄດ້ຮັບຮູ້ ເມື່ອການເຄື່ອນໄຫວດັ່ງກ່າວເກີດຂຶ້ນ.

**(ຄ) ເງິນສົດ ແລະ ທຽບເທົ່າເງິນສົດ**

ເງິນສົດ ແລະ ທຽບເທົ່າເງິນສົດແມ່ນລວມມີ: (i) ເງິນສົດ, ແລະ (ii) ເງິນຝາກກັບທະນາຄານ ແລະ ເງິນລົງທຶນໄລຍະສັ້ນທີ່ມີສະພາບຄ່ອງຕົວສູງໂດຍມີອາຍຸຄົບກຳນົດ ຕ່ຳກວ່າຫຼືເທົ່າກັບ30 ວັນ ເຊິ່ງພ້ອມທີ່ຈະປ່ຽນເປັນເງິນສົດໄດ້.

**(ງ) ເງິນກູ້ໃຫ້ລູກຄ້າ**

ເງິນກູ້ ແລະ ເງິນຈ່າຍລ່ວງໜ້າ ແມ່ນຖືກຮັບຮູ້ຕາມທີ່ທະນາຄານສະໜອງເງິນໃຫ້ລູກຄ້າ ສຳລັບຈຸດປະສົງອື່ນຫຼາຍກວ່າໄດ້ກຳໄລໃນໄລຍະສັ້ນ, ຊຶ່ງສະແດງຍອດເຫຼືອຂອງເງິນຕົ້ນທຶນລົບເງິນແຮຄ່າເສື່ອມມູນຄ່າ ສຳລັບໜີ້ເສຍ ແລະ ໜີ້ສົງໄສຈະສູນ ຂອງເງິນກູ້ ແລະ ເງິນລ່ວງໜ້າ, ເພື່ອສະທ້ອນມູນຄ່າວ່າຈະໄດ້ຮັບ. ເງິນກູ້ ແລະ ເງິນລ່ວງໜ້າ, ຍົກເວັ້ນເງິນເບີກເກີນບັນຊີ, ແມ່ນສະແດງໄວ້ສະເພາະດອກເບ້ຍຄ້າງຮັບ.

**(ຈ) ເງິນແຮສຳລັບໜີ້ຕ້ອງຮັບທວງຍາກ(“NPL”)**

ນະໂຍບາຍສິນເຊື່ອໃນຊ່ວງການແຜ່ລະບາດຂອງ ພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID-19) ສະບັບເລກທີ 238/ທຫລ ລົງວັນທີ 26 ມີນາ 2020 ແລະ ສະບັບເລກທີ 256/ທຫລ ລົງວັນທີ 13 ພຶດສະພາ2021.

ໃນປີຜ່ານມາ ທຫລ ໄດ້ອອກໜັງສືສະບັບເລກທີ 238/ທຫລ ລົງວັນທີ 26 ມີນາ 2020 ໂດຍມີວັດຖຸປະສົງເພື່ອຫຼຸດຜ່ອນຜົນກະທົບຈາກ COVID-19 ຕໍ່ສະຖານະການເງິນຂອງຜູ້ກູ້ຢືມ ແລະ ໄດ້ອອກນະໂຍບາຍເພີ່ມເຕີມສະບັບເລກທີ 256/ທຫລ ລົງວັນທີ 13 ພຶດສະພາ 2021.
ຂໍ້ຕົກລົງນີ້ນຳໃຊ້ສຳລັບບຸກຄົນ ແລະ ນິຕິບຸກຄົນທີ່ເປັນລູກຄ້າເງິນກູ້ທີ່ໄດ້ຮັບຜົນກະທົບຈາກພະຍາດອັກເສບປອດຈາກເຊື້ອຈຸລະໂລກສາຍພັນໃໝ່

1. ໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນເລື່ອນໄລຍະເວລາຊຳລະໜີ້ທັງຕົ້ນທຶນແລະດອກເບ້ຍ, ປັບຫຼຸດອັດຕາດອກເບ້ຍ ແລະ ຄ່າທຳນຽມໃຫ້ລູກໜີ້ຕາມທີ່ເຫັນວ່າເໝາະສົມ.
2. ສະໜອງເງິນກູ້ບ້ວງໃໝ່ໃຫ້ແກ່ລູກໜີ້ ແລະ ຜູ້ທີ່ໄດ້ຮັບຜົນກະທົບຈາກພະຍາດ ໂຄວິດ-19 ດັ່ງກ່າວ ເພື່ອຟື້ນຟູທຸລະກິດຂອງພວກເຂົາ.
3. ທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ໄດ້ປະຕິບັດຕາມມາດຕະການຕາມທີ່ກຳນົດໄວ້ຈະໄດ້ຮັບນະໂຍບາຍຜ່ອນຜັນຍົກເວັ້ນການປະຕິບັດຕາມຂໍ້ຕົກລົງວ່າດ້ວຍການຈັດຊັ້ນໜີ້ ແລະ ການຫັກເງິນແຮໜີ້ທີ່ຖືກຈັດຊັ້ນຂອງທະນາຄານທຸລະກິດສະບັບເລກທີ 512/ທຫລ ລົງວັນທີ 29 ມິຖຸນາ 2018, ລະບຽບວ່າດ້ວຍການຈັດຊັ້ນໜີ້ ແລະ ຫັກເງິນແຮໜີ້ທີ່ຖືກຈັດຊັ້ນຂອງສະຖາບັນການເງິນຈຸລະພາກສະບັບເລກທີ 02/ທຫລ, ລົງວັນທີ 04 ກຸມພາ 2015 ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງສະຫະກອນສິນເຊື່ອ ແລະ ເງິນຝາກປະຫຍັດສະບັບເລກທີ 03/ທຫລ ລົງວັນທີ 20 ມິຖຸນາ 2008 ດັ່ງນີ້:

    (1) ການຈັດຊັ້ນໜີ້ພາຍຫຼັງການປັບປຸງໂຄງສ້າງ ແມ່ນຮັກສາໄວ້ຊັ້ນເດີມ, ລູກໜີ້ທີ່ໄດ້ຮັບຜົນກະທົບທີ່ຖືກຈັດຊັນໜີ້ຕ້ອງຮັບທວງຍາກແຕ່ວັນທີ 01 ມັງກອນ 2020 ເປັນຕົ້ນມາສາມາດຈັດຊັ້ນເປັນໜີ້ຄວນເອົາໃຈໃສ່;
    (2) ການປັບປຸງໂຄງສ້າງໜີ້ແມ່ນສາມາດປະຕິບັດໄດ້ເກີນ2ຄັ້ງ;
    (3) ທະນາຄານທຸລະກິດ ແລະ ສະຖາບັນການເງິນສາມາດປ່ອຍສິນເຊື່ອບ້ວງໃໝ່ເພື່ອເປັນທຶນໝູນວຽນເສີມສະພາບຄ່ອງໃຫ້ລູກໜີ້ທີ່ໄດ້ຮັບຜົນກະທົບຈາກ ໂຄວິດ-19 ທີ່ຖືກຈັດຊັ້ນ ເປັນໜີ້ຕ້ອງຮັບທວງຍາກແຕ່ວັນທີ 01 ມັງກອນ 2020 ເປັນຕົ້ນມາ.

**ມາດຕະການ**

1. ປັບປຸງໂຄງສ້າງໜີ້ຄືນໃໝ່ໃຫ້ແກ່ລູກຄ້າໜີ້ທີ່ໄດ້ຮັບຜົນກະທົບຈາກພະຍາດ ໂຄວິດ-19 ໂດຍກຳນົດອາຍຸສັນຍາ ຫຼື ງວດຊຳລະຕົ້ນທຶນ ແລະ ດອກເບ້ຍ, ອັດຕາດອກເບ້ຍຄືນໃໝ່ ໃຫ້ສອດຄ່ອງກັບຄວາມສາມາດໃນການຊຳລະໜີ້ຕົວຈິງຂອງລູກໜີ້. ໃນນັ້ນ, ໃຫ້ມີໄລຍະເວລາປອດໜີ້ຕົ້ນທຶນ ແລະ ດອກເບ້ຍເປັນເວລາ 1ປີ ຫຼື ຕາມການຕົກລົງລະຫວ່າງເຈົ້າໜີ້ ແລະ ລູກໜີ້;
2. ສະໜອງເງິນກູ້ບ້ວງໃໝ່ໃຫ້ແກ່ລູກຄ້າໜີ້ ແລະ ຜູ້ທີ່ໄດ້ຮັບຜົນກະທົບຈາກພະຍາດ ໂຄວິດ-19 ດັ່ງກ່າວ;

**ນະໂຍບາຍເພີ່ມເຕີມຕາມໜັງສືເລກທີ 256/ທຫລ ລົງວັນທີ 13 ພຶດສະພາ 2021.**

- ໃຫ້ທະນາຄານທຸລະກິດ, ສະຖາບັນການເງິນຈຸລະພາກທີ່ຮັບຝາກເງິນ ແລະ ບໍ່ຮັບຝາກເງິນເລື່ອນເວລາຊຳລະ
  ໜີ້ທັງຕົ້ນທຶນ ແລະ ດອກເບ້ຍໃຫ້ແກ່ລູກຄ້າເງິນກູ້ (ປະເພດສິນເຊື່ອເພື່ອການຊົມໃຊ້) ເປັນເວລາ 3 ເດືອນນັບແຕ່ ເດືອນ ພຶດສະພາ ຫາ ເດືອນ ກໍລະກົດ 2021 ຕາມເງື່ອນໄຂທີ່ໄດ້ກຳນົດດັ່ງລຸ່ມນີ້.

**ເງື່ອນໄຂໃນການພິຈາລະນາ**

- ລູກຄ້າທີ່ຈະໄດ້ຮັບນະໂຍບາຍເລື່ອນໄລຍະເວລາຊຳລະໜີ້ ຕ້ອງແມ່ນຜູ້ທີ່ໄດ້ຮັບຜົນກະທົບຈາກການລະບາດ

ຂອງພະຍາດ COVID-19 ພາໃຫ້ບໍ່ໄດ້ຮັບເງິນເດືອນ ຫຼື ຄ່າແຮງງານ ຫຼື ໄດ້ຮັບພຽງສ່ວນໃດສ່ວນໜຶ່ງພາໃຫ້ບໍ່ສາມາດຊໍາລະໜີ້ ຫຼື ຄ່າງວດໄດ້ໂດຍມີການຢັ້ງຢືນຈາກບ່ອນເຮັດວຽກດັ່ງກ່າວ;

- ສໍາລັບລູກຄ້າທີ່ມີແຫຼ່ງລາຍຮັບຈາກການດໍາເນີນທຸລະກິດທີ່ໄດ້ຮັບຜົນກະທົບຈາກພະຍາດ COVID-19 ແມ່ນພິຈາລະນາຕາມຖານະການເງິນ ແລະ ສະພາບຕົວຈິງ.

**ກົດລະບຽບການ ເລກທີ 512/ທຫລ ທີ່ມີຜົນນໍາໃຊ້ຈາກວັນທີ 1ຕຸລາ 2018**

ອີງຕາມກົດລະບຽບການຂອງທະນາຄານ ແຫ່ງ ສປປ ລາວ ເລກທີ 512/ທຫລ ("ທຫລ 512") ວັນທີ 29 ມິຖຸນາ2018 ແລະ ມີຜົນສັກສິດແຕ່ ວັນທີ 1 ຕຸລາ 2018, ທະນາຄານຈະຕ້ອງໄດ້ຈັດຊັ້ນເງິນກູ້ ແລະ ເງິນແຮສໍາລັບຂາດທຶນຈາກການເສື່ອມຄ່າ. ດັ່ງນັ້ນ, ເງິນກູ້ຈະແຍກອອກເປັນຊັ້ນໜີ້ປົກກະຕິ ຫຼື ທີ່ຄວນເອົາໃຈໃສ່ ຫຼື ເງິນກູ້ໜີ້ຕ້ອງຮັບທວງຍາກ, ຂຶ້ນຢູ່ກັບສະຖານະທີ່ຄ້າງຊໍາລະເງິນ ແລະ ປັດໄຈອື່ນໆ, ເງິນກູ້ທີ່ຢູ່ໃນຊັ້ນໜີ້ປົກກະຕິ (ກຸ່ມ A)ແມ່ນຖືວ່າເປັນເງິນກູ້ປົກກະຕິ, ເງິນກູ້ທີ່ຢູ່ໃນຊັ້ນໜີ້ທີ່ຄວນເອົາໃຈໃສ່(ກຸ່ມB) ແມ່ນຖືວ່າເປັນເງິນກູ້ຊັ້ນທີ່ຄວນເອົາໃຈໃສ່ ແລະ ຊັ້ນເງິນກູ້ທີ່ໜີ້ຕໍ່າກວ່າມາດຕະຖານ (ກຸ່ມC) ຫຼື ໜີ້ສົງໄສ (ກຸ່ມD), ຫຼື ໜີ້ສູນ (ກຸ່ມE) ແມ່ນຖືວ່າເປັນເງິນກູ້ໜີ້ຕ້ອງຮັບທວງຍາກ.

ອີງຕາມ ລະບຽບການ 512/ທຫລ, ທະນາຄານຈະໄດ້ຫັກເງິນແຮທົ່ວໄປ ໃນອັດຕາ 0,5% ຂອງຍອດເຫຼືອເງິນກູ້ຊັ້ນປົກກະຕິໃນມື້ທີ່ລາຍງານ, ເຊັ່ນດຽວກັນນັ້ນ, ເງິນແຮສະເພາະ ສໍາລັບເງິນກູ້ຊັ້ນທີ່ຄວນເອົາໃຈໃສ່, ຊັ້ນຕໍ່າກວ່າມາດຕະຖານ, ຊັ້ນສົງໄສ ແລະ ຊັ້ນໜີ້ສູນ ແມ່ນກໍານົດຂຶ້ນໂດຍການຄູນຍອດຄົງເຫຼືອຂອງແຕ່ລະລາຍການເງິນກູ້ລົບໃຫ້ມູນຄ່າຫຼັກຊັບຄໍ້າປະກັນ (ຖ້າມີ) ຕາມລະບຽບຂອງ ທຫລ ກັບອັດຕາຂອງເງິນແຮ ຂອງເງິນກູ້ແຕ່ລະຊັ້ນ ດັ່ງລຸ່ມນີ້:

| ການຈັດຊັ້ນໜີ້ | ຈໍານວນມື້ເກີນກໍານົດຈ່າຍ | ອັດຕາເງິນແຮ |
|---|---|---|
| ໜີ້ປົກກະຕິ (A) | 0 – 29ວັນ | 0,5% |
| ໜີ້ຄວນເອົາໃຈໃສ່ (B) | 30 – 89 ວັນ | 3% |
| ໜີ້ຕໍ່າກວ່າມາດຕະຖານ (C) | 90 – 179 ວັນ | 20% |
| ໜີ້ສົງໄສ (D) | 180 – 359 ວັນ | 50% |
| ໜີ້ສູນ (E) | ຫຼາຍກວ່າ 360 ວັນ | 100% |

ອັດຕາສ່ວນສູງສຸດຂອງຜົນປະໂຫຍດຈາກຫຼັກຊັບຄໍ້າປະກັນທີ່ໄດ້ຮັບອະນຸຍາດພາຍໃຕ້ລະບຽບການ 512/ທຫລ ມີດັ່ງນີ້:

| ປະເພດຫຼັກຊັບ ຄໍ້າປະກັນ | ອັດຕາສ່ວນສູງສຸດທີ່ອະນຸຍາດ |
|---|---|
| (ກ) ເງິນຝາກກັບທະນາຄານ | |
| - ເປັນສະກຸນເງິນດຽວກັບເງິນກູ້ | 100% |
| - ບໍ່ເປັນສະກຸນເງິນດຽວກັບເງິນກູ້ | 95% |
| (ຂ) ທອງຄໍາທີ່ຮັກສາຢູ່ໃນທະນາຄານ | 90% |
| (ຄ) ພັນທະບັດ ລັດຖະບານ ແລະ ພັນທະບັດ ທະນາຄານ ແຫ່ງ ສປປ ລາວ | |
| - ຖ້າເປັນສະກຸນເງິນດຽວກັບເງິນກູ້ | |
| • ຖ້າມີອາຍຸຄົງເຫຼືອ ຕໍ່າກວ່າ 1 ປີ | 100% |
| • ຖ້າມີອາຍຸຄົງເຫຼືອ ແຕ່ 1 ປີ ຫາ 5 ປີ | 90% |
| • ຖ້າມີອາຍຸຄົງເຫຼືອ ແຕ່ 5 ປີ ຂຶ້ນໄປ | 80% |
| - ຖ້າບໍ່ເປັນສະກຸນເງິນດຽວກັບເງິນກູ້ | |
| • ຖ້າມີອາຍຸຄົງເຫຼືອ ຕໍ່າກວ່າ 1 ປີ | 95% |
| • ຖ້າມີອາຍຸຄົງເຫຼືອ ແຕ່ 1 ປີ ຫາ 5 ປີ | 85% |
| • ຖ້າມີອາຍຸຄົງເຫຼືອ ແຕ່ 5 ປີ ຂຶ້ນໄປ | 75% |
| (ງ) ເງິນຝາກກັບທະນາຄານອື່ນ ແລະ ສະຖາບັນການເງິນອື່ນ | |
| • ຖ້າມີອາຍຸຄົງເຫຼືອ ຕໍ່າກວ່າ 1 ປີ | 80% |
| • ຖ້າມີອາຍຸຄົງເຫຼືອ ແຕ່ 1 ປີ ຫາ 5 ປີ | 75% |
| • ຖ້າມີອາຍຸຄົງເຫຼືອ ແຕ່ 5 ປີ ຂຶ້ນໄປ | 70% |
| (ຈ) ໜັງສືສິນເຊື່ອ ຫຼື ໜັງສືສິນເຊື່ອ ແບບສໍາຮອງ | 95% |
| (ສ) ໜັງສືຄໍ້າປະກັນ ຫຼື ໜັງສືຄໍ້າປະກັນທະນາຄານ | 90% |
| (ຊ) ອະສັງຫາລິມະຊັບ | 40% |

ໃນການປ່ຽນແປງຂອງເງິນແຮສຳລັບເງິນກູ້ໜີ້ຕ້ອງຮັບທວງຍາກ ແມ່ນຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ "ລາຍຈ່າຍເງິນແຮສະເພາະສຸດທິ", ຄັງເງິນແຮສະສົມສະເພາະ ທີ່ຖືກບັນທຶກຢູ່ໃນໃບສະຫຼຸບຊັບສົມບັດ "ເງິນກູ້ ແລະ ເງິນລ່ວງໜ້າ ໃຫ້ລູກຄ້າ, ເງິນແຮສະເພາະສຸດທິ".

ອີງຕາມລະບຽບການບັນຊີທີ່ກ່ຽວຂ້ອງຕາມກົດໝາຍ ທະນາຄານ ແຫ່ງ ສປປ ລາວ, ຖ້າມີການປ່ຽນແປງໃນເງິນແຮທົ່ວໄປສຳລັບກິດຈະກຳສິນເຊື່ອຈະບັນທຶກໃນໃບລາຍງານຜົນການດຳເນີນງານເປັນ "ລາຍຈ່າຍໃນການດຳເນີນງານອື່ນໆ", ສຳລັບລາຍຈ່າຍເງິນແຮທົ່ວໄປ ແລະ ລາຍຮັບອື່ນໆຈາກການດຳເນີນງານ, ສຳລັບການປີ້ນກັບລາຍຈ່າຍເງິນແຮທົ່ວໄປ ແລະ ຍອດເຫຼືອຂອງເງິນແຮທົ່ວໄປທີ່ປີ້ນກັບຈະຖືກບັນທຶກໃນໃບສະຫຼຸບຊັບສົມບັດ ເປັນ "ເງິນແຮທົ່ວໄປສຳລັບກິດຈະກຳການປ່ອຍສິນເຊື່ອ" ພາຍໃຕ້ທຶນ ແລະ ຄັງສຳຮອງ ຂອງທະນາຄານ.

**(ສ) ການລ້າງໜີ້ສູນ**

ອີງຕາມລະບຽບການ 512/ທຫລ, ເງິນກູ້ຈະຖືກລ້າງອອກບໍ່ໃຫ້ກາຍ 90 ວັນ ຫຼັງຈາກຖືກຈັດປະເພດໃຫ້ເປັນໜີ້ສູນ.

ເງິນກູ້ທີ່ຖືກລ້າງອອກ ແມ່ນໃຫ້ບັນທຶກຢູ່ນອກໃບສະຫຼຸບຊັບສົມບັດ ເພື່ອຕິດຕາມ ແລະ ລວບລວມ, ຈຳນວນເງິນທີ່ເກັບໄດ້ຈາກເງິນກູ້ທີ່ລ້າງອອກກ່ອນໜ້ານີ້ ແລະ ລວມທັງລາຍໄດ້ຈາກການຂາຍຫຼັກຊັບຄ້ຳປະກັນ ຂອງເງິນກູ້ເຫຼົ່ານັ້ນ ຈະຕ້ອງຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ ເມື່ອມີການຮັບເກີດຂຶ້ນ.

**(ຊ) ເງິນແຮ ສຳລັບພາລະຜູກພັນນອກໃບສະຫຼຸບຊັບບັດ**

ອີງຕາມຂໍ້ຕົກລົງ ເລກທີ 512/ທຫລ, ທະນາຄານ ແມ່ນບໍ່ໄດ້ກຳນົດໃຫ້ຫັກເງິນແຮ ສຳລັບພາລະຜູກພັນນອກໃບສະຫຼຸບຊັບສົມບັດ, ຍົກເວັ້ນ ໃນກໍລະນີທະນາຄານໄດ້ເຮັດສັນຍາຄ້ຳປະກັນຈ່າຍເງິນຕາງໜ້າໃຫ້ແກ່ລູກຄ້າ ໃນແຕ່ລະກໍລະນີຂອງການຈ່າຍເງິນ ແມ່ນຖືກຈັດປະເພດ ແລະ ຫັກເງິນແຮສຳລັບໜີ້ສູນ ຕາມນະໂຍບາຍບັນຊີ ທີ່ໄດ້ອະທິບາຍໄວ້ ໃນບົດອະທິບາຍຊ້ອນທ້າຍທີ່ 3 (ຈ).

**(ຍ) ການລົງທຶນໃນຫຼັກຊັບຖືໄວ້ຈົນຄົບກຳນົດ**

ການລົງທຶນໃນຫຼັບຊັບຖືໄວ້ຈົນຄົບກຳນົດ ແມ່ນຫຼັກຊັບປະເພດໜີ້ທີ່ມີກຳນົດການຊຳລະ ແລະ ໄດ້ກຳນົດວັນຄົບກຳນົດໄວ້ແລ້ວ ເຊິ່ງທາງທະນາຄານມີຄວາມຕັ້ງໃຈ ແລະ ສາມາດຖືໄວ້ຈົນຄົບກຳນົດເພື່ອໃຫ້ໄດ້ລາຍຮັບຈາກດອກເບ້ຍ, ເມື່ອຫຼັກຊັບດັ່ງກ່າວຖືກຂາຍກ່ອນວັນຄົບກຳນົດແມ່ນຈະໄດ້ຖືກຈັດປະເພດຄືນໃໝ່ເປັນຫຼັກຊັບປະເພດມີໄວ້ເພື່ອຄ້າ ຫຼື ຫຼັກຊັບປະເພດມີໄວ້ເພື່ອຂາຍ.

ຫຼັກຊັບປະເພດຖືໄວ້ຈົນຄົບກຳນົດເບື້ອງຕົ້ນໄດ້ຖືກຮັບຮູ້ຕາມມູນຄ່າຕົ້ນທຶນ ແລະ ໃນເວລາຕໍ່ມາໄດ້ຖືກນຳສະເໜີຕາມມູນຄ່າຕົ້ນທຶນເດີມ. ສ່ວນເກີນ ແລະ ສ່ວນຫຼຸດທີ່ເກີດຈາກການຈັດຊື້ຫຼັກຊັບແມ່ນຖືກແບ່ງສ່ວນເຂົ້າໃນໃບລາຍງານຜົນການດຳເນີນງານ ເຊິ່ງນຳໃຊ້ແບບວິທີສະເໝີຕົວຕາມໄລຍະເວລາຈາກມື້ທີ່ຊື້ຫາມື້ທີ່ຄົບກຳນົດ.

ພັນທະບັດແປງສະພາບເບື້ອງຕົ້ນໄດ້ຖືກຮັບຮູ້ຕາມມູນຄ່າຕົ້ນທຶນ ແລະ ໃນເວລາຕໍ່ມາໄດ້ຖືກນຳສະເໜີຕາມມູນຄ່າຕົ້ນທຶນເດີມ. ລາຍຮັບດອກເບ້ຍຂອງພັນທະບັດແປງສະພາບ ແມ່ນໄດ້ຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ ເຊິ່ງນຳໃຊ້ແບບວິທີສະເໝີຕົວ ໂດຍໃຊ້ອັດຕາດອກເບ້ຍໜ້າບັດທີ່ລະບຸໄວ້ໃນສັນຍາການຊື້ພັນທະບັດ. ກຳໄລ (ຂາດທຶນ) ຈາກການແປງສະພາບເປັນຕາສານທຶນແມ່ນຖືກຮັບຮູ້ໃນໃບລາຍງານຜົນການດຳເນີນງານ.

ຫຼັກຊັບປະເພດຖືໄວ້ຈົນຄົບກຳນົດເປັນປະຈຳ, ແມ່ນມີການທົບທວນສຳລັບຄ່າເສື່ອມມູນຄ່າ, ເງິນແຮສຳລັບຄ່າເສື່ອມມູນຄ່າຂອງຫຼັກຊັບດັ່ງກ່າວເມື່ອມູນຄ່າຍຸດຕິທຳຂອງເງິນລົງທຶນດັ່ງກ່າວ ຫຼຸດລົງຢ່າງມີສາລະສຳຄັນ ຫຼື ຫຼຸດລົງຢ່າງຕໍ່ເນື່ອງ, ເງິນແຮສຳລັບຄ່າເສື່ອມມູນຄ່າ, ຖ້າມີ ຮັບຮູ້ເປັນ "ກຳໄລ(ຂາດທຶນ) ສຸດທິ ຈາກເງິນລົງທຶນໃນຫຼັກຊັບ" ໃນໃບລາຍງານຜົນການດຳເນີນງານ.

**(ດ) ເຄື່ອງມືທາງດ້ານການເງິນ: ການລົງທຶນໃນທຶນ**

ການລົງທຶນໃນຕາສານທຶນແມ່ນຖືກຈັດປະເພດເປັນການວັດມູນຄ່າຍຸດຕິທຳຜ່ານກຳໄລ ຫຼື ຂາດທຶນ.

**(ຕ) ການລົງທຶນໃນຫົວໜ່ວຍທີ່ກ່ຽວຂ້ອງ**

ຫົວໜ່ວຍທີ່ກ່ຽວຂ້ອງ ແມ່ນຫົວໜ່ວຍທີ່ນັກລົງທຶນມີອິດທິພົນທີ່ມີສາລະສຳຄັນຕໍ່ກັບຫົວໜ່ວຍນັ້ນໆ ແຕ່ບໍ່ມີອຳນາດໃນການຄວບຄຸມຕໍ່ນະໂຍບາຍທາງດ້ານການເງິນ ແລະ ການດຳເນີນງານ.

ຖ້າຫາກຫົວໜ່ວຍນັ້ນໄດ້ຖືຄອງ, ໂດຍກົງ ຫຼື ໂດຍທາງອ້ອມ (ຕົວຢ່າງເຊັ່ນວ່າການຖືຄອງຜ່ານບໍລິສັດຍ່ອຍ), ໂດຍຖືຄອງ 20 ສ່ວນຮ້ອຍ ຫຼື ມີສິດການອອກສຽງຫຼາຍກວ່າ, ສາມາດເວົ້າໄດ້ວ່າຫົວໜ່ວຍດັ່ງກ່າວເປັນຫົວໜ່ວຍທີ່ມີອິດທິພົນທີ່ມີສາລະສຳຄັນ, ຍົກເວັ້ນວ່າມີການສະແດງໃຫ້ເຫັນຢ່າງຈະແຈ້ງວ່າບໍ່ໄດ້ຕົກຢູ່ໃນກໍລະນີດັ່ງກ່າວ.

ບົດລາຍງານການເງິນນີ້ໄດ້ລວມເອົາຮຸ້ນຂອງທະນາຄານທັງໝົດທີ່ໄດ້ຈາກກຳໄລ ແລະ ຂາດທຶນ ຈາກຫົວໜ່ວຍທີ່ກ່ຽວຂ້ອງ ຕາມການຖືຄອງຮຸ້ນທາງບັນຊີ, ນັບຈາກມື້ທີ່ມີການຮັບຮູ້ອິດທິພົນທີ່ມີສາລະສຳຄັນຕໍ່ກັບຫົວໜ່ວຍດັ່ງກ່າວ.

**(ຖ) ຊັບສົມບັດຄົງທີ່ທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ**

ຊັບສົມບັດຄົງທີ່ລວມມີ ຊັບສົມບັດຄົງທີ່ທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ, ຊັບສົມບັດຄົງທີ່ທີ່ມີຕົວຕົນປະກອບມີ ອາຄານ ແລະ ສ່ວນປັບປຸງ, ເຄື່ອງໃຊ້ຫ້ອງການ, ເຄື່ອງເຟີນີເຈີ້ ແລະ ເຄື່ອງຕົບແຕ່ງ ແລະ ຍານພາຫານະ, ຊັບສົມບັດຄົງທີ່ບໍ່ມີຕົວຕົນປະກອບມີ ຊອຟແວຣ໌ຄອມພິວເຕີ.
ຊັບສົມບັດຄົງທີ່ໄດ້ຖືກລາຍງານດ້ວຍຕົ້ນທຶນ ລົບໃຫ້ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມສະສົມ, (ຖ້າມີ).
ຕົ້ນທຶນຂອງຊັບສິນປະກອບດ້ວຍມູນຄ່າຊື້ ບວກກັບຄ່າໃຊ້ຈ່າຍທີ່ກ່ຽວຂ້ອງທາງກົງອື່ນໆໃນການເຮັດໃຫ້ຊັບສິນຢູ່ໃນສະພາບທີ່ພ້ອມໃຊ້ງານ.
ຄ່າໃຊ້ຈ່າຍສຳລັບການຊື້ເພີ່ມເຕີມ, ການປັບປຸງ ແລະ ການຕໍ່ອາຍຸແມ່ນຈະຖືກຕີເປັນຕົ້ນທຶນ ແລະ ຄ່າໃຊ້ຈ່າຍສຳລັບການບຳລຸງຮັກສາ ແລະ ຄ່າສ້ອມແປງແມ່ນຈະຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

ເມື່ອຊັບສົມບັດຖືກຂາຍ ຫຼື ຖືກສະສາງ, ຕົ້ນທຶນ ແລະ ຄ່າຫຼຸ້ຍຫ້ຽນສະສົມຈະຖືກສະສາງຈາກໃບລາຍງານຖານະການເງິນ ແລະ ຖ້າຫາກມີກຳໄລ ຫຼື ຂາດທຶນ ທີ່ມາຈາກການສະສາງແມ່ນຖືກບັນທຶກຢູ່ໃນໃບລາຍງານຜົນການດຳເນີນງານ.

**(ທ) ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມຂອງຊັບສົມບັດຄົງທີ່**

ຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມຂອງຊັບສົມບັດຄົງທີ່ແມ່ນຖືກຄິດໄລ່ຕາມວິທີຄິດໄລ່ແບບສະເໝີຕົວໃນອັດຕາທີ່ກຳນົດໃຊ້ຕໍ່ອາຍຸການນຳໃຊ້ທີ່ຄາດຄະເນ ຂອງຊັບສົມບັດເຫຼົ່ານັ້ນ ອີງຕາມກົດໝາຍສ່ວຍສາອາກອນລາຍໄດ້ ສະບັບບ ເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019 ເຊິ່ງມີຜົນບັງຄັບໃຊ້ນັບຕັ້ງແຕ່ວັນທີ 1 ມັງກອນ 2020 ເປັນຕົ້ນໄປ ເຊິ່ງອອກໂດຍປະທານສະພາແຫ່ງຊາດ, ອັດຕາຄ່າຫຼຸ້ຍຫ້ຽນ ແລະ ຄ່າເສື່ອມປະຈຳປີມີດັ່ງຕໍ່ໄປນີ້:

| ປະເພດ | ອັດຕາຄ່າຫຼຸ້ຍຫ້ຽນ |
|---|---|
| ຊອຟແວຣ໌ຄອມພິວເຕີ | 20% |
| ເຄື່ອງໃຊ້ຫ້ອງການ | 20% |
| ເຟີນີເຈີ້ ແລະ ເຄື່ອງຕົບແຕ່ງ | 20% |
| ຍານພາຫະນະ | 20% |

**(ນ) ຄັງສຳຮອງຕາມລະບຽບການ**

ພາຍໃຕ້ກົດໝາຍວ່າດ້ວຍທະນາຄານທຸລະກິດສະບັບເລກທີ 56/ສພຊ, ລົງວັນທີ 7 ທັນວາ 2018, ບັນດາທະນາຄານທຸລະກິດແມ່ນຮຽກຮ້ອງໃຫ້ມີຄັງສຳຮອງກຳໄລສຸດທິ ດັ່ງນີ້:

- ຄັງສະສົມຕາມລະບຽບການ.
- ຄັງຂະຫຍາຍທຸລະກິດ ແລະ ຄັງອື່ນໆ.

ອີງຕາມກົດໝາຍ ວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013, ທະນາຄານທຸລະກິດ ຕ້ອງໄດ້ສ້າງຄັງສຳຮອງຕາມລະບຽບການຢ່າງໜ້ອຍ 10% ຂອງກຳໄລຫຼັງອາກອນແຕ່ລະປີ, ເມື່ອຄັງສຳຮອງນີ້ມີເງິນສະສົມໄດ້ເຄິ່ງໜຶ່ງຂອງທຶນຈົດທະບຽນຂອງທະນາຄານແລ້ວທະນາຄານສາມາດໂຈະການຫັກເງິນເຂົ້າຄັງສຳຮອງດັ່ງກ່າວ.

**(ບ) ອາກອນ**

ອາກອນຖືກຄິດໄລ່ຈາກກຳໄລໃນປີປັດຈຸບັນ ໂດຍອີງຕາມກົດໝາຍສ່ວຍສາອາກອນວ່າດ້ວຍການເກັບອາກອນພາຍໃນ ສປປ ລາວ.ທະນາຄານຕ້ອງຈ່າຍອາກອນໃນອັດຕາ 20% ຂອງກຳໄລກ່ອນອາກອນ ເພື່ອໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ ລົງວັນທີ 18 ມິຖຸນາ 2019. ການແຈ້ງເສຍອາກອນຂອງທະນາຄານຕ້ອງໄດ້ຮັບການກວດກາໂດຍເຈົ້າໜ້າທີ່ສ່ວຍສາອາກອນ, ເນື່ອງຈາກການນຳໃຊ້ກົດໝາຍວ່າດ້ວຍອາກອນລາຍໄດ້ ແລະ ລະບຽບການຕ່າງໆແມ່ນມີຫຼາຍປະເພດ ເຊິ່ງອາດຈະແປຄວາມໄດ້ເປັນຫຼາຍຢ່າງ, ຈຳນວນທີ່ໄດ້ຖືກລາຍງານຢູ່ໃນເອກະສານລາຍງານການເງິນ ອາດຈະມີການປ່ຽນແປງຂຶ້ນກັບການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.

**(ປ) ຜົນປະໂຫຍດຂອງພະນັກງານ**

**ຜົນປະໂຫຍດພາຍຫຼັງອອກການ**

ຜົນປະໂຫຍດພາຍຫຼັງອອກການ ແມ່ນຈະຖືກຈ່າຍໃຫ້ກັບພະນັກງານຂອງທະນາຄານທີ່ກະສຽນອາຍຸ ໂດຍເງິນສຳຮອງກະສຽນທີ່ທະນາຄານໄດ້

ສ້າງໄວ້.ໃນແຕ່ລະເດືອນ, ທະນາຄານສົມທົບ 6% ແລະ ພະນັກງານສົມທົບ 4%ຂອງເງິນເດືອນພື້ນຖານຂອງພະນັກງານເຂົ້າໄປໃນກອງທຶນ (ຈຳນວນສູງສຸດທີ່ທະນາຄານຈະສົມທົບໃຫ້ກັບພະນັກ ງານຕໍ່ຄົນຕໍ່ເດືອນແມ່ນ 500 ໂດລາ). ຜົນປະໂຫຍດແມ່ນມີໃຫ້ແກ່ພະນັກງານແຕ່ລະຄົນໃນຈຳນວນເຕັມຫຼັງຈາກເກີນໄລຍະເວລາກຳນົດ 10 ປີ ຫຼື ເງິນສົມທົບທັງໝົດຂອງພະນັກງານແຕ່ລະຄົນບວກກັບດອກເບ້ຍທີ່ໄດ້ຮັບໃນບັນຊີຂອງພະນັກງານ ຖ້າພະນັກງານລາອອກກ່ອນໄລຍະເວລາກຳນົດ. ທະນາຄານບໍ່ໄດ້ມີຂໍ້ຜູກມັດເພີ່ມເຕີມກັບສິດຜົນປະໂຫຍດພາຍຫຼັງອອກການ ສຳລັບພະນັກງານນອກເໜືອຈາກນີ້.

**ຜົນປະໂຫຍດຈາກການເລີກຈ້າງ**

ອີງຕາມກົດໝາຍແຮງງານສະບັບປັບປຸງ ມາດຕາທີ 82 ເລກທີ 43/ສພຊ ທີ່ອະນຸມັດໂດຍປະທານປະເທດຂອງ ສປປ ລາວ, ລົງວັນທີ 28 ມັງກອນ 2014 ທະນາຄານມີພັນທະທີ່ຈະຕ້ອງຈ່າຍເງິນອູດໜູນສຳລັບພະນັກງານຜູ້ທີ່ຖືກເລີກຈ້າງງານ ໃນກໍລະນີ ດັ່ງຕໍ່ໄປນີ້:

- ພະນັກງານຍັງຂາດຄວາມສາມາດພິເສດ ຫຼື ສຸຂະພາບບໍ່ແຂງແຮງ ແລະ ດັ່ງນັ້ນຈຶ່ງບໍ່ສາມາດສືບຕໍ່ການເຮັດວຽກໄດ້;
- ຜູ້ຈ້າງງານມີການພິຈາລະນາ ເຖິງຄວາມຈຳເປັນເພື່ອຫຼຸດຜ່ອນຈຳນວນຂອງພະນັກງານເພື່ອປັບປຸງການເຮັດວຽກພາຍໃນຫົວໜ່ວຍແຮງງານ.

ສຳລັບການຍົກເລີກສັນຍາຈ້າງງານ ບໍ່ວ່າຈະເປັນກໍລະນີໃດໆທີ່ໄດ້ກ່າວມາຂ້າງເທິງນີ້ ນາຍຈ້າງຕ້ອງຈ່າຍເງິນຄ່າອູດໜູນການຍົກເລີກທີ່ຖືກຄິດໄລ່ບົນພື້ນຖານ 10% ຂອງເງິນເດືອນພື້ນຖານທີ່ໄດ້ຮັບກ່ອນມື້ສິ້ນສຸດການເຮັດວຽກ,ໃນວັນທີ 31 ທັນວາ 2022, ແມ່ນບໍ່ມີພະນັກງານຂອງທະນາຄານທີ່ຖືກເລີກຈ້າງງານພາຍໃຕ້ເງື່ອນໄຂຂ້າງເທິງທີ່ໄດ້ກ່າວມານີ້; ດັ່ງນັ້ນ, ທະນາຄານຈຶ່ງບໍ່ສ້າງເງິນແຮສຳລັບເງິນອຸດໜູນເລີກຈ້າງງານໃນເອກະສານລາຍງານການເງິນ.

**(ຜ) ສັນຍາເຊົ່າ**

ທະນາຄານປະເມີນວ່າ ສັນຍາທີ່ມີຢູ່ນັ້ນເປັນສັນຍາເຊົ່າຫຼືບໍ່. ຖ້າວ່າສັນຍານັ້ນເປັນສັນຍາເຊົ່າ ແລະ ຖ້າຫາກວ່າສັນຍານັ້ນບົ່ງບອກເຖິງສິດໃນການຄວບຄຸມການນຳໃຊ້ຊັບສິນທີ່ລະບຸເປັນໄລຍະເວລາໃດໜຶ່ງ ໃນສັນຍານັ້ນ ເພື່ອພິຈາລະນາການປ່ຽນແປງ.

**ສິດນຳໃຊ້ຊັບສິນຕາມສັນຍາເຊົ່າ**

ທະນາຄານຮັບຮູ້ສິດນຳໃຊ້ຊັບສິນ ໃນວັນທີທີ່ເລີ່ມຕົ້ນຂອງການເຊົ່າ (ຕົວຢ່າງ ວັນທີ ທີ່ຊັບສິນສາມາດນຳໃຊ້ໄດ້). ສິດນຳໃຊ້ຊັບສິນແມ່ນນຳສະເໜີໂດຍການໃຊ້ລາຄາຕົ້ນທຶນ ລົບ ຄ່າເສື່ອມລາຄາສະສົມ ແລະ ຂາດທຶນຈາກການເສື່ອມມູນຄ່າ ແລະ ປັບປຸງສຳລັບການຕີມູນຄ່າໃໝ່ຂອງໜີ້ສິນຕາມສັນຍາເຊົ່າ. ຕົ້ນທຶນຂອງສິດນຳໃຊ້ຊັບສິນ ແມ່ນລວມເຖິງໜີ້ສິນຕາມສັນຍາເຊົ່າທີ່ຮັບຮູ້ໃນເບື້ອງຕົ້ນ ແລະ ຄ່າໃຊ້ຈ່າຍທາງກົງກ່ຽວກັບສິດນຳໃຊ້ຊັບສິນທີ່ເກີດຂຶ້ນ ແລະ ຄ່າເຊົ່າທີ່ເກີດຂຶ້ນໃນ ຫຼື ລົບໃຫ້ມູນຄ່າເຊົ່າທີ່ບໍ່ໄດ້ຮັບ.

**ໜີ້ສິນຕາມສັນຍາເຊົ່າ**

ນະວັນທີ່ເລີ່ມສັນຍາເຊົ່າ ທະນາຄານຈະຮັບຮູ້ໜີ້ສິນຕາມສັນຍາເຊົ່າ ເຊິ່ງວັດແທກດ້ວຍມູນຄ່າປະຈຸບັນ ຂອງຈຳນວນເງິນທີ່ຕ້ອງຊຳລະຕາມສັນຍາເຊົ່າຕະຫຼອດອາຍຸສັນຍາເຊົ່າ.ເງິນຈ່າຍຄ່າເຊົ່າທີ່ລວມທັງລາຄາໃຊ້ສິດຂອງຕົວເລືອກການຊື້ຕາມສົມຄວນທີ່ທະນາຄານຈະໃຊ້ ແລະ ການຈ່າຍຄ່າປັບໃໝສຳລັບການຍົກເລືອກສັນຍາເຊົ່າ, ຖ້າຫາກໄລຍະເວລາຂອງສັນຍາເຊົ່າສະທ້ອນໃຫ້ເຫັນວ່າທະນາຄານໃຊ້ສິດໃນການຍົກເລີກສັນຍາ. ການຈ່າຍຄ່າເຊົ່າແບບຜັນແປທີ່ບໍ່ຂຶ້ນຢູ່ກັບດັດຊະນີ ຫຼື ອັດຕາແມ່ນຈະຮັບຮູ້ເປັນຄ່າໃຊ້ຈ່າຍ(ຍົກເວັ້ນແຕ່ຈະເກີດຂຶ້ນເພື່ອຜະລິດສິນຄ້າໃນສາງ) ໃນຊ່ວງເວລາທີ່ເກີດເຫດການ ຫຼື ເງື່ອນໄຂທີ່ເຮັດໃຫ້ເກີດການຊຳລະເງິນ.

ໃນການຄຳນວນມູນຄ່າປັດຈຸບັນຂອງຄ່າເຊົ່າ, ທະນາຄານໃຊ້ອັດຕາສະເລ່ຍຖ່ວງນ້ຳໜັກຂອງເງິນຝາກປະຈຳໃຫ້ກັບລູກຄ້າ ເພາະວ່າອັດຕາດອກເບ້ຍບໍ່ສາມາດກຳນົດໃນສັນຍາເຊົ່າໄດ້ທັນທີ. ຫຼັງຈາກວັນທີມີພັນທະຕໍ່ສັນຍາເຊົ່າ, ຈຳນວນໜີ້ສິນຕາມສັນຍາເຊົ່າ ແມ່ນເພີ່ມຂຶ້ນເພື່ອໃຫ້ສອດຄ່ອງກັບການເພີ່ມຂຶ້ນຂອງດອກເບ້ຍ ແລະ ການຫຼຸດລົງສຳລັບຄ່າເຊົ່າທີ່ໄດ້ຈ່າຍໄປ. ນອກຈາກນີ້, ມູນຄ່າຕາມບັນຊີຂອງໜີ້ສິນສັນຍາເຊົ່າຈະຖືກວັດແທກມູນຄ່າຖ້າຫາກມີການແກ້ໄຂ, ປ່ຽນແປງໃນການຊຳລະເງິນຕາມສັນຍາເຊົ່າ (ເຊັ່ນ: ການປ່ຽນແປງການຊຳລະເງິນໃນອານາຄົດເຊິ່ງເປັນຜົນມາຈາກການປ່ຽນແປງດັດຊະນີ ຫຼື ອັດຕາທີ່ໃຊ້ໃນການກຳນົດດັ່ງກ່າວ ຄືການຊຳລະເງິນຕາມສັນຍາເຊົ່າ) ຫຼື ການປ່ຽນແປງໃນການປະເມີນສິດໃນການເລືອກຊື້ຊັບສິນທີ່ຕິດພັນ.

## 5. ລາຍຮັບດອກເບ້ຍ ແລະ ທີ່ຄ້າຍຄືກັນ ສຸດທິ

31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| **ລາຍຮັບດອກເບ້ຍ ແລະ ທີ່ຄ້າຍຄືຈາກ:** | | |
| ທຸລະກຳລະຫວ່າງທະນາຄານ | 14.050 | 117.899 |
| ເງິນກູ້ໃຫ້ລູກຄ້າ | 736.511 | 511.193 |
| ເງິນລົງທຶນໃນຫຼັກຊັບ | 25.770 | 9.212 |
| | **776.331** | **638.304** |
| **ລາຍຈ່າຍດອກເບ້ຍ ແລະ ທີ່ຄ້າຍຄື ສຳລັບ:** | | |
| ການເຮັດທຸລະກຳລະຫວ່າງທະນາຄານ | (3.629) | (113.048) |
| ເງິນຝາກລູກຄ້າ | (669.219) | (454.863) |
| | **(672.848)** | **(567.911)** |
| | | |
| **ລາຍຮັບດອກເບ້ຍ ແລະ ທີ່ຄ້າຍຄື ສຸດທິ** | **103.483** | **70.393** |

## 6. ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການ ສຸດທິ

31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການຈາກ:** | | |
| ຄ່າທຳນຽມຈາກເງິນກູ້ | 5.145 | 2.878 |
| ລາຍຮັບຈາກຄ່າປັບໃໝການຊຳລະທີ່ຊ້າທີ່ເກັບຈາກລູກຄ້າ | 13.134 | 24.197 |
| ການສື່ສານ (ແຟັກ,ໂທລະເລກ) | 2.453 | 1.497 |
| ການບໍລິການທາງການເງິນ | 61.559 | 14.941 |
| ລາຍຮັບອື່ນໆ | 3.604 | 2.040 |
| | **85.895** | **45.553** |
| **ລາຍຈ່າຍຄ່າທຳນຽມ ແລະ ຄ່າບໍລິການ ສຳລັບ:** | | |
| ຄ່າທຳນຽມສຳລັບການບໍລິການຊຳລະຜ່ານແຊັກ, ແຟັກ,TT, ສະວິບ | (593) | (359) |
| ການບໍລິການທາງການເງິນອື່ນໆ | (615) | (437) |
| | **(1.208)** | **(796)** |
| **ລາຍຮັບຄ່າທຳນຽມ ແລະ ຄ່າບໍລິການສຸດທິ** | **84.687** | **44.757** |

## 7. ລາຍຮັບອື່ນໆຈາກການດຳເນີນງານ

31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| ເກັບຄືນເງິນແຮທົ່ວໄປສຳລັບຂາດທຶນສິນເຊື່ອ | 97.143 | 114.376 |
| ລາຍຮັບອື່ນໆ | 38.758 | 15.963 |
| | **135.901** | **130.339** |

## 8. ເງິນເດືອນ ແລະ ລາຍຈ່າຍອື່ນໆກ່ຽວກັບພະນັກງານ

31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| ຄ່າແຮງງານ ແລະ ເງິນເດືອນ | 42.294 | 30.081 |
| ລາຍຈ່າຍອື່ນໆກ່ຽວກັບພະນັກງານ | 37.932 | 19.447 |
| | **80.226** | **49.528** |

## 9. ລາຍຈ່າຍບໍລິຫານອື່ນໆ

31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| ຄ່າເຊົ່າຫ້ອງການ | 4.140 | 4.107 |
| ຄ່ານ້ຳມັນ | 1.425 | 923 |
| ຄ່າເຄື່ອງໃຊ້ຫ້ອງການ | 2.108 | 893 |
| ຄ່າໂຄສະນາ, ການຕະຫຼາດ ແລະ ການສົ່ງເສີມການຂາຍ | 1.384 | 537 |
| ຄ່າໂທລະຄົມມະນາຄົມ | 1.501 | 1.316 |
| ຄ່າສ້ອມແປງ ແລະ ບຳລຸງຮັກສາ | 6.531 | 4.581 |
| ຄ່າໄຟຟ້າ ແລະ ນ້ຳປະປາ | 1.196 | 1.187 |
| ຄ່າທຳນຽມກວດສອບບັນຊີ ແລະ ກົດໝາຍ | 3.930 | 1.973 |
| ຄ່າທຳນຽມປະກັນໄພ | 960 | 1.047 |
| ຄ່າທຳນຽມ | 2.880 | 2.025 |
| ດອກເບ້ຍໜີ້ສິນຕາມສັນຍາເຊົ່າ | 1.858 | 4.723 |
| ອື່ນໆ | 14.759 | 12.609 |
| | **42.672** | **35.921** |

## 10. ລາຍຈ່າຍອື່ນໆຈາກການດຳເນີນງານ

31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| ລາຍຈ່າຍເງິນແຮທົ່ວໄປ (ບົດອະທິບາຍ 15.2) | 78.823 | 114.140 |
| ກອງທຶນປົກປ້ອງຜູ້ຝາກເງິນ | 9.168 | 7.049 |
| ລາຍຈ່າຍອື່ນໆ | 18.246 | 19.841 |
| | **106.237** | **141.030** |

## 11. ເງິນສົດໃນຄັງ

31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| ເງິນສົດໃນຄັງເປັນກີບ | 42.906 | 29.011 |
| ເງິນສົດໃນຄັງທີ່ເປັນເງິນຕາຕ່າງປະເທດ | 162.248 | 69.099 |
| | **205.154** | **98.110** |

## 12. ເງິນຝາກຢູ່ທະນາຄານແຫ່ງ ສປປ ລາວ (“ທຫລ”)

31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| ເງິນຝາກກະແສລາຍວັນ | 1.581.428 | 1.181.935 |
| ເງິນແຮຝາກບັງຄັບ (*) | 288.134 | 173.800 |
| ເງິນຝາກທຶນຈົດທະບຽນ | 42 | 72.042 |
| | **1.869.604** | **1.427.777** |

ເງິນຝາກກັບ ທະນາຄານແຫ່ງ ສປປ ລາວ ລວມມີເງິນຝາກກະແສລາຍວັນ ແລະ ເງິນແຮຝາກບັງຄັບ ແລະ ເງິນຝາກທຶນຈົດທະບຽນ, ເງິນຝາກດັ່ງກ່າວແມ່ນບໍ່ມີດອກເບ້ຍ.

(*) ຕາມຂໍ້ກຳນົດຂອງ ທະນາຄານແຫ່ງ ສປປ ລາວ, ທະນາຄານໄດ້ຖືກຮຽກຮ້ອງໃຫ້ຮັກສາຄັງສະສົມເງິນສົດໄວ້ກັບ ທຫລ ໃນຮູບແບບເງິນແຮຝາກບັງຄັບເຊິ່ງຖືກຄິດໄລ່ໃນອັດຕາ 5,00% ສຳລັບເງິນກີບ ແລະ 5,00% ສຳລັບສະກຸນເງິນຕາຕ່າງປະເທດ (2021: 3,00% ແລະ 5,00%) ໃນທຸກໆ 2 ຄັ້ງຕໍ່ເດືອນ ຂອງຍອດເງິນຝາກລູກຄ້າທີ່ມີກຳນົດຕ່ຳກວ່າ 12 ເດືອນ, ພາຍໃນປີ ທະນາຄານໄດ້ຮັກສາເງິນແຮຝາກບັງຄັບເພື່ອໃຫ້ສອດຄ່ອງຕາມຂໍ້ກຳນົດຂອງ ທຫລ. ອັດຕາສ່ວນເຫຼົ່ານີ້ແມ່ນໄດ້ຖືກປັບແກ້ໂດຍ ທຫລ ຕາມແຈ້ງການສະບັບເລກທີ 375/ທຫລ ລົງວັນທີ 17 ພຶດສະພາ 2022.

## 13. ເງິນຝາກຢູ່ກັບທະນາຄານອື່ນ

31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| **ເງິນຝາກກະແສລາຍວັນ** | **268.641** | **215.206** |
| **ເງິນຝາກກັບທະນາຄານພາຍໃນປະເທດ** | **72.301** | **188.044** |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) | 71.445 | 187.432 |
| ທະນາຄານຮ່ວມພັດທະນາ (ທຮພ) | 856 | 612 |
| | | |
| **ເງິນຝາກກັບທະນາຄານຕ່າງປະທດ** | **196.340** | **27.162** |
| ທະນາຄານ Standard Chartered,ນິວຢອກ | 114.056 | 14.890 |
| ທະນາຄານ Standard Chartered, ບາງກອກ | 4.009 | 1.083 |
| ທະນາຄານ Standard Chartered, ແຟັງເຟີດ | 311 | 34 |
| ທະນາຄານ ເຄບີ ກຸກມິນ, ເກົາຫຼີ | 9.272 | 3.467 |
| ທະນາຄານ ກະສິກອນ ຈຳກັດ ມະຫາຊົນ, ກຸງເທບ | 68.692 | 7.688 |
| | | |
| **ເງິນຝາກມີກຳນົດ** | - | **75.000** |
| ທະນາຄານ ຫວຽດຕິນ ລາວ ຈຳກັດ | - | 20.000 |
| ທະນາຄານ ມາຣູຮານ ເຈແປນລາວ | - | 35.000 |
| ທະນາຄານ ຮຸ້ນສ່ວນການຄ້າທະຫານ ສາຂາລາວ | - | 20.000 |
| | **268.641** | **290.206** |

## 14. ເງິນລົງທຶນ

### 14. (ກ) ເງິນລົງທຶນໃນພັນທະບັດ

31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| ພັນທະບັດແປງສະພາບ | **515.400** | - |

ໃນເດືອນເມສາ ປີ 2022, ທະນາຄານໄດ້ລົງນາມສັນຍາຊື້ພັນທະບັດແປງສະພາບຈາກ LMVC Holdings ເປັນຈຳນວນເງິນ 30 ລ້ານໂດລາສະຫະລັດ, ເຊິ່ງເປັນບໍລິສັດທີ່ດຳເນີນທຸລະກິດພາຍໃຕ້ກົດໝາຍຂອງເກາະເຄແມນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບຂອງ ປະເທດເກົາຫຼີ, ເຊິ່ງພັນທະບັດ ມີໄລຍະເວລາ 5 ປີ ແລະ ຈ່າຍດອກເບ້ຍທຸກໆເຄິ່ງປີ ໃນອັດຕາ 2%ຕໍ່ປີ. ທະນາຄານມີສິດຂໍແປງລາຄາເຕັມມູນຄ່າຂອງໃບຢັ້ງຢືນພັນທະບັດ ພາຍໃຕ້ເງື່ອນໄຂດັ່ງຕໍ່ໄປນີ້:

| | | |
|---|---|---|
| - | ປະເພດຂອງຫຸ້ນ: | ຫຸ້ນສາມັນທີ່ຈົດທະບຽນຂອງ LVMC Holdings |
| - | ອັດຕາການແປງສະພາບ: | 100% |
| - | ມູນຄ່າການແປງສະພາບ: | 3.391 ວອນຕໍ່ຫຸ້ນ. |

### 14. (ຂ) ເງິນລົງທຶນໃນວິສາຫະກິດຮຸ້ນສ່ວນ

| | ຈຳນວນຮຸ້ນ 31 ທັນວາ 2022 (ຮຸ້ນ) | 2021 | ອັດຕາສ່ວນການຖືຮຸ້ນ 31 ທັນວາ 2022 (%) | 2021 | ມູນຄ່າການລົງທຶນ 31 ທັນວາ 2022 (ລ້ານກີບ) | 2021 | ມູນຄ່າຕາມບັນຊີ 31 ທັນວາ 2022 (ລ້ານກີບ) | 2021 |
|---|---|---|---|---|---|---|---|---|
| ທະນາຄານ KB Daehan Specialized (i) | 1.875.000 | 1.875.000 | 4,30 | 4,30 | 32.213 | 20.250 | 46.872 | 25.717 |
| ບໍລິສັດ ກ໋ອກ ກ໋ອກ ເອັມ ຈຳກັດ(ii) | 80.000 | - | 20,00 | - | 4.000 | - | 3.644 | - |
| | | | | | **36.213** | **20.250** | **50.516** | **25.717** |

(i) ໃນລະຫວ່າງປີ 2018, ທະນາຄານລົງທຶນ 1.875.000 ໂດລາສະຫະລັດ ເພື່ອຖືຮຸ້ນ 10% ໃນທະນາຄານ KB Daehan Specialized, ເຊິ່ງແຕ່ກ່ອນຮ້ອງວ່າ ທະນາຄານ Tomato Specialized ເຊິ່ງສ້າງຕັ້ງຂຶ້ນໃນປະເທດກຳປູເຈຍ. ທະນາຄານໄດ້ປະເມີນມູນຄ່າເງິນລົງທຶນໃນວິສາຫະກິດຮຸ້ນສ່ວນ ໂດຍອີງໃສ່ການຄິດໄລ່ມູນຄ່າການນຳໃຊ້. ການຄິດໄລ່ແມ່ນໄດ້ໃຊ້ວິທີການຫຼຸດກະແສເງິນສົດ ໂດຍພິຈາລະນາສົມມຸດຕິຖານບາງປະການ. ອີງຕາມການປະເມີນມູນຄ່າ, ຍອດມູນຄ່າທີ່ຄາດວ່າຈະໄດ້ຮັບຄືນ ສູງເກີນກວ່າຍອດມູນຄ່າຕາມບັນຊີ, ດັ່ງນັ້ນຈຶ່ງບໍ່ມີການບັນທຶກການດ້ອຍຄ່າ. ໃນປີ 2019, ທຶນຈົດທະບຽນຂອງ KB Daehan ໄດ້ເພີ່ມຂຶ້ນຈາກ 18.750.000 ໂດລາສະຫະລັດ ເປັນ 43.750.000 ໂດລາ

ສະຫະລັດ. ສ່ວນແບ່ງການລົງທຶນຂອງທະນາຄານໄດ້ຫຼຸດລົງຈາກ 10,00% ເປັນ 4,29%.

ທະນາຄານ KB Daehan Specialized ຖືວ່າເປັນບໍລິສັດຮຸ້ນສ່ວນ ເນື່ອງຈາກມີອິດທິພົນອັນເປັນສາລະສຳຄັນ ທີ່ທະນາຄານສາມາດໃຊ້ສິດໃນການບໍລິຫານ ແລະ ນະໂຍບາຍທາງການເງິນ ແລະ ການດຳເນີນງານທະນາຄານໄດ້. ອິດທິພົນທີ່ມີສາລະສຳຄັນສາມາດເຫັນໄດ້ຈາກການເປັນຕົວແທນໃນຄະນະກຳມະການຂອງບໍລິສັດຮຸ້ນສ່ວນ ແລະ ການມີສ່ວນຮ່ວມໃນການຕັດສິນໃຈກ່ຽວກັບນະໂຍບາຍທາງການເງິນ ແລະ ການດຳເນີນງານຂອງທະນາຄານ

(ii) ໃນປີປັດຈຸບັນ, ທະນາຄານໄດ້ລົງທຶນ 4 ຕື້ກີບ ໃນຮູບແບບການຮ່ວມທຸລະກິດກັບ ລ້ານຊ້າງ ໂຮນດິງ ໂຊລ ຈຳກັດ ເພື່ອຖືຫຸ້ນ 20% ໃນບໍລິສັດ ກ໋ອກ ກ໋ອກ ເອັມ ຈຳກັດ, ເຊິ່ງເປັນບໍລິສັດທີ່ດຳເນີນທຸລະກິດໃນ ສປປ ລາວ. ທຸລະກິດຫຼັກຂອງບໍລິສັດແມ່ນການນຳເຂົ້າ, ສົ່ງອອກ, ຂາຍສົ່ງ ແລະ ຂາຍຍ່ອຍສິນຄ້າອຸປະໂພກບໍລິໂພກໃນທົ່ວ ສປປ ລາວ.

**ລາຍການການເຄື່ອນໄຫວໃນວິສາຫະກິດຮຸ້ນສ່ວນ** 31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| ຍອດເຫຼືອ ວັນທີ 1 ມັງກອນ | 25.717 | 20.519 |
| ການລົງທຶນທີ່ເກີດຂຶ້ນພາຍໃນປີ | 4.000 | - |
| ສ່ວນແບ່ງກຳໄລ ຈົນເຖິງ 31 ທັນວາ | 5.428 | 1.815 |
| | **35.145** | **22.334** |
| ການປ່ຽນແປງອັດຕາແລກປ່ຽນ | 15.371 | 3.383 |
| **ຍອດເຫຼືອ ວັນທີ 31 ທັນວາ** | **50.516** | **25.717** |

14. **(ຄ) ການລົງທຶນໃນຕາສານທຶນທີ່ກຳນົດໂດຍ FVTPL**

| | ຈຳນວນຮຸ້ນ 31 ທັນວາ 2022 (ຮຸ້ນ) | 2021 | ອັດຕາສ່ວນການຖືຮຸ້ນ 31 ທັນວາ 2022 (%) | 2021 | ມູນຄ່າການລົງທຶນ 31 ທັນວາ 2022 (ລ້ານກີບ) | 2021 | ມູນຄ່າຕາມບັນຊີ 31 ທັນວາ 2022 (ລ້ານກີບ) | 2021 |
|---|---|---|---|---|---|---|---|---|
| LVMC Holdings | 15.106.708 | 15.106.708 | 15,19 | 15,19 | **469.166** | **469.166** | **538.604** | **499.264** |

ໃນປີ 2018, ທະນາຄານໄດ້ລົງນາມສັນຍາຊື້ພັນທະບັດແປງສະພາບຈາກ LMVC Holdings ເປັນຈຳນວນເງິນ 30 ລ້ານໂດລາສະຫະລັດ, ເຊິ່ງເປັນບໍລິສັດທີ່ດຳເນີນທຸລະກິດພາຍໃຕ້ກົດ ໝາຍຂອງເກາະເຄແມນ ແລະ ຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບຂອງ ປະເທດເກົາຫຼີ. ເຊິ່ງພັນທະບັດແປງສະພາບເຫຼົ່ານີ້ ຄົບກຳນົດໃນ ປີ 2021 ແລະ ຖືກປ່ຽນເປັນຫຸ້ນສາມັນຂອງບໍລິສັດ LVMC. ທະນາຄານໄດ້ນຳໃຊ້ລາຄາປິດຂອງຫຼັກຊັບໃນມື້ລັດຖະການສຸດທ້າຍຂອງປີ ເພື່ອກຳນົດມູນຄ່າຍຸດຕິທຳຂອງການລົງທຶນ ແລະ ບັນທຶກການປ່ຽນແປງມູນຄ່າຍຸດຕິທຳໃນກຳໄລ ຫຼື ຂາດທຶນໃນພາຍຫຼັງ.

**ລາຍການການເຄື່ອນໄຫວໃນວິສາຫະກິດຮຸ້ນສ່ວນ**

31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| ຍອດເຫຼືອ ວັນທີ 1 ມັງກອນ | 499.264 | - |
| ການລົງທຶນໃນຫຼັກຊັບທີ່ແປງຈາກພັນທະບັດແປງສະພາບ | - | 469.166 |
| ການປ່ຽນແປງມູນຄ່າຍຸດຕິທຳຂອງເງິນລົງທຶນໃນພາຍຫຼັງ | 39.340 | 30.098 |
| **ມູນຄ່າຕາມບັນຊີຂອງການລົງທຶນ** | **538.604** | **499.264** |

ພາຍຫຼັງການແປງສະພາບຂອງພັນທະບັດໃນວັນທີ 13 ເມສາ 2021, ທະນາຄານໄດ້ຮັບຮູ້ຜົນກຳໄລ 187.526 ລ້ານກີບ ຈາກການວັດແທກມູນຄ່າຍຸດຕິທຳຂອງຮຸ້ນສາມັນທີ່ແປງສະພາບແລ້ວ. ກຳໄລດັ່ງກ່າວ ແມ່ນໄດ້ຖືກຮັບຮູ້ເຂົ້າໃນໃບລາຍງານກຳໄລ ຫຼື ຂາດທຶນຂອງທະນາຄານສຳລັບປີສິ້ນສຸດວັນທີ 31 ທັນວາ 2021.

15. **ເງິນກູ້ ແລະ ເງິນລ່ວງໜ້າໃຫ້ລູກຄ້າ, ເງິນແຮສະເພາະສຸດທິ**

15.1 **ເງິນກູ້ໃຫ້ລູກຄ້າ**

31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| ເງິນກູ້ໃຫ້ລູກຄ້າ | 9.104.228 | 5.610.261 |
| ຫັກເງິນແຮໜີ້ຕ້ອງຮັບທວງຍາກ (ບົດອະທິບາຍ15.2) | (3.492) | (30.080) |
| | **9.100.736** | **5.580.181** |

**ແຍກຕາມອັດຕາດອກເບ້ຍ (ຕໍ່ປີ)** 31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| ເງິນກູ້ເປັນເງິນກີບ | 5,00%-14,00% | 4,68%-13,00% |
| ເງິນກູ້ເປັນເງິນໂດລາ | 4,00%-24,00% | 4,00%-24,12% |
| ເງິນກູ້ເປັນເງິນບາດ | 6,00%-12,00% | 6,00%-12,00% |

**ແຍກຕາມສະກຸນເງິນ** 31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| ເງິນກູ້ເປັນເງິນກີບ | 1.441.990 | 1.294.592 |
| ເງິນກູ້ເປັນເງິນໂດລາ | 6.531.285 | 3.731.478 |
| ເງິນກູ້ເປັນເງິນບາດ | 1.130.953 | 584.191 |
| | **9.104.228** | **5.610.261** |

**ແຍກຕາມປະເພດເງິນກູ້** 31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| ເງິນກູ້ໜີ້ປົກກະຕິ | | |
| - ໜີ້ປົກກະຕິຫຼື | 9.033.741 | 5.351.599 |
| - ໜີ້ຄວນເອົາໃຈໃສ່ | 62.383 | 178.019 |
| ເງິນກູ້ໜີ້ຕ້ອງຮັບທວງຍາກ | | |
| - ໜີ້ຕໍ່າກວ່າມາດຕະຖານ | 8.104 | 51.938 |
| - ໜີ້ຕ້ອງສົງໄສ | - | 28.705 |
| | **9.104.228** | **5.610.261** |

**15.2 ເງິນແຮສໍາລັບກິດຈະກໍາສິນເຊື່ອ**

**(i) ເງິນແຮສະເພາະສໍາລັບກິດຈະກໍາສິນເຊື່ອ** 31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| ຍອດເຫຼືອຕົ້ນປີ | 30.080 | 34.771 |
| ເງິນແຮໃນປີ | 103.915 | 148.736 |
| ເກັບຄືນເງິນແຮໃນປີ | (78.311) | (148.028) |
| ຈັດອອກໜີ້ເສຍ | (7.089) | (2.310) |
| ສ່ວນຕ່າງອັດຕາແລກປ່ຽນເງິນຕາຕ່າງປະເທດ | (45.103) | (3.089) |
| ຍອດເຫຼືອທ້າຍປີ | **3.492** | **30.080** |

**(ii) ເງິນແຮທົ່ວໄປສໍາລັບກິດຈະກໍາສິນເຊື່ອ** 31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| ຍອດເຫຼືອຕົ້ນປີ | 26.758 | 24.009 |
| ເງິນແຮໃນປີ | 78.823 | 114.140 |
| ເກັບຄືນເງິນແຮໃນປີ | (97.143) | (114.376) |
| ສ່ວນຕ່າງອັດຕາແລກປ່ຽນເງິນຕາຕ່າງປະເທດ | 36.622 | 2.985 |
| ຍອດເຫຼືອທ້າຍປີ | **45.060** | **26.758** |

**16. ຊັບສິນບັດຄົງທີ່ທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ** 31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| ຊັບສິນບັດຄົງທີ່ບໍ່ມີຕົວຕົນ (ບົດອະທິບາຍທີ 16.1) | 2.170 | 584 |
| ວຽກລະຫວ່າງກໍ່ສ້າງ(ບົດອະທິບາຍທີ 16.2) | 845 | 3.491 |
| ຊັບສິນບັດຄົງທີ່ທີ່ມີຕົວຕົນ (ບົດອະທິບາຍທີ 16.3) | 15.917 | 11.745 |
| **ລວມ** | **18.932** | **15.820** |

### 16.1 ຊັບສົມບັດຄົງທີ່ທີ່ບໍ່ມີຕົວຕົນ

31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| **ຕົ້ນທຶນ** | | |
| ວັນທີ 1 ມັງກອນ | 17.292 | 17.373 |
| ຮັບເຂົ້າເພີ່ມໃນລະຫວ່າງປີ | 2.212 | 389 |
| ຫັກອອກພາຍໃນປີ | - | (470) |
| **ວັນທີ 31 ທັນວາ** | **19.504** | **17.292** |
| | | |
| **ຄ່າເສື່ອມສຳລັບປີ** | | |
| ວັນທີ 1 ມັງກອນ | 16.708 | 16.944 |
| ຄ່າເສື່ອມພາຍໃນປີ | 626 | 234 |
| ຫັກອອກພາຍໃນປີ | - | (470) |
| **ວັນທີ 31 ທັນວາ** | **17.334** | **16.708** |
| | | |
| **ມູນຄ່າສຸດທິ** | | |
| **ວັນທີ 1 ມັງກອນ** | **584** | **429** |
| **ວັນທີ 31 ທັນວາ** | **2.170** | **584** |

### 16.2 ວຽກລະຫວ່າງການກໍ່ສ້າງ

31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| ຍອດເຫຼືອຕົ້ນປີ | 3.491 | 41 |
| ລາຍການເຄື່ອນໄຫວພາຍໃນປີ | | |
| - ເພີ່ມຂຶ້ນໃນລະຫວ່າງປີ | 2.926 | 5.641 |
| - ໂອນໄປເປັນຊັບສົມບັດຄົງທີ່ | (5.572) | (2.191) |
| **ຍອດເຫຼືອທ້າຍງວດ** | **845** | **3.491** |

### 16.3 ຊັບສົມບັດຄົງທີ່ ທີ່ມີຕົວຕົນ

ການເຄື່ອນໄຫວຂອງຊັບສົມບັດຄົງທີ່ທີ່ມີຕົວຕົນສຳລັບປີສິ້ນສຸດວັນທີ 31 ທັນວາ 2022 ມີດັ່ງລຸ່ມນີ້: (ລ້ານກີບ)

| | ອຸປະກອນຫ້ອງການ | ເຟີນີເຈີ ແລະ ເຄື່ອງຕິດຕັ້ງ | ຍານພາຫະນະ | ທີ່ດິນ | ລວມ |
|---|---|---|---|---|---|
| **ຕົ້ນທຶນ** | | | | | |
| ໃນວັນທີ 1 ມັງກອນ 2022 | 30.679 | 31.396 | 1.048 | 2.536 | 65.659 |
| ການໂອນຊັບສິນ | 2.913 | 1.733 | 926 | - | 5.572 |
| ເພີ່ມເຂົ້າ | 556 | 225 | - | - | 781 |
| ສະສາງອອກ | (101) | - | - | - | (101) |
| **ໃນວັນທີ 31 ທັນວາ 2022** | **34.047** | **33.354** | **1.974** | **2.536** | **71.911** |
| | | | | | |
| **ຄ່າຫຼຸ້ຍຫ້ຽນສະສົມ** | | | | | |
| ໃນວັນທີ 1 ມັງກອນ 2022 | 25.048 | 28.371 | 495 | - | 53.914 |
| ຫັກພາຍໃນປີ | 1.535 | 360 | 286 | - | 2.181 |
| ສະສາງອອກ | (101) | - | - | - | (101) |
| **ໃນວັນທີ 31 ທັນວາ 2022** | **26.482** | **28.731** | **781** | **-** | **55.994** |
| | | | | | |
| **ມູນຄ່າຍັງເຫຼືອ ສຸດທິ** | | | | | |
| **1 ມັງກອນ 2022** | **5.631** | **3.025** | **553** | **2.536** | **11.745** |
| **31 ທັນວາ 2022** | **7.565** | **4.623** | **1.193** | **2.536** | **15.917** |

ການເຄື່ອນໄຫວຂອງຊັບສົມບັດຄົງທີ່ທີ່ມີຕົວຕົນສຳລັບປີສິ້ນສຸດວັນທີ 31 ທັນວາ 2021 ມີດັ່ງລຸ່ມນີ້:

31 ທັນວາ (ລ້ານກີບ)

| | ອຸປະກອນຫ້ອງການ | ເຟີນີເຈີ ແລະ ເຄື່ອງຕິດຕັ້ງ | ຍານພາຫະນະ | ທີ່ດິນ | ລວມ |
|---|---|---|---|---|---|
| **ຕົ້ນທຶນ** | | | | | |
| ໃນວັນທີ 1ມັງກອນ 2021 | 30.204 | 31.265 | 1.055 | - | 62.524 |
| ການໂອນຊັບສິນ | 560 | 131 | - | 1.500 | 2.191 |
| ເພີ່ມເຂົ້າ | 97 | - | - | 1.036 | 1.133 |
| ຫັກອອກ | (182) | - | - | - | (182) |
| ສະສາງອອກ | - | - | (7) | - | (7) |
| **ໃນວັນທີ 31 ທັນວາ 2021** | **30.679** | **31.396** | **1.048** | **2.536** | **65.659** |
| | | | | | |
| ຄ່າຫຼຸ້ຍຫ້ຽນສະສົມ | | | | | |
| ໃນວັນທີ 1 ມັງກອນ 2021 | 22.350 | 27.238 | 313 | - | 49.901 |
| ຫັກພາຍໃນປີ | 2.808 | 1.133 | 189 | - | 4.130 |
| ຫັກອອກ | (110) | - | - | - | (110) |
| ສະສາງອອກ | - | - | (7) | - | (7) |
| **ໃນວັນທີ 31 ທັນວາ 2021** | **25.048** | **28.371** | **495** | **-** | **53.914** |
| | | | | | |
| **ມູນຄ່າຍັງເຫຼືອ ສຸດທິ** | | | | | |
| **1 ມັງກອນ 2021** | **7.854** | **4.027** | **742** | **-** | **12.623** |
| **31 ທັນວາ 2021** | **5.631** | **3.025** | **553** | **2.536** | **11.745** |

## 17. ສັນຍາເຊົ່າ

### (i) ສິດນຳໃຊ້ຊັບສິນຕາມສັນຍາ

31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| **ຕົ້ນທຶນ** | | |
| ໃນວັນທີ 1ມັງກອນ | 142.463 | 123.023 |
| ຮັບເຂົ້າເພີ່ມພາຍໃນປີ | 340 | 19.592 |
| ສະສາງອອກ | - | (152) |
| ການປັບອື່ນໆ | (181) | - |
| **ໃນວັນທີ 31 ທັນວາ** | **142.622** | **142.463** |
| | | |
| **ຄ່າຫຼຸ້ຍຫ້ຽນພາຍໃນປີ** | | |
| ໃນວັນທີ 1 ມັງກອນ | 20.625 | 14.002 |
| ຮັບເຂົ້າເພີ່ມພາຍໃນປີ | 6.705 | 6.704 |
| ສະສາງອອກ | - | (81) |
| ການປັບອື່ນໆ | (8.936) | - |
| **ໃນວັນທີ 31 ທັນວາ** | **18.394** | **20.625** |
| | | |
| **ມູນຄ່າຍັງເຫຼືອ ສຸດທິ** | | |
| **1 ມັງກອນ** | **121.838** | **109.021** |
| **31 ທັນວາ** | **124.228** | **121.838** |

(ii) ຮັບຮູ້ຈຳນວນຕາມກຳໄລ ຫຼື ຂາດທຶນ

31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| ດອກເບ້ຍຈາກໜີ້ສິນຕາມສັນຍາເຊົ່າ | 1.858 | 4.723 |
| ລາຍຈ່າຍຄ່າຫຼູ້ຍຫ້ຽນ | 6.705 | 6.704 |
| **ລວມ** | **8.563** | **11.427** |

18. ຊັບສິນອື່ນໆ

31 ທັນວາ (ລ້ານກີບ)

| | 2022 | 2021(ປັບປຸງໃໝ່) |
|---|---|---|
| ເງິນຄ້ຳປະກັນຄ່າເຊົ່າ | 55.360 | 32.650 |
| ລາຍຈ່າຍລ່ວງໜ້າ | 54.846 | 87.788 |
| ລ່າຍຈ່າຍດອກເບ້ຍລ່ວງໜ້າ | 83.943 | 41.034 |
| ອາກອນລາຍໄດ້ຄ້າງຮັບ | 10.955 | 1.000 |
| ລາຍຮັບອື່ນໆ | 390.884 | 266.774 |
| | **595.988** | **429.246** |

19. ເງິນຝາກຈາກທະນາຄານ ແລະ ສະຖາບັນການເງິນຕ່າງໆ

31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| **ເງິນຝາກມີກຳນົດ ແລະ ກະແສລາຍວັນ** | | |
| ທະນາຄານ ຫວຽດຕິນ | 103.080 | - |
| ທະນາຄານ ເຟີດຄອມເມີດໄຊ | 17.180 | - |
| ທະນາຄານ ມາຣູຮານເຈແປນລາວ ຈຳກັດ | - | 21.600 |
| ອາລີອັນສ ປະກັນໄພ ລາວ | - | 1.624 |
| ທະນາຄານ ການາດາ ລາວ ຈຳກັດ | 6 | 4 |
| ສຳນັກງານກອງທຶນປະກັນໄພສັງຄົມແຫ່ງຊາດ | 6.449 | 3.000 |
| ໂພເດັນຊ່ຽວ ປະກັນໄພຊີວິດຈຳກັດ | 11 | 9 |
| ບໍລິສັດ ທິບພະຍະ ປະກັນໄພ | 139 | 333 |
| ບໍລິສັດ ລ້ານຊ້າງ ປະກັນໄພ | 16 | 324 |
| ບໍລິສັດ ກຸງສີ ບໍລິການເຊົ່າສິນເຊື່ອ ຈຳກັດ | 289 | 16.925 |
| ບໍລິສັດ ໂຄລາວດີເວີລົບປິງ ຈຳກັດ | 525 | 546 |
| ບໍລິສັດ ລ້ານຊ້າງເຊົ່າສິນເຊື່ອ ຈຳກັດ | 3.643 | 748 |
| ບໍລິສັດ ເຄແອວດີ ຄອມພິວເຕີອີເລັກໂຕນິກຟາ ຈຳກັດ | - | 260 |
| ຮ້ານ ແລກປ່ຽນເງິນຕາ ຄຳພັດ | - | 26 |
| ບໍລິສັດ ເຄບີ ໂຄລາວເຊົ່າສິນເຊື່ອ ຈຳກັດ | 112 | 29 |
| ບໍລິສັດ ປະກັນໄພ ລາວ-ຫວຽດ | 23 | 110 |
| ຮ້ານ ແລກປ່ຽນເງິນຕາ ວັນພອນ | - | 9 |
| ບໍລິສັດ ທະນະຊັບ ລິດຊິງແອນໄຟແນນ ຈຳກັດ | 1 | 2 |
| ບໍລິສັດ ດີຈີບີ ລາວ ເຊົ່າສິນເຊື່ອ ຈຳກັດ | 3.884 | 6.225 |
| ບໍລິສັດ ແສງອາຣີ ໄມໂຄຣ ເຊົ່າສິນເຊື່ອ ຈຳກັດ | - | 3 |
| ບໍລິສັດ ລາວໂມບາຍມັນນີ ຈຳກັດ | 1.536 | 715 |
| ບໍລິສັດ ຫຼັກຊັບ ທຄຕລ-ກທ ຈຳກັດ | 20.725 | - |
| ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ | 20.000 | - |
| ບໍລິສັດ ກ໋ອກ ກ໋ອກ ໂຊລູຊັ່ນ ຈຳກັດ | 5 | - |
| ບໍລິສັດ ໂຊກໄຊ ປະກັນໄພ | 79 | - |
| | **177.703** | **52.492** |

ເງິນຝາກມີກຳນົດຈາກ ທະນາຄານອື່ນແມ່ນ ມີກຳນົດແຕ່ 3 ຫາ 36 ເດືອນ (2021: 6 ຫາ 48 ເດືອນ) ແລະ ມີອັດຕາດອກເບ້ຍ 4,50% ຫາ 7,25%ຕໍ່ປີ ສຳລັບເງິນກີບ (2021: 6,80% ) ແລະ 2,85% ຫາ 4,30% ຕໍ່ປີ ສຳລັບເງິນໂດລາ (2021: 3,35% ຫາ 5,50%).

## 20. ເງິນຝາກຈາກລູກຄ້າ

31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| **ເງິນຝາກກະແສລາຍວັນ** | **118.609** | **66.626** |
| ເງິນຝາກກະແສລາຍວັນ ເປັນສະກຸນເງິນກີບ | 31.368 | 18.943 |
| ເງິນຝາກກະແສລາຍວັນ ເປັນສະກຸນເງິນຕາຕ່າງປະເທດ | 87.241 | 47.683 |
| | | |
| **ເງິນຝາກປະຢັດ** | **695.851** | **536.561** |
| ເງິນຝາກປະຢັດ ເປັນສະກຸນເງິນກີບ | 149.909 | 127.256 |
| ເງິນຝາກປະຢັດ ເປັນສະກຸນເງິນຕາຕ່າງປະເທດ | 545.942 | 409.305 |
| | | |
| **ເງິນຝາກມີກຳນົດ** | **10.782.220** | **6.586.457** |
| ເງິນຝາກມີກຳນົດ ເປັນສະກຸນເງິນກີບ | 1.302.460 | 1.372.912 |
| ເງິນຝາກມີກຳນົດ ເປັນສະກຸນເງິນຕາຕ່າງປະເທດ | 9.479.760 | 5.213.545 |
| | | |
| **ໜີ້ຕ້ອງສົ່ງອື່ນໆໃຫ້ກັບລູກຄ້າ** | **468.919** | **232.533** |
| | **12.065.599** | **7.422.177** |

**ແຍກຕາມອັດຕາດອກເບ້ຍ (ຕໍ່ປີ)**

31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| ເງິນຝາກກະແສລາຍວັນ ເປັນສະກຸນເງິນກີບ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກກະແສລາຍວັນ ເປັນສະກຸນເງິນຕາຕ່າງປະເທດ | ບໍ່ມີດອກເບ້ຍ | ບໍ່ມີດອກເບ້ຍ |
| ເງິນຝາກປະຢັດ ເປັນສະກຸນເງິນກີບ | 1,25%-5,00% | 1,89%-4,00% |
| ເງິນຝາກປະຢັດ ເປັນສະກຸນເງິນໂດລາ | 1,25%-4,00% | 1,25%-4,25% |
| ເງິນຝາກປະຢັດ ເປັນສະກຸນເງິນບາດ | 1,75%-4,00% | 1,25%-2,00% |
| ເງິນຝາກມີກຳນົດ ເປັນສະກຸນເງິນກີບ | 3,50%-10,00% | 3,45%-7,50% |
| ເງິນຝາກມີກຳນົດ ເປັນສະກຸນເງິນໂດລາ | 2,00%-8,55% | 2,95%-7,00% |
| ເງິນຝາກມີກຳນົດ ເປັນສະກຸນເງິນບາດ | 2,00%-8,50% | 2,35%-5,00% |

## 21. ອາກອນ

### 21.1 ໜີ້ຕ້ອງສົ່ງອາກອນກຳໄລ

31 ທັນວາ (ລ້ານກີບ)

| | 2022 | 2021(ປັບປຸງໃໝ່) |
|---|---|---|
| ໜີ້ຕ້ອງສົ່ງອາກອນເງິນເດືອນ | **25** | **1.254** |

### 21.2 ອາກອນກຳໄລ

ລາຍລະອຽດຂອງອາກອນກຳໄລ ສຳລັບປີ 2022 ແລະ ປີ 2021 ມີດັ່ງນີ້:

**ອາກອນກຳໄລທີ່ຖືກຮັບຮູ້ໃນໃບລາຍຮັບສັງລວມ**

31 ທັນວາ (ລ້ານກີບ)

| | 2022 | 2021(ປັບປຸງໃໝ່) |
|---|---|---|
| ລາຍຈ່າຍອາກອນພາຍໃນປີ | - | - |

*ການກະທົບຍອດເພື່ອຫາອັດຕາອາກອນກຳໄລທີ່ແທ້ຈິງ* ລ້ານກີບ

| | 2022 ອັດຕາ (%) | ລ້ານກີບ | 2022 (ປັບປຸງໃໝ່) ອັດຕາ (%) | ລ້ານກີບ |
|---|---|---|---|---|
| (ຂາດທຶນ)/ກຳໄລກ່ອນອາກອນ | | (75.122) | | 190.677 |
| ປັບແກ້ສຳລັບລາຍຮັບທີ່ບໍ່ຕ້ອງເສຍພາສີທີ່ມີສາລະສຳຄັນ: | | | | |
| - ສ່ວນແບ່ງກຳໄລຈາກບໍລິສັດຮ່ວມ | | (5.428) | | (1.815) |
| - ກຳໄລຈາກການລົງທຶນໃນຕາສານທຶນທີ່ກຳນົດໂດຍ FVTPL | | (39.339) | | (217.624) |
| **ຂາດທຶນທາງພາສີ** | | **(119.889)** | | **(28.762)** |
| **ອັດຕາອາກອນກຳໄລທີ່ນຳໃຊ້ຂອງບໍລິສັດ** | 20 | - | 20 | - |

ການແຈ້ງເສຍອາກອນຂອງທະນາຄານ ຕ້ອງໄດ້ຮັບການກວດກາຄືນໂດຍເຈົ້າໜ້າທີ່ສ່ວຍສາອາກອນຢ່າງເປັນປະຈຳ. ເນື່ອງຈາກການນຳໃຊ້ກົດໝາຍວ່າດ້ວຍອາກອນລາຍໄດ້ ແລະ ລະບຽບການຕ່າງໆ ແມ່ນມີຫຼາຍປະເພດເຊິ່ງອາດຈະແປຄວາມໝາຍໄດ້ຫຼາຍຢ່າງ. ຈຳນວນທີ່ໄດ້ຖືກລາຍງານຢູ່ໃນເອກະສານລາຍງານການເງິນອາດຈະມີການປ່ຽນແປງ ຂຶ້ນກັບການໄລ່ລຽງຂອງເຈົ້າໜ້າທີ່ສ່ວຍສາອາກອນ.
ທະນາຄານຈະຄິດໄລ່ອາກອນລາຍໄດ້ກ່ຽວກັບຜົນກຳໄລ/ (ຂາດທຶນ) ຈາກການລົງທຶນໃນຕາສານທຶນໃນຊ່ວງເວລາການຈຳໜ່າຍຕົວຈິງ.

## 22. ໜີ້ສິນອື່ນໆ

31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| ໜີ້ຕ້ອງສົ່ງພາຍນອກ | 21.524 | 13.558 |
| ໜີ້ຕ້ອງສົ່ງພາຍໃນ | 7.630 | 122 |
| ການປ່ຽນແປງຂອງເງິນຕາຕ່າງປະເທດ | 36.499 | 27.213 |
| ດອກເບ້ຍສົງໄສ | 15.177 | 8.282 |
| ໜີ້ຕ້ອງສົ່ງໃຫ້ພະນັກງານ | 701 | 946 |
| ໜີ້ຕ້ອງສົ່ງອື່ນໆ | 20.254 | 13.899 |
| | **101.785** | **64.020** |

## 23. ທຶນຈົດທະບຽນຖອກແລ້ວ

ອີງກົດໝາຍວ່າດ້ວຍທະນາຄານທຸລະກິດ ມາດຕາ 12 (ສະບັບປັບປຸງ), ສະບັບເລກທີ 56/ສພຊ, ລົງວັນທີ 7 ທັນວາ 2018. ທະນາຄານທຸລະກິດຖືກຮຽກຮ້ອງໃຫ້ມີທຶນຈົດທະບຽນຂັ້ນຕ່ຳແມ່ນ 500 ຕື້ກີບ ແລະ ບັນດາທະນາຄານຕ້ອງໄດ້ເພີ່ມທຶນບໍ່ໃຫ້ຕ່ຳກວ່າ 20% ໃນແຕ່ລະປີຈົນຄົບພາຍໃນ 5 ປີ ເລີ່ມປະຕິບັດແຕ່ເດືອນ ກັນຍາ 2019 ເປັນຕົ້ນໄປ.

ທະນາຄານບໍ່ໄດ້ມີການເພີ່ມທຶນໃນລະຫວ່າງປີງົບປະມານ 2019-2020 ເຊິ່ງໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ, ທະນາຄານໄດ້ຮັບການຂະຫຍາຍໄລຍະເວລາຈາກ ທະນາຄານແຫ່ງ ສປປ ລາວ ໃນການຈັດຕັ້ງປະຕິບັດຕາມ ກົດໝາຍ ວ່າດ້ວຍ ທະນາຄານທຸລະກິດ ຜ່ານໜັງສືແຈ້ງການ ສະບັບເລກທີ 53/ກຄທ, ລົງວັນທີ 27 ມັງກອນ 2020 ແລະ ສະບັບເລກທີ 17/ກຄທ, ລົງວັນທີ 7 ມັງກອນ 2021 ເພື່ອຂະຫຍາຍການເພີ່ມທຶນຈົດທະບຽນ ພາຍໃນປີ 2021.

ສຳລັບປີ 2021, ທະນາຄານໄດ້ຮັບການອະນຸມັດຈາກທະນາຄານແຫ່ງສປປລາວຜ່ານໜັງສືແຈ້ງການ. ສະບັບເລກທີ 705/ກຄທ, ລົງວັນທີ 13 ທັນວາ 2021 ທີ່ລະບຸໃຫ້ເພີ່ມທຶນຈຳນວນ 71.748 ລ້ານກີບ ໂດຍໂອນຈາກກຳໄລສະສົມຈຳນວນ 44.034 ລ້ານກີບ ແລະ ໂອນຈາກສ່ວນຜູ້ຖືຫຸ້ນຈຳນວນ 27.714 ລ້ານກີບ.

ສຳລັບປີ 2022, ທະນາຄານໄດ້ຮັບການອະນຸມັດຈາກທະນາຄານແຫ່ງ ສປປ ລາວ ຜ່ານຈົດໝາຍສະບັບເລກທີ 790/ກທຄ ລົງວັນທີ 31 ຕຸລາ 2022 ວ່າດ້ວຍການເພີ່ມທຶນຈາກຜູ້ຖືຫຸ້ນຈຳນວນ 24.000 ລ້ານກີບ.

ຮອດວັນທີ 31 ທັນວາ 2022 ທຶນຈົດທະບຽນຖອກແລ້ວຂອງທະນາຄານ ແມ່ນມີຈຳນວນທັງໝົດ 477.000ລ້ານກີບ (ປີ 2021: ຈຳນວນ 453.000ລ້ານກີບ). ທະນາຄານຈຳເປັນຕ້ອງໄດ້ລະດົມທຶນຕື່ມອີກ 23 ຕື້ກີບ ເພື່ອຕື່ມໃສ່ຍອດຈຳນວນທຶນໃນປະຈຸບັນ ພາຍໃນເດືອນກັນຍາ 2024 ເພື່ອໃຫ້ໄດ້ຈຳນວນທຶນຕ່ຳສຸດທີ່ຕ້ອງການທີ່ 500 ຕື້ກີບ.

## 24. ການຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນ

31 ທັນວາ (ລ້ານກີບ)

| | 2022 |
|---|---|
| ກຳໄລສຸດທິສຳລັບປີສິ້ນສຸດວັນທີ 31 ທັນວາ 2021 | 12.330 |
| ລົບ: ເງິນຝາກແຮບັງຄັບໄວ້ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2021 ກ່ອນປັບປຸງ | (1.233) |
| ລົບ: ເງິນແຮສຳລັບພາສີ | (616) |
| ລົບ: ເງິນສຳຮອງເພື່ອການຂະຫຍາຍທຸລະກິດໃນປີ 2022 | (26) |
| **ຈຳນວນເງິນທີ່ມີຢູ່ສຳລັບຜູ້ຖືຮຸ້ນ** | **10.455** |
| - ໃນນັ້ນ: | |
| ການຈ່າຍເງິນປັນຜົນໃຫ້ແກ່ຜູ້ຖືຮຸ້ນ | 8.050 |
| ເງິນສຳຮອງອື່ນໆ | 2.405 |

## 25. ເງິນສົດ ແລະ ທຽບເທົ່າເງິນສົດ

31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| ເງິນສົດໃນຄັງ | 205.154 | 98.110 |
| ເງິນຝາກກະແສລາຍວັນຢູ່ກັບ ທຫລ | 1.581.428 | 1.181.935 |
| ເງິນຝາກກະແສລາຍວັນຢູ່ກັບທະນາຄານອື່ນ | 268.641 | 215.206 |
| | **2.055.223** | **1.495.251** |

## 26. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບຜູ້ບໍລິຫານຫຼັກຂອງທະນາຄານ
ຜົນຕອບແທນໃຫ້ສະມາຊິກຂອງຄະນະອຳນວຍການ ແລະ ສະພາບໍລິຫານມີດັ່ງນີ້:

31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| ເງິນເດືອນ | 27.664 | 21.367 |
| ໂບນັດ ແລະ ຜົນປະໂຫຍດອື່ນໆ | 1.472 | 1.727 |
| | **29.136** | **23.094** |

## 27. ພັນທະຕໍ່ກັບຄ່າເຊົ່າໃນການດຳເນີນງານ

31 ທັນວາ (ລ້ານກີບ)

| | 2022 | 2021 |
|---|---|---|
| ພາຍໃນ 1 ປີ | 9.587 | 12.819 |
| - ໃນນັ້ນ: ສັນຍາການລົງທຶນຮ່ວມທຸລະກິດ (*) | 2.000 | - |
| 1 ຫາ 5 ປີ | 46.739 | 16.437 |
| | **56.326** | **29.256** |

(*) ໃນວັນທີ 12 ເມສາ 2022, ທະນາຄານໄດ້ລົງນາມຮ່ວມກັບ ບໍລິສັດ ລ້ານຊ້າງ ໂຮນດິງ ໂຊລ ຈຳກັດ ເພື່ອສ້າງຕັ້ງບໍລິສັດ ກ໋ອກ ກ໋ອກ ໂຊລູຊັນ ຈຳກັດ ເຊິ່ງເປັນບໍລິສັດທີ່ດຳເນີນທຸລະກິດໃນ ສປປ ລາວ. ໂດຍການເຂົ້າຮ່ວມສັນຍາຮ່ວມທຶນ, ທະນາຄານໄດ້ໃຫ້ຄຳໝັ້ນສັນຍາຈະປະກອບສ່ວນ 2 ຕື້ກີບ ເປັນທຶນຊຳລະແລ້ວໃຫ້ບໍລິສັດຮ່ວມທຶນ.

## 28. ເຫດການທີ່ເກີດຂຶ້ນພາຍຫຼັງວັນທີໃນໃບສະຫຼຸບຊັບສົມບັດ

ໃນວັນທີ 20 ມັງກອນ 2023, ທະນາຄານໄດ້ລົງທຶນ 2 ຕື້ກີບ ໃນຮູບແບບການຮ່ວມທຸລະກິດກັບ ລ້ານຊ້າງ ໂຮນດິງ ໂຊລ ຈຳກັດ ເພື່ອເຂົ້າຖືຫຸ້ນ 20% ໃນບໍລິສັດ ກ໋ອກກ໋ອກ ໂຊລູຊັນ ຈຳກັດ, ເຊິ່ງເປັນບໍລິສັດທີ່ດຳເນີນທຸລະກິດໃນ ສປປ ລາວ. ທຸລະກິດຫຼັກຂອງບໍລິສັດແມ່ນ ໃຫ້ບໍລິການເຕັກໂນໂລຊີທາງການເງິນຕ່າງໆໃນ ສປປ ລາວ.

ໃນວັນທີ 28 ມີນາ 2023, ທະນາຄານ KB Daehan Specialized ໄດ້ປະກາດຈ່າຍເງິນປັນຜົນ 1,5 ລ້ານໂດລາສະຫະລັດໃຫ້ແກ່ຜູ້ຖືຮຸ້ນໂດຍອີງຕາມການດຳເນີນງານ ໃນປີງົບປະມານ 2022. ຕາມວັນທີລາຍງານຂອງຜູ້ກວດສອບ,ການຈ່າຍເງິນປັນຜົນແມ່ນຢູ່ໃນຂັ້ນຕອນການໄດ້ຮັບການອະນຸມັດຈາກ ທະນາຄານແຫ່ງຊາດກຳປູເຈຍ. ທະນາຄານຄາດວ່າຈະໄດ້ຮັບເງິນປັນຜົນຈຳນວນ 64.350 ໂດລາສະຫະລັດ (ເທົ່າກັບ 1.145 ລ້ານກີບໃນວັນທີ 31 ທັນວາ 2022) ເມື່ອຂະບວນການໄດ້ຮັບການອະນຸມັດ.

ໃນວັນທີ 3 ເມສາ 2023, LVMC Holdings ໄດ້ເພີ່ມທຶນຈຳນວນ 5.875.000 ໂດລາສະຫະລັດ (ຈາກ 24.863.824 ໂດລາສະຫະລັດ ເປັນ 30.738.824 ໂດລາສະຫະລັດ) ໂດຍການອອກຫຸ້ນສາມັນໃໝ່ຈຳນວນ 23.500.000 ຫຸ້ນ ໃຫ້ແກ່ຜູ້ຖືຫຸ້ນເດີມ. ເນື່ອງຈາກທະນາຄານບໍ່ໄດ້ຈອງຊື້ຫຸ້ນທີ່ອອກໃໝ່ ຈຶ່ງເຮັດໃຫ້ອັດຕາສ່ວນການຖືຫຸ້ນຂອງທະນາຄານຫຼຸດລົງຈາກ 15,19% ເປັນ 12,33%. ໃນວັນທີ 5 ເມສາ 2023, LVMC Holdings ໄດ້ເພີ່ມທຶນຂອງຕົນຈຳນວນ 12.158.279 ໂດລາສະຫະລັດ (ຈາກ 30.738.824 ເປັນ 42.897.103 ໂດລາສະຫະລັດ) ໂດຍການອອກຫຸ້ນໂບນັດຈຳນວນ 48.633.114 ຫຸ້ນ ແລະ ຈັດສັນຫຸ້ນເຫຼົ່ານັ້ນໃຫ້ກັບຜູ້ຖືຫຸ້ນເດີມ ເປັນຜົນເຮັດໃຫ້ຈຳນວນຫຸ້ນ LVMC ທີ່ທະນາຄານໄດ້ຢູ່ເພີ່ມຂຶ້ນ 6.042.683 ຫຸ້ນ, ຈາກ 15.106.708 ຫຸ້ນມາເປັນ 21.149.391 ຫຸ້ນ, ໃນຂະນະທີ່ອັດຕາສ່ວນການຖືຫຸ້ນຍັງບໍ່ປ່ຽນແປງຢູ່ທີ່ 12,33% ໃນມື້ດຽວກັນ. ນອກເໜືອຈາກຂໍ້ມູນທີ່ໄດ້ເປີດເຜີຍໃນເອກະສານລາຍງານການເງິນ, ໃນມື້ທີ່ເອກະສານລາຍງານການເງິນໄດ້ຖືກສ້າງຂຶ້ນ ບໍ່ໄດ້ມີເຫດການໃດທີ່ສຳຄັນເກີດຂຶ້ນຫຼັງຈາກວັນທີ 31 ທັນວາ 2022 ທີ່ສົ່ງຜົນກະທົບອັນໃຫຍ່ຫຼວງຕໍ່ຖານະທາງການເງິນຂອງທະນາຄານ ໃນວັນທີ 31 ທັນວາ 2022.

# ພາກທີ 4 ບັນດາເຄືອຂ່າຍສາຂາຂອງທະນາຄານ

## *4.1. ແຜນທີ່ຈຸດທີ່ຕັ້ງຂອງບັນດາເຄືອຂ່າຍສາຂາໃນປະເທດ*




## *4.2. ສະຖານທີ່ຕັ້ງຂອງບັນດາເຄືອຂ່າຍສາຂາ*

1. ນະຄອນຫຼວງວຽງຈັນ



**ສໍານັກງານໃຫຍ່**
ທີ່ຢູ່: ຊັ້ນ 1-3 ອາຄານ ໂຄລາວທາວເວີ I
ຖະໜົນ 23 ສິງຫາ, ບ້ານ ໜອງບອນ,
ເມືອງ ໄຊເສດຖາ ຕູ້ໄປສະນີ: 6029
ໂທ: (+856-21) 455 000
ແຟັກ: (+856-21) 455 111



**ໜ່ວຍບໍລິການ ໂອໂຕຊິຕີ**
ທີ່ຢູ່: ຖະໜົນອາຊຽນ, ບ້ານ ນາຄໍາ, ເມືອງ ສີໂຄດຕະບອງ
ໂທ: (+856 21) 455 000-209
ແຟັກ: (+856-21) 520 705



**ໜ່ວຍບໍລິການ ໄຊມຸງຄຸນ**
ທີ່ຢູ່: ຖະໜົນເລກທີ 13 ເໜືອ, ບ້ານ ໄຊມຸງຄຸນ,
ເມືອງ ນາຊາຍທອງ
ໂທ. (+856-21) 612 471-2
ແຟັກ: (+856-21) 612 473



**ໜ່ວຍບໍລິການ ຕະຫລາດລາວ**
ທີ່ຢູ່: ຖະໜົນ 450ປີ, ບ້ານ ສະພັງເມິກ,
ເມືອງໄຊທານີ
ໂທ. (+856 21) 455 000-298-9

## 4.3 ສະຖານທີ່ຕັ້ງຂອງບັນດາເຄືອຂ່າຍສາຂາ



**ແຂວງຈຳປາສັກ**
**ສາຂາປາກເຊ**
ທີ່ຢູ່: ບ້ານ ໂພນກຸງ, ເມືອງ ປາກເຊ
ໂທ: (+856-31) 260 300-4 ແຟັກ: (+856-31) 260 305



**ແຂວງສະຫວັນນະເຂດ**
**ສາຂາ ສະຫວັນນະເຂດ**
ທີ່ຢູ່: ບ້ານ ຫົວເມືອງໃຕ້, ເມືອງ ໄກສອນພົມວິຫານ
ໂທ: (+856 41) 250 000-4 ແຟັກ: (+856 41) 250 0005




**ແຂວງຫຼວງນ້ຳທາ**
**ໜ່ວຍບໍລິການ ຫຼວງນ້ຳທາ**
ທີ່ຢູ່: ບ້ານ ໂພນໄຊ, ເມືອງ ຫຼວງນ້ຳທາ
ໂທ: (+856-86) 212 256-7 ແຟັກ: (+856-86) 212 258




**ແຂວງຊຽງຂວາງ**
**ໜ່ວຍບໍລິການ ຊຽງຂວາງ**
ທີ່ຢູ່: ຖະໜົນໄຊຊະນະ, ບ້ານ ເທີນ, ເມືອງ ແປກ
ໂທ: (+856 61) 313 000-1 ແຟັກ: (+856 61) 313 002




**ແຂວງຄຳມ່ວນ**
**ໜ່ວຍບໍລິການ ທ່າແຂກ**
ທີ່ຢູ່: ຖະໜົນວຽງຈັນ, ບ້ານ ນາບົງ, ເມືອງ ທ່າແຂກ
ໂທ: (+856-51) 215 030-1




**ແຂວງບໍລິຄຳໄຊ**
**ໜ່ວຍບໍລິການ ປາກຊັນ**
ທີ່ຢູ່: ຖະໜົນ 13 ໃຕ້, ບ້ານ ສີວິໄລ, ເມືອງ ປາກຊັນ
ໂທ: (+856-54) 212 401-2



**ແຂວງຫຼວງພະບາງ**
**ໜ່ວຍບໍລິການ ຫຼວງພະບາງ**
ທີ່ຢູ່: ຖະໜົນພູວາວ, ບ້ານ ໂປ່ງຄຳ, ເມືອງ ຫຼວງພະບາງ
ທີ່ຢູ່: (+856 71) 215 000-1 ແຟັກ: (+856 71) 215 002




**ແຂວງອຸດົມໄຊ**
**ໜ່ວຍບໍລິການ ອຸດົມໄຊ**
ທີ່ຢູ່: ຖະໜົນເລກທີ 13 ເໜືອ, ບ້ານ ນາລາວ, ເມືອງ ໄຊ
ໂທ: (+856-81) 260 023-5 ແຟັກ: (+856-81) 260 026

# ພາກທີ 5 ກິດຈະກຳ ແລະ ງານຕ່າງໆ

## ເປີດໃຫ້ບໍລິການ ໜ່ວຍບໍລິການຕະຫລາດລາວ










## ງານລ້ຽງຂອບໃຈລູກຄ້າຊັ້ນໜຶ່ງ






















## ພິທີເຊັນສັນຍາ ລະວ່າງ KOK KOK SOLUTIONS CO., LTD, LANEXANG HOLDING SOLE CO., LTD & INDOCHINA BANK LTD.




## ບຸນນະມັດສະການ ພະທາດຫລວງວຽງຈັນ



## ກິດຈະກຳ ກວດສຸຂະພາບປະຈຳປີ



## ກິດຈະກຳ ບໍລິຈາກເລືອດ



## ກິດຈະກຳ ຂັບຂີ່ປອດໄພ ກັບນ້ອງຄູນ



## ວັນນັດພົບແຮງງານ ຄສບ ຄັ້ງທີ 9



## ໂຄງການສົມມະນາຄຸນລູກຄ້າ ທີ່ສະສົມຄະແນນແລກຂອງລາງວັນ ໃນແອັບ IB COOL



## ກິດຈະກຳ ບຸນປີໃໝ່ລາວ



## ກິດຈະກຳ ບຸນປີໃໝ່ ຊາວຈີນ-ຫວຽດນາມ



# ກວດ ໂອນ ຈ່າຍ

## ຄົບຈົບໃນແອັບດຽວ

CHECK, PAY, TRANSFER, ALL IN IB COOL




ດາວໂຫຼດໄດ້ທີ່ / Download

IB Cool

ANDROID APP ON Google play

Download on the App Store

EXPLORE IT ON AppGallery



ຊັ້ນ 1-3 ອາຄານ ໂຄລາວ ທາວເອີ I, ຖະໜົນ 23 ສິງຫາ, ຕູ້ ປ.ນ 6029, ນະຄອນຫຼວງວຽງຈັນ, ສປປ ລາວ.  ໂທ: (856-21) 455 000